**<u>ຄະນະຜູ້ຈັດທຳ ບົດຮຽນພຣະຄັມພີ ພາສາລາວ</u>**

**Copyright © 2014 by BAPTISTWAY PRESS®.**

**ສງວນລິກຂະສິດ**

ອະນຸຍາດໃຫ້ຄຣິສຕະຈັກເຮັດກ๊ອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas,
333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ໄດ້ຄັດມາຈາກປຶ້ມພຣະຄັມພີທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິກຂະສິດຂອງປຶ້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ 2004

BAPTISTWAY Management Team

Executive Director, Baptist General Convention of Texas: David Hardage
Director, Church Ministry Resources: Chris Liebrum
Director, Bible Study/Discipleship: Phil Miller

Publisher, BAPTISTWAY PRESS®: Scott Stevens

Language Materials Team

Bible Study Writer for Lessons 1, 2, 3
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lessons 1, 2, 3
Phaisane Somsith, Homprakhoon Baptist Church, Dallas, Texas

Bible Study Writer for Lessons 4, 5, 6
Bounchanh Vongsurith, Lao Congregation of First Baptist Church, Amarillo, TX
Editor for Lessons 4, 5, 6
Phaisane Somsith, Homprakhoon Baptist Church, Dallas, Texas

Bible Study Writer for Lessons 7, 8, 9
Sidney Kahn, Saginaw Community Church, Fort Worth, Texas
Editor for Lessons 7, 8, 9
Phaisane Somsith, Homprakhoon Baptist Church, Dallas, Texas

Bible Study Writer for Lessons 10, 11, 12, 13
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons 10, 11, 12, 13
Phaisane Somsith, Homprakhoon Baptist Church, Dallas, Texas

Facilitator for the LAOTIAN TEAM: Joe Haag

Patty Lane, Director, Office of Intercultural Initiatives, Baptist General Convention of Texas

# ບົດຮຽນທີ 1

## ນິມິດໝາຍຂອງພຣະເຢຊູຄຣິດ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້**: ພຣະນິມິດ ບົດທີ 1

**ພູມຫລັງຂອງພຣະຄັມພີ**: ພຣະນິມິດ ບົດທີ 1

**ຈຸດສຳຄັນສຳລັບບົດຮຽນນີ້**: ແມ່ນຫຍັງຈະໄປຈະມາກໍຕາມ, ພຣະເຢຊູເປັນຜູ້ຄວບຄຸມທັງໝົດໃນໂລກນີ້

**ຄຳຖາມເພື່ອການຄົ້ນຄວ້າ**: ທ່ານຍັງຈະຢ້ານກົວສິ່ງໃດໃນອະນາຄົດ?

**ຈຸດປະສົງຂອງບົດຮຽນນີ້**: ເພື່ອຈະບອກໃຫ້ພວກເຮົາຮູ້ຄວາມໝາຍຂອງໂຢຮັນທີ່ເພິ່ນໄດ້ມີນິມິດໝາຍ ແລະເພື່ອຢັ້ງຢືນວ່າພຣະເຢຊູຊົງຄວບຄຸມທຸກສິ່ງທຸກຢ່າງໃນໂລກນີ້ ແລະໃນອະນາຄົດຂ້າງໜ້າ.

### ຄຳນຳ

ຄຣິສຕຽນຫລາຍຄົນ ຍັງມີຄວາມລັ່ງເລໃຈໃນການສຶກສາພຣະຄັມພີພຣະນິມິດອີງໃສ່ຄວາມສັບສົນໃນພຣະຄັມພີ ແລະກໍຢ້ານກົວຕໍ່ການປາກົດການທີ່ໂຢຮັນໄດ້ບັນທຶກໄວ້, ຫລືບໍ່ ກໍແມ່ນຢ້ານກົວທີ່ຈະອະທິບາຍ. ຄຣິສຕຽນບາງຄົນກໍປະລະໄປແບບບໍ່ສົນໃຈ. ແຕ່ໂຢຮັນໄດ້ຂຽນປຶ້ມນີ້ຂຶ້ນກໍເພື່ອຢາກໃຫ້ຄຣິສຕຽນມີຄວາມເຂັ້ມແຂງຂຶ້ນ ແລະເພື່ອໜູນໃຈຜູ້ທີ່ເຊື່ອທັງຫລາຍໄດ້ດຳເນີນຊີວິດໃຫ້ຖືກກາລະເທສະ ບໍ່ແມ່ນເພື່ອເຮັດໃຫ້ພວກເຂົາຢ້ານກົວຫລືສັບສົນວຸ້ນວາຍ.

### 1. ຈົດໝາຍເພື່ອໜູນໃຈ: (ພຣະນິມິດ 1:1-2)

ພຣະຄັມພີພຣະນິມິດນີ້ ແມ່ນນິມິດໝາຍສຳຄັນທີ່ພຣະເຢຊູຄຣິດໄດ້ປະທານເຣື່ອງຂອງພຣະອົງເອງໃຫ້ແກ່ຜູ້ຮັບໃຊ້ຂອງພຣະອົງ. ນີ້ກໍຄືຈົດໝາຍແຫ່ງການດົນໃຈ, ການໜູນໃຈ ເພື່ອຄົນຂອງພຣະອົງຈະໄດ້ດຳເນີນຊີວິດໄດ້ສະບາຍຂຶ້ນຖ້າມກາງໂລກທີ່ສັບສົນວຸ້ນວາຍ. ພຣະອົງໄດ້ກຳກຸນແຈແຫ່ງຄວາມຕາຍ ແລະດິນແດນແຫ່ງຄວາມຕາຍ. (ພນມ. 1:18). ສະແດງວ່າ ເຖິງແມ່ນພຣະອົງໄດ້ຕາຍແລ້ວ ແຕ່ພຣະອົງຍັງດຳລົງຊີວິດຢູ່ຕລອດໄປເປັນນິດ. ພຣະອົງມີອຳນາດທີ່ຈະປ່ຽນແປງຊີວິດໄດ້.

ເໝືອນກັບຈົດໝາຍສະບັບອື່ນໆ, ພຣະຄັມພີພຣະນິມິດນີ້: ມີຜູ້ຂຽນ ມີຜູ້ອ່ານ ມີຜູ້ຟັງ ແລະຍັງມີຄຳຕັກເຕືອນອັນດີໆດ້ວຍ. ຜູ້ຂຽນປຶ້ມນີ້ ມີຈຸດປະສົງເພື່ອຢາກໃຫ້ຜູ້ທີ່ມີຄວາມເຊື່ອທັງຫລາຍເຂົ້າໃຈດີແລະຂົ້າໃຈຢ່າງຈະແຈ້ງເຖິງສິ່ງທີ່ຜ່ານມາ, ໃນປັດຈຸບັນ ແລະໃນອະນາຄົດຈະມາເຖິງ. ທ່ານຜູ້ນີ້ມີຊື່ວ່າໂຢຮັນ ເປັນລູກຊາຍຂອງເຊເບດາຍ ແລະເປັນນ້ອງຊາຍຂອງຢາໂກໂບ ແລະຍັງເປັນສາວົກຄົນທຳອິດຂອງພຣະເຢຊູ. ຍ້ອນເພິ່ນມີຄວາມເຊື່ອ ຊີວິດບັ້ນປາຍຂອງເພິ່ນຈຶ່ງຖືກທໍຣະມານຢູ່ທີ່ເກາະປັດໂມ.

ໂຢຮັນເປັນຄົນດຽວທີ່ປາກົດຕົວຕອນພຣະເຢຊູສິ້ນພຣະຊົນ. ອ້າຍຂອງເພິ່ນ(ຢາໂກໂບ)ກໍເປັນຄົນແລກທີ່ຖືກຜູ້ຂົ່ມເຫັງແລະຖືກຂ້າຕາຍດ້ວຍດາບ.(ກຈທ.12:1-2) ເພິ່ນຮູ້ດີໃນການຍາກລຳບາກທຸກຢ່າງ ເພິ່ນຮູ້ວ່າຕ້ອງມີຄວາມອົດທົນຕໍ່ຄວາມຍາກລຳບາກຫລາຍປານໃດໃນພຣະເຢຊູ. ເພິ່ນຖືກຂັງຢູ່ທີ່ເກາະປັດໂມນີ້ກໍເພາະພຣະຄຳແລະຄຳພະຍານຂອງພຣະເຢຊູ.(ພນມ. 1:9). ປື້ມພຣະຄັມພີທຸກເຫລັ້ມແມ່ນໄດ້ຮັບການດົນໃຈຈາກພຣະວິນຍານບໍຣິສຸດ, ແຕ່ພຣະຄັມພີພຣະນິມິດນີ້ແມ່ນແຕກຕ່າງ ເພາະພວກເຮົາໄດ້ເຫັນຖ້ອຍຄຳຂອງພຣະເຢຊູ ເໝືອນກັບວ່າພຣະອົງໄດ້ຊົງບອກກ່າວໄວ້ໂດຍຜ່ານໂຢຮັນ ມາເຖິງຄຣິສຕຽນທຸກຄົນ.

ພຣະຄັມພີພຣະນິມິດ 1:4 ໂຢຮັນໄດ້ບອກກ່າວເຖິງຄຣິສຕະຈັກທັງເຈັດທີ່ຢູ່ໃນແຂວງເອເຊັຽ ຊຶ່ງຄຣິສຕະຈັກທັງຫລາຍເຫລົ່ານີ້ຈະປາກົດຢູ່ໃນບົດທີ 2 ແລະທີ 3.

## 2. <u>ຄຳສອນທີ່ກ່ຽວກັບຄວາມຫວັງທີ່ຈະເກີດມາ</u>: (ພຣະນິມິດ 1:3-6)

ຄຳສອນທີ່ກ່ຽວກັບຄວາມຫວັງທີ່ຈະເກີດມານັ້ນ ແມ່ນຄວາມຫວັງດຽວເທົ່ານັ້ນ, ແທນທີ່ພວກເຮົາຈະມີຄວາມກະວົນກະວາຍ ແລະສົງສັຍໃນສິ່ງທີ່ຈະເກີດມາໃນພາຍຂ້າງໜ້າ. ພວກເຮົາຄວນຈະອ່ານຫລືຟັງດ້ວຍຕົວເຮົາເອງວ່າແມ່ນຫຍັງຈະເກີດຂຶ້ນໃນອະນາຄົດ. ພຣະເຈົ້າຈະເຮັດຢ່າງໃດໃນວັນສຸດທ້າຍ. ເມື່ອພວກເຮົາຫາກໄດ້ຍິນໄດ້ຟັງແລ້ວພວກເຮົາຈະໄດ້ຮັບພຣະພອນ, ເພາະຄຳອວຍພອນຂອງພຣະອົງ (1:3).

ໃນບົດທຳອິດນີ້ ພວກເຮົາຈະໄດ້ເຫັນສອງເຫດຜົນທີ່ຈະເຮັດໃຫ້ພວກເຮົາມີຄວາມປິຕິຍິນດີຫລາຍ. ເຫດຜົນທີ 1: ພວກເຮົາໄດ້ຮັບການໜູນໃຈຈາກພຣະເຢຊູພຣະເຈົ້າຂອງພວກເຮົາ. (1:4,8,18). ພຣະອົງຊົງເປັນຜູ້ຕົ້ນແລະເປັນຜູ້ປາຍ, ພຣະອົງຊົງເປັນຜູ້ທຳອິດທີ່ຄືນມາຈາກຄວາມຕາຍແລະເປັນຜູ້ຊົງຄອບຄອງກະສັດທັງປວງທົ່ວໂລກ.(1:5,18). ເຫດຜົນທີ 2: ພວກເຮົາໄດ້ຮັບກຳລັງໃຈໃນການທີ່ຖືກເອີ້ນເຂົ້າມາເປັນຄຣິສຕຽນ. ພວກເຮົາເປັນຜູ້ທີ່ໄດ້ຮັບພຣະຄຸນແລະພຣະເມດຕາກະຣຸນາຈາກພຣະອົງ (1:4) ພວກເຮົາເປັນຜູ້ທີ່ໄດ້ຮັບຄວາມຮັກແລະການຊຳຣະທຸກຢ່າງດ້ວຍພຣະໂລຫິດຂອງພຣະອົງ (1:5) ພຣະອົງຊົງຕັ້ງໃຫ້ພວກເຮົາເປັນອານາຈັກ, ເປັນປະໂຣຫິດ ແລະໄດ້ຮັບກຽດຈາກພຣະບິດາສືບໆໄປເປັນນິດ.(1:6)

ການຮຽກເອີ້ນເອົາພວກເຮົາບໍ່ແມ່ນຂອງງ່າຍ ທີ່ພວກເຮົາຈະໄດ້ກາຍມາເປັນຄຣິສຕຽນທີ່ມີປະສົບການເຊັ່ນນີ້. ພວກເຮົາຜ່ານບັນຫາ ຜ່ານອຸປສັກ ຜ່ານຄວາມຫຍຸ້ງຍາກມາທຸກຢ່າງແລ້ວ. ການມາເປັນຄຣິສຕຽນພວກເຮົາບໍ່ເຄີຍມີຄຳສັນຍາວ່າຈະບໍ່ມີອຸປສັກ ມີຢ່າງດຽວຄືວ່າຖ້າພວກເຮົາຫາກຍັງຍຶດໝັ້ນອົດທົນ ພວກເຮົາຈະໄດ້ຮັບອັນໃດເປັນບຳເໜັດ. ພຣະນິມິດ ບົດທີ 19-22. ຢ່າງໃດກໍຕາມ ຈົ່ງຮັບຮູ້ໄວ້ວ່າພວກເຮົາຖືກເອີ້ນມາໃຫ້ເປັນຜູ້ຮັບໃຊ້ເພື່ອຕອບສນອງພຣະປະສົງຂອງພຣະເຈົ້າ.

## 3. <u>ການໜູນໃຈໂດຍຜ່ານທາງຮູບພາບ</u>: (ພຣະນິມິດ 1:7-20)

ຮູບພາບແລະປາກົດການທີ່ສະແດງອອກໃນປື້ມນີ້ ບາງທີອາດຈະເຮັດໃຫ້ທ່ານງົງໆຢູ່, ແຕ່ທີ່ຈະເຂົ້າໃຈໄດ້ດີນັ້ນກໍຕ້ອງເບິ່ງຄວາມໝາຍຫລາຍກວ່າ. ໃນຂໍ້ທີ 7 ພວກເຮົາຈະໄດ້ເຫັນຮູບພາບຂອງການສະເດັດມາ

ຂອງພຣະອົງໃນເມກ. ຖ້າຫລັບຕາເບິ່ງແລ້ວຈະເຫັນພາບເໝືອນວີດີໂອ ພຣະອົງສະເດັດອອກຈາກເມກລົງມາຈາກສວັນ. (1:7) ເພື່ອພຣະທັມຂອງພຣະເຈົ້າຈະໄດ້ຄົບຖ້ວນທີ່ໄດ້ມີຄຳທຳນວາຍໄວ້ໃນພຣະທັມດານີເອນ 7:13 ແລະໃນກິຈການ 1:9-11. ພວກເຮົາອາດຈະບໍ່ຄຸ້ນຫູໃນຄຳວ່າ ອາລຟາ ແລະໂອເມກາ. ອາລຟາແມ່ນພະຍັນຊະນະຕົວແລກຂອງພາສາກຣີກ ແລະໂອເມກາແມ່ນຕົວສຸດທ້າຍ, ພຣະອົງຈຶ່ງຊົງກ່າວວ່າເຮົາເປັນຜູ້ຕົ້ນແລະເປັນຜູ້ປາຍ. ບໍ່ມີຜູ້ໃດຈະເປັນຢູ່ກ່ອນພຣະອົງ ແລະຈະບໍ່ມີຜູ້ໃດເປັນຢູ່ຫລັງຈາກພຣະອົງ.

ພຣະນິມິດ 1:12-16. ເໝືອນດັ່ງໄດ້ກ່າວມາແລ້ວວ່າພຣະທັມພຣະນິມິດສ່ວນຫລາຍແລ້ວຈະສະແດງຮູບພາບໃຫ້ເຫັນ. ເມື່ອໂຢຮັນຫລຽວໄປອີກທາງດ້ານນຶ່ງກໍຈຶ່ງເຫັນ ເຄື່ອງຮອງຕີນໂຄມທອງຄຳເຈັດອັນ, ແລະໃນຖ້າມກາງເຄື່ອງຮອງຕີນໂຄມນັ້ນ ມີຜູ້ນຶ່ງເໝືອນບຸດມະນຸດ ຊົງສວມເຄື່ອງສລອງຫຸ້ມພຣະບາດ ແລະຮັດສາຍປະຄົດທອງຄຳທີ່ພຣະອຸຣະ. ພຣະສຽນແລະພຣະເກສາກໍຂາວເໝືອນຢ່າງຂົນແກະ ແລະເໝືອນດັ່ງຫິມມະພຣະເນດຂອງພຣະອົງເໝືອນດັ່ງແປວໄຟ. ພຣະບາດຂອງພຣະອົງເໝືອນດັ່ງທອງສຳຣິດເຫລືອງກັ່ງເໝືອນກັບວ່າໄດ້ຫລອມໃຫ້ບໍຣິສຸດແລ້ວ, ພຣະສຸຣະສຽງຂອງພຣະອົງເໝືອນດັ່ງນ້ຳຕົກຕາດ. ພຣະຫັດກ້ຳຂວາຂອງພຣະອົງຊົງຖືດາວເຈັດດວງ ແລະມີພຣະແສງສອງຄົມທີ່ຄົມທີ່ສຸດອອກມາຈາກພຣະໂອດຂອງພຣະອົງ ແລະພຣະພັກຂອງພຣະອົງເໝືອນດັ່ງດວງອາທິດທີ່ສ່ອງແສງກ້າ.

ຂໍ້ 13. ພຣະເຢຊູເປັນພຣະບຸດຂອງພຣະເຈົ້າ ຊຶ່ງໄດ້ອະທິບາຍເຖິງການຊົງເຄື່ອງ. ໃນສມັຍນັ້ນ ການນຸ່ງຖືໄດ້ສະແດງອອກວ່າເຮົາຢູ່ໃນຖານະໃດ ເປັນເຊື້ອສາຍແລະຄວາມເປັນມາຢ່າງໃດ. ການນຸ່ງຖືທີ່ໂຢຮັນໄດ້ເຫັນນີ້ ແມ່ນການຊົງເຄື່ອງຂອງກະສັດທີ່ພຣະອົງຈະສະເດັດມາໃນວັນສຸດທ້າຍ.

ຂໍ້ 14. ພຣະສຽນແລະພຣະເກສາຂອງພຣະອົງ ມີຄວາມໝາຍວ່າ: ພຣະອົງຈະມີອາຍຸຢ່າງນັ້ນຕລອດໄປ, ຄວາມຮອບຮູ້ຂອງພຣະອົງກໍຈະຄົງຢູ່, ຄວາມດີແລະຄວາມບໍຣິສຸດຈະມີຕລອດໄປ. ພຣະເນດເໝືອນແປວໄຟ ໝາຍຄວາມວ່າພຣະອົງເຫັນທຸກຢ່າງ ຮູ້ທຸກຢ່າງ ແລະຄົບຖ້ວນທຸກຢ່າງ.

ຂໍ້ 15. ພຣະບາດຂອງພຣະອົງປຽບດັ່ງທອງສຳຣິດເຫລືອງກັ່ງ ໝາຍເຖິງກຳລັງເຮື່ອແຮງທີ່ບໍ່ມີສັ່ນສະເທືອນ ເປັນພື້ນຖານທີ່ສາມາດເພິ່ງພາໄດ້ ນັ້ນກໍຄືພລັງອຳນາດຂອງພຣະເຢຊູ.

ຄຳວ່າພຣະສຸຣະສຽງທີ່ໃຊ້ຢູ່ໃນຂໍ້ 12 ແລະ 15 ນັ້ນ ແມ່ນຈຸດສູນກາງຂອງພຣະທັມພຣະນິມິດບົດທີນຶ່ງນີ້. ພຣະເຢຊູແມ່ນພຣະທັມຂອງພຣະເຈົ້າ (ໂຢຮັນ 1:1) ພຣະອົງຊົງສ້າງສັພທຸກສິ່ງ (ໂຢຮັນ 1:1-3; ເຮັບເຣີ 1:1-3 ແລະໂກໂລຊາຍ 1:16-17) ໂຢຮັນໄດ້ຍິນສຽງນັ້ນ ຊຶ່ງເປັນເໝືອນສຽງນ້ຳຕົກຕາດ. ຖ້າທ່ານຫາກມີປະສົບການທີ່ເຄີຍຢືນຢູ່ຂ້າງໆນ້ຳຕົກຕາດ ທ່ານຈະໄດ້ຍິນສຽງທີ່ດັງກຶກກ້ອງຢ່າງອັສຈັນ. ພຣະແສງທີ່ອອກມາຈາກພຣະໂອດນັ້ນໝາຍຄວາມວ່າ ດາບສອງຄົມທີ່ອອກມານັ້ນຈະແທງໄປທົ່ວທຸກບ່ອນ ຈະຕັດທົ່ວທຸກບ່ອນ ບໍ່ມີຜູ້ໃດຈະຫລີກພົ້ນໄດ້.(ເຮັບເຣີ 4:12)

ນິມິດໝາຍບົດທີ 1 ນີ້ ສະແດງເຖິງຮູບພາບຂອງພຣະເຢຊູບາງສ່ວນເທົ່ານັ້ນ. ຮູບພາບທີ່ຈະສະແດງອອກໃນບົດຕໍ່ໆໄປ ຈະໄດ້ສະແດງອອກໃນການເວົ້າ ແລະການເວົ້ານີ້ຈະເປັນການເວົ້າທີ່ແຂງແຮງ ຄວາມຈິງທີ່ຈະປາກົດມາໃນອະນາຄົດ. ພຣະນິມິດ 1:19 ເຫດສັນນີ້ ຈົ່ງຂຽນເຫດການທັງຫລາຍທີ່ເຈົ້າໄດ້ເຫັນ ຄືເຫດທີ່

ເປັນຢູ່ດຽວນີ້ ກັບທັງເຫດການທີ່ຈະເກີດຂຶ້ນໃນພາຍໜ້າເໝືອນກັນ. ຈົ່ງຈຳໄວ້ອີກຢ່າງນຶ່ງວ່າ ໂຢຮັນແລະພຣະເຢຊູໃກ້ຊິດກັນທີ່ສຸດໃນເວລາຢູ່ໃນໂລກນີ້ ປານນັ້ນເພິ່ນຍັງໄດ້ໝູບໜ້າລົງດິນເມື່ອທ່ານໄດ້ພົບກັບພຣະເຢຊູໃນພາບຂອງພຣະວິນຍານແລະຄວາມຈິງ.

**<u>ຄວາມໝາຍແລະພາກປະຕິບັດ</u>**

ພຣະນິມິດເປັນປຶ້ມນຶ່ງທີ່ຫລາຍຄົນເຮັດເປັນລືມໄປ. ແຕ່ກໍຍັງມີຫລາຍຄົນທີ່ອ່ານເພື່ອຈະພະຍາຍາມທຳຄວາມເຂົ້າໃຈ ແຕ່ກໍເປັນການຍາກ. ໃນ 1:3 ໄດ້ໜູນໃຈໃຫ້ພວກເຮົາອ່ານເພື່ອທີ່ຈະໄດ້ຮັບພຣະພອນ ເພາະເວລານັ້ນໃກ້ເຂົ້າມາແລ້ວ. ຖ້າພວກເຮົາເຂົ້າໃຈແລ້ວວ່າອັນໃດຈະເກີດຂຶ້ນໃນອະນາຄົດແລ້ວພວກເຮົາກໍມີຄວາມຫວັງແລະຕຽມຕົວເພື່ອວັນນັ້ນ. ດັ່ງໃນມັດທາຍບົດ 24-25 ໄດ້ເຕືອນຄຣິສຕຽນທັງຫລາຍວ່າອັນໃດຈະເກີດຂຶ້ນກໍຕາມ ພວກເຮົາທຸກຄົນຈະໄດ້ພົ້ນຜ່ານຄວາມມືດມົນແຫ່ງໂລກນີ້ (ຂໍໃຫ້ທຸກຄົນໄປອ່ານຢູ່ບ້ານ)

**<u>ຄຳຖາມ</u>**:

1. ສົມມຸດວ່າທ່ານເປັນໂຢຮັນ, ຫລັງຈາກທີ່ທ່ານໄດ້ເຮັດງານໃຫ້ພຣະເຢຊູແລ້ວທ່ານຖືກຈັບມາກັກຂັງບ່ອນໃດບ່ອນນຶ່ງ. ເມື່ອທ່ານໄດ້ນິມິດຂອງພຣະເຢຊູ ທ່ານຈະມີຄວາມຮັບຜິດຊອບຢ່າງໃດ?

2. ເມື່ອທ່ານອ່ານຫລືສຶກສາພຣະຄັມພີພຣະນິມິດແລ້ວ, ທ່ານຈະມີຄວາມຮູ້ສຶກລະອາຍໃຈຕົວເອງຫລືບໍ່? ເປັນຫຍັງຈຶ່ງຮູ້ສຶກແລະເປັນຫຍັງຈຶ່ງບໍ່ຮູ້ສຶກ?

3. ເປັນຫຍັງໃນພຣະທັມພຣະນິມິດຈຶ່ງມີຄຳເວົ້າແບບພິເສດຢ່າງນີ້?

4. ໂຢຮັນໄດ້ເຫັນນິມິດໝາຍຈາກພຣະເຢຊູ ມີສ່ວນພົວພັນຢ່າງໃດຕໍ່ທ່ານບໍ່?

*ບພ*

# ບົດຮຽນທີ 2

## ຈົດໝາຍຂອງພຣະເຢຊູເຖິງທຸກໆຄຣິສຕະຈັກ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້**: ພຣະນິມິດ 2:1-11; 3:1-6, 14-21

**ພູມຫລັງຂອງພຣະຄັມພີ**: ພຣະນິມິດ ບົດທີ 2 ແລະ ບົດທີ 3

**ຈຸດສຳຄັນສຳລັບບົດຮຽນນີ້**: ພຣະເຢຊູຊົງຕັດສັ່ງແລະຮຽກເອີ້ນໃຫ້ທຸກໆຄຣິສຕະຈັກສຳນຶກຕົວ ແລະໃຫ້ມີຄວາມເຊື່ອຢ່າງແທ້ຈິງ.

**ຄຳຖາມເພື່ອການຄົ້ນຄວ້າ**: ພຣະເຢຊູຄຣິດເຈົ້າມີພຣະປະສົງຫຍັງຈາກຄຣິສຕະຈັກຂອງພວກເຮົາ?

**ຈຸດປະສົງຂອງບົດຮຽນນີ້**: ເພື່ອຈະອະທິບາຍໃຫ້ເຂົ້າໃຈໃນຈົດໝາຍແລະໃນການປະພຶດຕົວໃນຄຣິສຕະຈັກຂອງພວກເຮົາ.

### ຄຳນຳ

ຄຣິສຕະຈັກທັງເຈັດທີ່ໄດ້ກ່າວຜ່ານມານີ້ ແມ່ນຄຣິສຕະຈັກທີ່ມີຕົນມີໂຕຢ່າງແທ້ຈິງ. ຜູ້ນຳຄຣິສຕະຈັກເຫລົ່ານັ້ນກໍຮູ້ຈັກເພິ່ນ ແລະເພິ່ນກໍຮູ້ຈັກພວກເຂົາແຕ່ລະຄົນໄດ້ດີ. ໂດຍທັງໝົດນີ້ ເມື່ອທຸກຄຣິສຕະຈັກຫາການມາແຍງກະຈົກເບິ່ງແລ້ວ ຈະໄດ້ເຫັນຄວາມເປັນມາຕ່າງໆຂອງໂບດ. ເປັນການດີທີ່ສຸດທີ່ພວກເຮົາຈະມາສຶກສາດ້ວຍກັນກ່ຽວກັບການບັນທຶກຂອງໂຢຮັນ ຕອນຕົ້ນແລະຕອນທີ່ຈະມາໃນພາຍພາກໜ້າ ພວກເຮົາຈະໄດ້ປັບຕົວເຮົາເອງ (ຄຣິສຕະຈັກຂອງເຮົາເອງ) ໃຫ້ເໝາະສົມກັບສະພາບການທີ່ເຮົາຈະເດີນໄປ.

ຄຣິສຕະຈັກທັງເຈັດມີຈຸດດີ ແລະມີຈຸດເສັຽດ້ວຍກັນທັງໝົດ. ເປີຄາໂມເປັນໂບດທີ່ສາມາດຢືນຢັດຕໍ່ການຂົ່ມເຫງໄດ້ ແຕ່ຍັງຂາດຄວາມບໍຣິສຸດ, ແລະຍັງອະນຸຍາດໃຫ້ຄຣູສອນປອມເຂົ້າມາສິດສອນໃນຖ້າມກາງພວກເຂົາສເມີ. ສະມາຊິກທຸກຄົນເຂັ້ມແຂງໃນການຖວາຍຕົວ ແຕ່ຜິດພາດໃນການດຳເນີນຊີວິດ.

ທິວເຕຣາ ເປັນໂບດທີ່ມີຄວາມຮັບຜິດຊອບສູງໃນການຂັບເຄື່ອນ ພວກເຂົາມີຄວາມຮັບຜິດຊອບສູງໃນດ້ານຄວາມຮັກ, ຄວາມເຊື່ອ, ການຮັບໃຊ້ ແລະຄວາມອົດທົນ ແຕ່ກໍຍັງເປັນເໝືອນເປີຄາໂມຄືເກົ່າ. ໂບດທິວເຕຣາຍັງຂາດຄວາມບໍຣິສຸດ. ການກະທຳດີບໍ່ໄດ້ລຶບລ້າງຄວາມບໍຣິສຸດໄດ້. ພຣະເຈົ້າຕ້ອງການໃຫ້ທຸກຄົນທຳດີແຕ່ຕ້ອງດີທັງແນວຄິດແລະຈິດໃຈ ສຳລັບຜູ້ທີ່ຕິດຕາມພຣະເຢຊູ. (ພນມ. 2:23)

ໂບດຟີລາແດນເຟັຽເປັນໂບດທີ່ສາມາດຮັບຮອງໄດ້. ພວກເຂົາເຂັ້ມແຂງໃນຄວາມເຊື່ອເຖິງແມ່ນວ່າຈະເປັນການຂົ່ມເຫັງກໍຕາມ. ພຣະເຢຊູກ່າວວ່າບໍ່ມີສິ່ງໃດຈະກ່າວແກ່ໂບດແຫ່ງນີ້ ເພາະດີແລ້ວ ມີແຕ່ພຣະອົງຢາກສົ່ງຄວາມຮັກມາເຖິງພວກເຂົາທຸກໆຄົນ. ເຖິງແມ່ນວ່າພວກເຂົາຈະຖືກການທົດລອງພຣະອົງກໍຈະຊົງຮັກສາເຂົາ ແລະຈະຊ່ວຍພວກເຂົາໃຫ້ໄດ້ຮັບຊັຍຊະນະ.

ຫ້າໃນເຈັດໂບດທີ່ພຣະອົງຊົງເຕືອນພວກເຂົາໃຫ້ສຳນຶກຕົວ (2:5,16,22; 3:3,19) ສ່ວນສອງໂບດພຣະອົງຊົງຮັບປະກັນໄດ້ວ່າພວກເຂົາຕ້ອງໄດ້ຮັບມົງກຸດແຫ່ງໄຊຍະຊະນະ (2:10-11; 3:11-12)

## 1. <u>ຄວາມເຊື່ອທີ່ປະລະຄວາມຮັກດັ້ງເດີມ</u>: (ພຣະນິມິດ 2:1-7)

ເອເຟໂຊເປັນເມືອງທີ່ໃຫຍ່, ມີອຳນາດ, ຮັ່ງມີ ແລະເປັນເມືອງທີ່ມີຊື່ສຽງ. ເມືອງນີ້ເປັນສູນກາງການຄ້າໃຫຍ່ແລະມີທະນາຄານຫລາຍ, ມີຢ້າວເຮືອນທີ່ໃຫຍ່ໂຕ, ພຣະວິຫານໃນກຸງອາແຖນກໍໃຫຍ່. ເອເຟໂຊເປັນສູນກາງທ່າເຮືອແລະເສັ້ນທາງເຊື່ອມໂຍງກັບເມືອງອື່ນໆໄດ້ດີ. ໂປໂລ, ຕີໂມທຽວແລະໂຢຮັນເຄີຍເປັນສິດຍາພິບານທີ່ໂບດຂອງເມືອງນີ້. ແມ່ນວ່າການສິດສອນຈະມີຫລາຍໝວດຫລາຍໝູ່, ຄຳສອນຈະແຕກຕ່າງກັນໄປກໍຕາມ, ໂບດທີ່ເມືອງນີ້ກໍຍັງຍຶດຢູ່ໃນຫລັກຂອງຄວາມເຊື່ອຕລອດມາ, "ພວກເຈົ້າມີຄວາມພຽນ, ມີຄວາມອົດທົນ, ບໍ່ອ່ອນແຮງເພາະເຫັນແກ່ນາມຂອງເຮົາ, ແຕ່ວ່າພວກເຈົ້າໄດ້ປະລະຄວາມຮັກດັ້ງເດີມ." (2:4)

ພວກຫົວໜ້າທີ່ເມືອງນັ້ນ ເຂົາກໍຮູ້ຈັກພຣະຄັມພີດີເໝືອນກັນແລະພວກເຂົາໄດ້ກ່າວວ່າ ພວກຄຣິສຕຽນທັງຫລາຍໄດ້ພາກັນປະລະຄວາມຮັກດັ້ງເດີມ (ພວກເຂົາພາກັນລືມພຣະຄຳຂອງພຣະເຢຊູ ຊຶ່ງກ່າວວ່າ "ຈົ່ງຮັກອົງພຣະຜູ້ເປັນເຈົ້າຂອງເຈົ້າດ້ວຍສຸດຈິດ ສຸດໃຈຂອງເຈົ້າ ແລະດ້ວຍສິ້ນສຸດຄວາມຄຶດຂອງເຈົ້າ ແລະຈົ່ງຮັກເພື່ອນບ້ານເໝືອນຮັກຕົນເອງ." (ມັດທາຍ 22:37,39)

ວິທີທີ່ຈະດຳເນີນຊີວິດຂອງຄຣິສຕຽນມີຫລາຍແບບ, ພວກເຮົາກໍຢາກດຳເນີນໃນວິທີທີ່ຖືກຕ້ອງ. ພວກເຮົາຕ້ອງດຳເນີນດ້ວຍການເຊື່ອຟັງ. ພວກເຮົາຕ້ອງຮັບໃຊ້ຜູ້ອື່ນ ແຕ່ວ່າບໍ່ຕ້ອງລືມຄວາມຮັກດັ້ງເດີມຄືບໍ່ລືມຮັກພຣະເຢຊູ. ໂປໂລໄດ້ກ່າວໄວ້ໃນພຣະທັມ 1ໂກຣິນໂທ 13:1-3 "ແມ່ນວ່າຂ້າພະເຈົ້າຈະເວົ້າເກັ່ງ, ແມ່ນວ່າຂ້າພະເຈົ້າຈະສອນເກັ່ງ, ແມ່ນວ່າຂ້າພະເຈົ້າຈະມີຂອງປະທານທຸກຢ່າງ, ແມ່ນວ່າຂ້າພະເຈົ້າຈະມີຄວາມເຊື່ອຈົນຍົກພູເຂົາຍ້າຍໄດ້ ຖ້າຂ້າພະເຈົ້າຫາກບໍ່ມີຄວາມຮັກ ຂ້າພະເຈົ້າກໍບໍ່ມີຄຸນຄ່າອັນໃດເລີຍ."

ຄວາມຮັກເບື້ອງຕົ້ນຂອງພວກເຮົາແມ່ນພຣະເຢຊູ. ພວກເຮົາບໍ່ຄວນຈະຜິດພາດໃນຄວາມຮັກນີ້ ເພາະເປັນສິ່ງສຳຄັນຫລາຍ. ຊາວເອເຟໂຊມີຄວາມຜິດພາດແລະກໍຕ້ອງສ່ຽງຕໍ່ອັນຕະລາຍ. ພວກເຂົາຈະພາດຈາກເຄື່ອງຮອງຕີນໂຄມທອງຄຳ, ສຳລັບພວກເຮົາເດ ພວກເຮົາຍັງຢາກຈະຂາດຄວາມຮັກດັ້ງເດີມນີ້ຢູ່ບໍ່?

## 2. <u>ຄວາມເຊື່ອທີ່ມີການຂົ່ມເຫັງ</u>: (ພຣະນິມິດ 2:8-11)

ຊະມີນາເປັນເມືອງທີ່ສົດສວຍງົດງາມ, ເມືອງນີ້ຕັ້ງຢູ່ຈ້າຍພູເປີກັສ ແລະສ້າງຂຶ້ນມາເພື່ອຄວາມສົດສວຍງົດງາມໂດຍສະເພາະ. ເມືອງຊະມີນານີ້ມີຈຸດພິເສດຢູ່ສອງຢ່າງຄື: ງົດງາມຫລາຍ ແລະຈົ່ມທຸກຫລາຍ. ໂບດມີປະສົບການໃນການລົບກວນ, ໝິ່ນປມາດ ແລະໃນທີ່ສຸດກໍມາເຖິງການຂົ່ມເຫັງ. ໂຢຮັນໄດ້ເຕືອນໄວ້ໃນຈົດໝາຍຂອງເພິ່ນ (2:8-11). ໂບດແຫ່ງນີ້ອາດຈະເປັນໂບດທຳອິດທີ່ຖືກຂົ່ມເຫັງຫລາຍກວ່າໂບດອື່ນໆ, ເພາະວ່າມີຄົນທີ່ຖືກຂ້າຍ້ອນຄວາມເຊື່ອໃນໂບດນີ້ ແຕ່ວ່າພວກເຂົາເຈົ້າເຫລົ່ານີ້ໄດ້ຖືກຄ້ຳປະກັນຕໍ່ຊີວິດແລະຮັບ

ປະກັນວ່າຈະນຳຊັຍຊະນະມາໃຫ້ພວກເຂົາໂດຍພຣະເຢຊູ.

ຖ້າສຶກສາຕາມພຣະຄັມພີແລະປວັດສາດຂອງຊີວິດຄຣິສຕຽນແລ້ວ ພວກເຮົາຈະເຫັນໄດ້ວ່າບໍ່ແມ່ນຂອງງ່າຍໆ. ພຣະຄັມພີບໍ່ໄດ້ບອກວ່າ ຊີວິດຂອງຄຣິສຕຽນໂຮຍດ້ວຍກີບດອກກຸຫລາບທີ່ຫອມຫວນຕລອດເວລາ. ຊີວິດຈະຕ້ອງມີການຕໍ່ສູ້ກັບຕົນເອງ ແລະຕໍ່ສູ້ກັບການປົກຄອງທີ່ມີຄວາມແຕກຕ່າງກັນໃນແຕ່ລະປະເທດ. ພຣະຄັມພີໂຢຮັນກ່າວໄວ້ແລ້ວໃນ ບົດທີ 15:18-16:3.

## 3. <u>ຄວາມເຊື່ອທີ່ຍືນມື້ຢູ່</u>: (ພຣະນິມິດ 3:1-6)

ຊາເດ ເປັນເມືອງທີ່ມີປວັດສາດຍາວນານ, ເປັນເມືອງທີ່ອຸດົມສົມບູນຮັ່ງມີ ເຕັມໄປດ້ວຍທອງຄຳ. ເມືອງນີ້ມີທີ່ໝັ້ນອັນແຂງແກ່ນຕັ້ງຢູ່ເທິງຈ້າຍພູ, ກ່ຽວກັບເຣື່ອງສາສນາກໍມີປວັດສືບຕໍ່ມາຈາກພວກຍິວ ແລະມີຫລາຍຄວາມເຊື່ອຖືປະປົນກັນມາ. ຫລັງຈາກທີ່ໄດ້ຂຶ້ນກັບອຳນາດຂອງກຸງໂຣມແລ້ວ ເມືອງທີ່ເຄີຍອຸດົມຮັ່ງມີກໍລົດໜ້ອຍຖອຍລົງ. ທອງຄຳທີ່ເຄີຍມີກໍໝົດໄປໃນຄາວແຜ່ນດິນໄຫວປີ ຄສ ທີ 17, ເມືອງນີ້ຈຶ່ງເຫລືອແຕ່ຊາກສົບຂອງຄວາມຮັ່ງມີເທົ່ານັ້ນ.

ພຣະເຢຊູກ່າວແກ່ເມືອງນີ້ວ່າເປັນເມືອງທີ່ເຂັ້ມແຂງດ້ານທະຫານແລະດ້ານການຄ້າ. ພວກເຂົາເຄີຍມີຊື່ສຽງດ້ານຄວາມເຊື່ອມາກ່ອນ ແຕ່ປັດຈຸບັນນີ້ກຳລາງເລືອນໄປແລ້ວ ພວກເຂົາຢືນມື້ຢູ່ກັນໄປວັນໆ ໝາຍຄວາມວ່າຈະຕາຍຈະເປັນມື້ໃດກໍບໍ່ຮູ້ ພວກເຂົາມີເພື່ອນບ້ານທີ່ມີຄວາມເຊື່ອເຂັ້ມແຂງຄືຊາມີນາແລະເອເຟໂຊ ຊຶ່ງເປັນໂບດທີ່ບໍ່ໄດ້ມີການຕິຕຽນຫຍັງ, ພຣະເຢຊູເຕືອນໂບດເມືອງຊາເດວ່າຊື່ສຽງດີຢ່າງດຽວບໍ່ພຽງພໍ.

ຈົ່ງຕື່ນເຖີດ ພຣະເຢຊູຮຽກເອີ້ນພວກເຂົາຢ່າງຮີບດ່ວນ. ພວກເຂົາມີຊື່ສຽງໃນຊີວິດນີ້, ແຕ່ວ່າຈິດວິນຍານຂອງພວກເຂົາຕາຍເສັຽແລ້ວ. ອາດຈະເວົ້າໄດ້ອີກຄຳນຶ່ງວ່າ ຈົ່ງຄືນມາມີຊີວິດເຖີດ ຫລື ຈົ່ງຕຽມຕົວຢ່າເຜີຫລັບ. ແຕ່ລະຄົນຄວນຈະມີສະຕິຣະວັງຕົວໃນດ້ານຄວາມເຊື່ອຫລືວ່າພວກເຮົາຈະພາກັນສ່ຽງຕໍ່ການຕັດສິນລົງໂທດ ເໝືອນການຕັດສິນທີ່ຈະມາເຖິງເມືອງຊາເດນີ້ບໍ່. ຈະມີຄົນສ່ວນໜ້ອຍທີ່ມີຄວາມເຊື່ອແລະຈະຜ່ານພົ້ນການຕັດສິນແລະຈະໄດ້ຮັບຊັຍຊະນະ. (3:5)

## 4. <u>ຄວາມເຊື່ອສຳລັບຕົວເອງ</u>: (ພຣະນິມິດ 3:14-21)

ລາວດິເກອາ ເປັນເມືອງທີ່ລ້ຳລວຍແລະກໍບໍ່ຕ້ອງການໆຊ່ວຍເຫລືອຈາກກຸງໂຣມຫລາຍປານໃດ. ຢ່າງໃດກໍຕາມ ສ່ວນເອເຟໂຊ, ຊາມີນາ ແລະເປຄາໂມຍັງມີການພົວພັນອັນດີກັບກຸງໂຣມຢູ່. ເມືອງລາວດິເກອາຕິດຕໍ່ກັບກຸງໂຣມຍາກແດ່ ເພາະຕັ້ງຢູ່ລະຫວ່າງຮ່ອມພູທີ່ສູງ ແລະເປັນບ່ອນທີ່ມີດິນເໝາະສົມໃນການປູກຝັງແລະຍັງເປັນສູນກາງທະນາຄານອີກດ້ວຍ. ພວກເຂົາມີສູນກາງການແພດ ຖ້າຈະເວົ້າແລ້ວ ເມືອງພວກເຂົາພຽບພ້ອມກັນທຸກຢ່າງ. ເມືອງໂກໂລຊາຍ ແລະເມືອງເຮັຽຣາໂປລີ ກໍຢູ່ໃກ້ໆກັນແຕ່ກໍມີສິ່ງສະດວກສະບາຍແຕກຕ່າງກັນ. ປວງຊົນຊາວເມືອງກໍພາກັນອຸດໜູນບຳລຸງໂບດຢູ່ຕລອດມາ. ພວກເຂົາຮູ້ສຶກວ່າພວກເຂົາອຸດົມສົມບູນແລ້ວ ແລະສາມາດກຸ້ມຕົນເອງໄດ້ໝົດແລ້ວ ແຕ່ວ່າມັນຊ້ຳພັດກົງກັນຂ້າມກັບຄວາມເຊື່ອ. ພວກ

ເຂົາເຫັນພຣະເຈົ້າບໍ່ສຳຄັນແລ້ວ ພວກເຂົາເຫັນຕົນເອງຫລາຍກວ່າ ນີ້ລະຄືການຊັກນຳຂອງມານຊາຕານ. ພຣະເຢຊູໄດ້ສົມທຽບຊາວເມືອງລາວດີເກອາເໝືອນກັບນ້ຳ "ຈະຮ້ອນກໍບໍ່ຮ້ອນຈະເຢັນກໍບໍ່ເຢັນ ແລະຄວາມເຊື່ອຂອງພວກເຈົ້າກໍມີໜ້ອຍ. ດັ່ງນັ້ນຖ້າເຈົ້າຫາກພຽງແຕ່ອຸ່ນໆ ເຮົາຈະຄາຍເຈົ້າອອກຈາກປາກຂອງເຮົາ." (3:16) ໂຢຮັນຍັງໄດ້ບັນທຶກເຖິງຄຳເຕືອນໄວ້ອີກຫລາຍຢ່າງແຕ່ຂໍ້ 17-21. ສຸດທ້າຍພຣະອົງກໍຊົງກ່າວວ່າ "ໃຜມີຫູກໍໃຫ້ຟັງຂໍ້ຄວາມທີ່ພຣະວິນຍານໄດ້ຕັດສັ່ງໄວ້ແກ່ຄຣິສຕະຈັກທັງຫລາຍ."

**<u>ຄວາມໝາຍແລະພາກປະຕິບັດ</u>**

ບໍ່ເປັນການງ່າຍທີ່ຈະປະເຊີນໜ້າກັບຄວາມຜິດຂອງຕົນເອງ. ຫລາຍຄຣິສຕະຈັກໃນທຸກວັນນີ້ ອາດຈະຄ້າຍກັບເຈັດຄຣິສຕະຈັກທີ່ພວກເຮົາເວົ້າກັນຜ່ານມານີ້. ພວກເຮົາອາດຈະຮັບໃຊ້ຂແນງນຶ່ງ ແຕ່ວ່າອາດຈະຂາດເຂີນອີກຢ່າງນຶ່ງ. ຢ່າພາກັນລືມຄວາມຮັກດັ້ງເດີມທີ່ພວກເຮົາເຄີຍມີ. ພວກເຮົາອາດຈະເນັ້ນໜັກໃນຈຸດທີ່ເຮົາເຮັດໄດ້ແຕ່ຈຸດອື່ນພວກເຮົາຊ້ຳພັດປະລະໄປ ເຮັດບໍ່ຮູ້ ບໍ່ຈັກ. ຕ້ອງຈື່ຄຳເຕືອນຂອງພຣະອົງຕລອດໄປ. ຜູ້ໃດມີຫູຈົ່ງຟັງເອົາ.

**<u>ຄຳຖາມ</u>:**

5. ລອງຍົກໂບດໃດໂບດນຶ່ງຂຶ້ນມາ ທີ່ເປັນໂບດທີ່ທ່ານເຫັນວ່າບໍ່ມີຄວາມຜິດພາດຈັກຢ່າງ. ຈົ່ງອະທິບາຍຄວາມຮັກດັ້ງເດີມ. ອະທິບາຍຄວາມເຊື່ອຂອງໂບດຂອງທ່ານວ່າເປັນຢ່າງໃດ?

6. ຄຣິສຕຽນຫລາຍຄົນໃນໂລກນີ້ຖືກຂົ່ມເຫັງ: ຖືກລົງໂທດ, ຖືກຈັບກຸມ, ຖືກທໍຣະມານ, ຖືກຂ້າ...ທ່ານຈະມີຄວາມຫວັງຢ່າງໃດ ໃນ 2:10 ແລະ ໃນ 3:11-12 ທ່ານຈະມີການໜູນໃນຢ່າງໃດ?

7. ຄວາມເຊື່ອທີ່ຢືນມື້ຢູ່ສ່ຽງຕໍ່ອັນຕະລາຍບໍ່?

8. ອະທິບາຍຄວາມເຊື່ອທີ່ເຫັນແກ່ຕົວເອງ.

*ບພ*

# ບົດຮຽນທີ 3
## ລູກແກະທີ່ມີຄຸນຄ່າ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້**: ພຣະນິມິດ 4:1-7 ແລະ ບົດທີ 5

**ພູມຫລັງຂອງພຣະຄັມພີ**: ພຣະນິມິດ ບົດທີ 4 ແລະ ບົດທີ 5

**ຈຸດສຳຄັນສຳລັບບົດຮຽນນີ້**: ທິວທັດການນະມັສການເທິງແຜ່ນດິນສວັນເປັນທີ່ມາຂອງປວັດສາດແລະຄວາມໝາຍຂອງຊີວິດມະນຸດຊາດ.

**ຄຳຖາມເພື່ອການຄົ້ນຄວ້າ**: ເຮັດຢ່າງໃດພວກເຮົາຈຶ່ງຈະເຂົ້າໃຈຄວາມໝາຍຄວາມເປັນມາຂອງປວັດສາດແລະຊີວິດຂອງພວກເຮົາ

**ຈຸດປະສົງຂອງບົດຮຽນນີ້**: ໂຢຮັນໄດ້ໃຊ້ຮູບພາບທີ່ສົດສວຍງົດງາມທີ່ຈະຂຍາຍຮູບພາບໃນແຜ່ນດິນສວັນກັບພຣະເຢຊູ ຊຶ່ງເປັນທິວທັດການນະມັສການທີ່ມີຄວາມໝາຍແລະມີຄຸນຄ່າ.

### ຄຳນຳ

ໃນບົດ 4ແລະ 5 ຂອງພຣະທັມພຣະນິມິດໄດ້ເຊື່ອມເຂົ້າໃນການສັ່ງສອນຂອງພຣະເຢຊູທີ່ໄດ້ສັ່ງສອນຄຣິສຕະຈັກຕ່າງໆ ພ້ອມດ້ວຍການຕັດສິນທີ່ຈະມາໃນພາຍຂ້າງໜ້າ ໃນບົດທີ 6 ຫາບົດທີ 18. ພວກເຮົາຈະເຫັນການຮັບປະກັນ, ຈະໄດ້ເຫັນການຕັກເຕືອນຜູ້ອ່ານທັງຫລາຍວ່າພຣະເຢຊູເປັນຜູ້ທີ່ມີອຳນາດ, ມີພລັງ, ແລະເປັນຜູ້ທີ່ຄວບຄຸມທຸກຢ່າງໃນໂລກ. ພຣະອົງເປັນສູນກາງໃນການນະມັສການແລະເປັນຄວາມໝາຍຕໍ່ຊີວິດຂອງມະນຸສໂລກ.

### 1. **ພຣະທີ່ນັ່ງໃນແຜ່ນດິນສວັນ:** (ພຣະນິມິດ 4:1-7)

ພຣະນິມິດ 4:1, ຫລັງຈາກທີ່ໄດ້ອ່ານຖ້ອຍຄຳຕອນນີ້ແລ້ວ ພວກເຮົາຈະເຫັນຮູບພາບທີ່ແປກປລາດທີ່ເຮົາບໍ່ໄດ້ຄາດຄິດມາກ່ອນຄື ປະຕູສວັນໄດ້ເປີດຢູ່ ແລະໂຢຮັນກໍໄດ້ຍິນສຽງເອີ້ນວ່າ ໂຢຮັນຈົ່ງຂຶ້ນມາທີ່ນີ້ແລ້ວເຮົາຈະສຳແດງສິ່ງທີ່ຈະເກີດຂຶ້ນໃນພາຍຂ້າງໜ້າ. "ພໍຄຳເວົ້າສິ້ນສຸດລົງພຣະວິນຍານບໍຣິສຸດກໍຊົງດົນໃຈຂ້າພະເຈົ້າ ແລ້ວຂ້າພະຈົ້າກໍເຫັນພຣະທີ່ນັ່ງ ແລະມີທ່ານຜູ້ນຶ່ງປະທັບຢູ່ທີ່ນັ້ນ."

ທ່ານຜູ້ທີ່ນັ່ງຢູ່ທີ່ນັ້ນມີລັກສະນະເໝືອນແກ້ວມະນີໂຊດ ແລະແກ້ວພິລາ ແລະກໍຍັງມີຮຸ້ງລ້ອມຮອບທ່ານຢູ່ເບິ່ງຄ້າຍຄືແກ້ວມໍຣະກົດ (4:3). ໂຢຮັນຍັງໄດ້ເຫັນ ອີກຊາວສີ່ທີ່ນັ່ງຊຶ່ງມີຜູ້ອາວຸໂສນັ່ງຢູ່, ທຸກຄົນໃສ່ຊຸດຂາວທັງໝົດພ້ອມທັງສວມໃສ່ມົງກຸດ. ເປັນຫຍັງຈຶ່ງມີຊາວສີ່ຄົນ? ເຫດຜົນກໍມີຢູ່ວ່າ (1)ນ້ຳເບີຊາວສີ່ເປັນນ້ຳເບີທີ່ຄົບຖ້ວນຊຶ່ງເປັນຄວາມໝາຍເຖິງອຳນາດແລະພລັງ ທີ່ນະມັສການຢູ່ພຣະທີ່ນັ່ງໃນແຜ່ນດິນສວັນລ້ອມຮອບພຣະເຢຊູຢູ່ນັ້ນ. (2)ນ້ຳເບີຊາວສີ່ ແມ່ນນ້ຳເບີຜູ້ຕາງໜ້າສິບສອງເຜົ່າແລະສາວົກສິບສອງຄົນ. ໃສ່ຊຸດຂາວທຸກຄົນ ນີ້ໝາຍຄວາມວ່າສະງ່າຣາສີແລະຄວາມຊອບທັມຂອງພຣະເຢຊູໄດ້ປົກຫຸ້ມພວກເຂົາທຸກຄົນ. ມີຟ້າ

ແມບ ຟ້າຮ້ອງແລະສຽງຕ່າງໆ ດັງອອກມາຈາກຣາຊບັນລັງນັ້ນ. ມີໂຄມໄຟເຈັດໜ່ວຍຂອງພຣະເຈົ້າຕັ້ງຢູ່ຕໍ່ໜ້າຣາຊບັນລັງ. ອ້ອມຣາຊບັນລັງມີສັດໂລກສີ່ຕົວມີຕາເຕັມຂ້າງໜ້າແລະຂ້າງຫລັງ ຕົວນຶ່ງເໝືອນສິງ, ຕົວນຶ່ງເໝືອນງົວນ້ອຍ, ຕົວນຶ່ງໜ້າເໝືອນມະນຸດ, ແລະອີກຕົວນຶ່ງເໝືອນນົກອິນຊີກຳລັງບິນ.

ຟ້າແມບຟ້າຮ້ອງແມ່ນການສຳແດງອຳນາດທີ່ສົດສວຍງົດງາມຫລາຍ ເຫລື້ອມລະຍິບລະຍັບໄປທົ່ວ (4:5-6). ໂຢຮັນອະທິບາຍເຖິງສິ່ງທີ່ເພິ່ນໄດ້ເຫັນ ເຮັດໃຫ້ເພິ່ນມີຄວາມຕື່ນເຕັ້ນຫລາຍເຊັ່ນ: ສຽງ, ແສງ, ກິ່ນ *(ພຣະນິມິດ 5:8) ເມື່ອພຣະອົງຊົງຮັບໜັງສືນັ້ນແລ້ວສັດທັງສີ່ກັບພວກອາວຸໂສກໍຂາບລົງຖວາຍບັງຄົມພຣະເມສານ້ອຍ ທຸກທ່ານຖືພິນແລະຂັນຄຳເຕັມດ້ວຍເຄື່ອງຫອມຊຶ່ງເປັນຄຳໄຫວ້ວອນຂອງໄພ່ພົນທັງປວງຂອງພຣະເຈົ້າ.*

ຢູ່ທາງໜ້າພຣະທີ່ນັ່ງໂຢຮັນຍັງໄດ້ເຫັນທະເລແກ້ວມະນີ ແລະອ້ອມຮອບພຣະທີ່ນັ່ງຍັງໄດ້ເຫັນສັດທັງສີ່ຕົວນັ້ນ.(4:6-7) ສັດຕົວທີນຶ່ງເໝືອນສິງໝາຍເຖິງການຊົງສ້າງຂຶ້ນມາໃຫມ່. ສັດຕົວທີສອງເໝືອນງົວໝາຍເຖິງຄວາມແຂງແຮງ. ສັດຕົວທີສາມມີໜ້າເໝືອນມະນຸດ ແມ່ນປັນຍາ ຄວາມສລາດຮອບຮູ້ ແລະສັດຕົວສຸດທ້າຍຊຶ່ງຄ້າຍຄືນົກອິນຊີກຳລັງບິນ ແມ່ນການເຄື່ອນໄຫວໄປມາວ່ອງໄວ. ສັດແຕ່ລະຕົວມີທີກປີກ ເໝືອນທູດສວັນທີ່ເຄື່ອນໄຫວໄປມາຢ່າງບໍ່ມີເວລາເຊົາ.

## 2. <u>ພຣະເມສານ້ອຍຜູ້ມີຄຸນຄ່າ</u>: (ພຣະນິມິດ 5:1-7)

ພຣະນິມິດບົດທີ 5 ນີ້ ແມ່ນບົດຕໍ່ເຕີມນິມິດການເຫັນພຣະທີ່ນັ່ງແລະໜັງສືມ້ວນຂອງໂຢຮັນ. ຂ້າພະເຈົ້າໄດ້ເຫັນໜັງສືມ້ວນຢູ່ໃນພຣະຫັດເບື້ອງຂວາຂອງພຣະອົງ, ແລະຂ້າພະເຈົ້າກໍໄດ້ເຫັນໜັງສືນັ້ນໄດ້ຂຽນໄວ້ທັງຂ້າງນອກແລະຂ້າງໃນ ມີຕຣາປະທັບໄວ້ທັງເຈັດດວງ. ຂ້າພະເຈົ້າໄດ້ເຫັນທູດສວັນຜູ້ທີ່ມີຣິດເດດກ່າວຂຶ້ນຢ່າງດັງວ່າ ໃຜສົມຄວນຈະແກະຕາແລະເປີດໜັງສືມ້ວນນີ້ອອກໄດ້.(5:1-2)

ໃນຂໍ້ທີ 6 ລະຫວ່າງພຣະທີ່ນັ່ງກັບສັດທັງສີ່ ແລະໃນຖ້າມກາງພວກອາວຸໂສເຫລົ່ານັ້ນໂຢຮັນໄດ້ເຫັນພຣະເມສານ້ອຍປະທັບຢູ່ເໝືອນກັບວ່າພຣະອົງໄດ້ຖືກປົງພຣະຊົນແລ້ວ, ພຣະອົງຊົງມີເຂົາເຈັດເຂົາ ແລະມີຕາເຈັດຕາຊຶ່ງເປັນວິນຍານທັງເຈັດຂອງພຣະເຈົ້າທີ່ຊົງໃຊ້ອອກໄປທົ່ວໂລກ.

ໂຢຮັນມີຄວາມຍິນດີຫລາຍເມື່ອທ່ານເຫັນສັດທັງສີ່ ແລະບັນດາອາວຸໂສທັງຫລາຍ ກົ້ມລົງຂາບຖວາຍບັງຄົມພຣະເມສານ້ອຍ ທຸກຄົນຖືພິນແລະຂັນຄຳເຕັມດ້ວຍເຄື່ອງຫອມແລະພວກເຂົາກໍຮ້ອງເພງໃໝ່ໆສັຣເສີນ. ຮູບພາບທີ່ສຳແດງອອກມາທັງໝົດ ແມ່ນຄົບຖ້ວນແລະຜູ້ທີ່ສົມຄວນກໍແມ່ນພຣະເມສານ້ອຍພຽງຜູ້ດຽວ. ໃນຂໍ້ທີ 5 ໄດ້ແນໃສ່ພຣະເຢຊູໂດຍສະເພາະ ພຣະອົງຊົງມີຊັຍຊະນະແລ້ວພຣະອົງຈຶ່ງສາມາດແກະຕາທັງເຈັດແລະເປີດໜັງສືມ້ວນໄດ້.

## 3. <u>ບົດເພງສັຣເສີນ</u>: (ພຣະນິມິດ 5:8-14)

ໃນພຣະນິມິດບົດ 5:8-14 ນີ້ ພຣະເມສານ້ອຍເປັນເປົ້າໝາຍແຫ່ງການນະມັສການຂອງສັດທັງສີ່ ແລະຜູ້ອາວຸໂສທັງຊາວສີ່ທ່ານນັ້ນ. ຂໍ້ພຣະຄັມພີໄດ້ກາຍເປັນບົດເພງສັຣເສີນ ເຂົາເຈົ້າໄດ້ແບ່ງອອກເປັນສາມບົດເພງ. ບົດທີນຶ່ງ ພົບຢູ່ໃນຂໍ້ 9-10 ຊຶ່ງຂັບຮ້ອງໂດຍສັດທັງສີ່ແລະພວກຜູ້ອາວຸໂສ. ພວກເຂົາເຈົ້າໄດ້ຮ້ອງເພງໃນຖ້າມກາງການນະມັສການ. ພຣະເມສານ້ອຍຈະເຮັດແຕ່ສິ່ງທີ່ຄົນອື່ນບໍ່ສາມາດເຮັດໄດ້. ພຣະອົງສາມາດເປີດໜັງສືມ້ວນ. ພຣະອົງສາມາດມາຈາກການຖືກປະຫານ, ພຣະອົງຊົງເອົາຊະນະຄວາມຕາຍໄດ້ (ຂໍ້ 5 ແລະ 6) ພຣະໂລຫິດຂອງພຣະເມສານ້ອຍສາມາດໄຖ່ພວກເຮົາທຸກຄົນໄດ້ ຖ້າພວກເຮົາຫາກເຊື່ອ ແລະໃຫ້ພຣະອົງຊີ້ນຳຊ່ອງທາງ. ພວກເຮົາຮ້ອງເພງສັຣເສີນໃນວັນນີ້ ເພາະພຣະອົງຊົງໄຖ່ພວກເຮົາແລະພວກເຮົາກໍໄດ້ຮັບຄວາມລອດພົ້ນໂດຍພຣະເຢຊູ. ພຣະອົງຊ່ວຍພວກເຮົາໃຫ້ລອດພົ້ນຈາກຄວາມບາບແລະຜົນທີ່ຈະຕາມມາ ແຕ່ພຣະອົງຊົງຊ່ວຍພວກເຮົາໄປຫາອີກທີ່ນຶ່ງ ຄືຣາຊອານາຈັກຂອງພຣະເຈົ້າ.

ຂະບວນນັກຮ້ອງເປັນຂະບວນໃຫຍ່ໃນຂໍ້ 11-12 ເປັນໝື່ນໆແສນໆມາຮ້ອງເພງອ້ອມຮອບສັດທັງສີ່ແລະອາວຸໂສທັງຫລາຍ ເພງນີ້ເປັນເພງທີ່ສະແດງເຖິງພຣະລັກສະນະຂອງພຣະເມສານ້ອຍ. ບໍ່ແມ່ນແຕ່ພຣະເຢຊູຈະສາມາດແກະຕາປະທັບເທົ່ານັ້ນ ພຣະອົງຍັງເປັນສູນກາງແຫ່ງການນະມັສການ, ມະນຸດທົ່ວແຜ່ນດິນໂລກ ແລະທູດສວັນໃນແຜ່ນດິນສວັນກໍມາກົ້ມຂາບນະມັສການ. ພຣະອົງເປັນພຣະເມສານ້ອຍທີ່ມີຄຸນຄ່າຫລາຍ, ພຣະອົງສົມຄວນຈະໄດ້ຮັບກຽດ ແລະສົມຄວນຈະໄດ້ຮັບການສັຣເສີນຈາກທຸກຢ່າງ. ພວກເຮົາຄວນຈະສັຣເສີນພຣະເຢຊູ ບໍ່ແມ່ນຍ້ອນພຣະອົງຊົງກະທຳເທົ່ານັ້ນ ພຣະອົງຍັງຊົງໄຖ່ພວກເຮົາດ້ວຍ.

ເພງສຸດທ້າຍ, ເປັນເພງຕລອດໄປເປັນນິດຢ່າງບໍ່ມີຂອບເຂດ. (ຂໍ້13) ຖ້າຈະເວົ້າແລ້ວຂະບວນນັກຮ້ອງຄະນະນີ້ຄົງຈະນັບກັນໄດ້ຍາກ ເພາະສິ່ງທັງໝົດທີ່ມີຊີວິດ, ທັງຢູ່ເທິງສວັນ ແລະທັງໃຕ້ມະຫາສມຸດອີກ ຖືວ່າເປັນຂະບວນໃຫຍ່ຫລາຍ. ໃນບົດເພງນີ້ມີຄວາມໝາຍວ່າ ຍົກຍໍພຣະກຽດ, ຍົກຍໍພຣະສະງ່າຣາສີ, ຍົກຍໍຣິດທານຸພາບ. ບໍ່ມີມະນຸດຄົນໃດ, ບໍ່ມີສິ່ງໃດທີ່ຈະເໜືອພຣະອົງ ພຣະອົງຜູ້ດຽວແລະຕລອດໄປເປັນນິດ.

ຜູ້ທີ່ຕິດຕາມພຣະອົງຕ້ອງພູມໃຈໃນພຣະອົງ, ພຣະອົງເປັນຜູ້ຄຸ້ມຄອງໂລກ, ບໍ່ພໍເທົ່ານັ້ນພຣະອົງກໍຍັງໄດ້ໃຫ້ອຳນາດແກ່ພວກເຮົາດ້ວຍ.

## <u>ຄວາມໝາຍແລະພາກປະຕິບັດ</u>

ປຶ້ມພຣະນິມິດເປັນປຶ້ມທີ່ໃຫ້ຄວາມຫວັງ ແລະການສັຣເສີນ. ການເຂົ້າໃຈໃນປຶ້ມນີ້ອາດຈະມີຄວາມແຕກຕ່າງກັນໄປແດ່ ຢ່າງໃດກໍຕາມຫົວໃຈຂອງປຶ້ມນີ້ແມ່ນຢູ່ໃນບົດທີ 4 ແລະບົດທີ 5. ພວກເຮົານະມັສການພຣະອົງເພາະພຣະອົງຊົງເປັນ ແລະພຣະອົງຊົງກະທຳ. ພຣະອົງສິ້ນພຣະຊົນເພາະພຣະອົງຊົງຮັກເຮົາ ພວກເຮົາຄວນສັຣເສີນພຣະອົງໃນເວລາມີຊີວິດ ແລະເວລາໄປຢູ່ກັບພຣະອົງກໍຈະໄດ້ສັຣເສີນພຣະອົງອີກດ້ວຍ.

**ຄຳຖາມ:**

9. ທ່ານຈະເຮັດຢ່າງໃດ ເມື່ອທ່ານຫາກຖືກເອີ້ນເໝືອນດັ່ງໂຢຮັນ ຈົ່ງຂຶ້ນມາທີ່ນີ້ ແລ້ວເຫັນເໝືອນດັ່ງໂຢຮັນເຫັນ?

10. ສົມທຽບພຣະນິມິດ 4:1-6 ກັບເອຊາຢາ 6:1-8 ແມ່ນຫຍັງທີ່ຄືກັນ ແລະແມ່ນຫຍັງແຕກຕ່າງກັນ?

11. ໃນພຣະນິມິດ 5:4 ເປັນຫຍັງໂຢຮັນຈຶ່ງນ້ຳຕາໄຫລ ຮ້ອງໄຫ້ຮ່ຳໄຮຫລາຍ?

12. ລອງຄາດຄະເນເບິ່ງວ່ານັກຮ້ອງຈະມີຫລາຍສ່ຳໃດ ທີ່ມາສັຣເສີນພຣະເຢຊູ? ໃນພຣະນິມິດບົດທີ 5 ທຸກສິ່ງທີ່ມີຊີວິດ,ໃນສວັນ, ເທິງແຜ່ນດິນໂລກ, ໃຕ້ນ້ຳທະເລມານະມັສການພຣະເຢຊູ.

13. ເວລາຊີວິດຂອງເຮົາຫາກມີບັນຫາ ພຣະເຢຊູຈະໃຫ້ການຄ້ຳປະກັນ ພຣະອົງຈະໃຫ້ຄວາມຫວັງແກ່ພວກເຮົາ.

*ບພ*

# ບົດຮຽນທີ 4

## ຕາປະທັບອັນທີ 6 ໄດ້ເປີດແລ້ວ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ພຣະນິມິດ 6

**ພູມຫລັງຂອງພຣະຄັມພີ:** ພຣະນິມິດ 6

**ຈຸດສຳຄັນຂອງບົດຮຽນນີ້:** ເທົ່າທີ່ພຣະເຈົ້າໄດ້ຈັດແຈງວັນສຸດທ້າຍ, ພຣະອົງຈະນຳການຕັດສິນຫລາຍຢ່າງເຂົ້າມາໃນໂລກ.

**ຄຳຖາມເພື່ອການຄົ້ນຄວ້າ:** ເປັນຫຍັງການຕັດສິນຈຳເປັນຕ້ອງເກີດຂຶ້ນ?

**ຈຸດປະສົງຂອງບົດຮຽນ:** ເພື່ອອະທິບາຍເຖິງຄວາມໝາຍຂອງຕາປະທັບທີ 6 ແລະເອົາມາປະກອບໃຊ້ໃນຊີວິດໃນທຸກວັນນີ້.

### ບົດນຳ

ພຣະເຈົ້າຈະສະແດງຄວາມຍຸດຕິທັມເມື່ອພຣະອົງຕັດສິນຄົນຜິດບາບ ແລະນຳຄວາມພົ້ນມາສູ່ຜູ້ທີ່ເຊື່ອທຸກໆ ຄົນ. ປະທານາທິບໍດີ ນິກຊັນ ຢາກເປັນຜູ້ຊະນະຕໍ່ຄູ່ແຂ່ງຫລາຍ ເພິ່ນເລີຍສົ່ງຄົນໄປລັກເຂົ້າຫ້ອງການຄູ່ຕໍ່ສູ້ ທີແລກເພິ່ນກໍເຫັນວ່າໄດ້ຜົນ ແຕ່ຕໍ່ມາເຮັດຄວາມຜິດຊ້ຳອີກແລະຖືກຈັບໄດ້ ໃນທີ່ສຸດປະທານາທິບໍດີໄດ້ສູນເສັຽຕຳແໜ່ງໄປຢ່າງໜ້າອັບອາຍ.

ໃນສະພາບຢ່າງນີ້ແຫລະ ໂຢຮັນໄດ້ຈົດມ້ຽນປຶ້ມພຣະນິມິດ ເພາະເຫັນອານາຈັກຂອງພວກໂຣມັນໄດ້ແຜ່ຂຍາຍອຳນາດເໝືອນໄຟ ພວກເຂົາໄດ້ຂົ່ມເຫງປະຊາຊົນໂດຍສະເພາະແລ້ວແມ່ນພວກຄຣິສະຕຽນ. ໂຢຮັນໄດ້ໃຊ້ຮູບຄືພຣະເມສານ້ອຍໄດ້ເປີດຕາປະທັບ ເພື່ອບອກວ່າຄຣິສະຕຽນໃຫ້ຕັ້ງໝັ້ນໃນຄວາມເຊື່ອເພາະພວກໂຣມັນຈະໄດ້ຮັບເຄາະກັມຍ້ອນການກະທຳຂອງພວກເຂົາ.

### 1. **ມ້ວນພຣະຄັມພີ, ຕາປະທັບ, ແລະພຣະເມສານ້ອຍ**: (ພຣະນິມິດ 6:1ກ)

ພຣະຄັມພີຕອນນີ້ເປັນເຣື່ອງສຳຄັນຈາກພຣະນິມິດບົດທີ 4:1 ແລະເລີ້ມດ້ວຍການເປີດຕາປະທັບອັນທີ 7 ໃນບົດ 8:1-15. ຜູ້ນັ່ງເທິງບັນລັງໃນນິມິດຂອງໂຢຮັນໄດ້ຖືມ້ວນພຣະຄັມພີຊຶ່ງມີຄຳຂຽນໄວ້ທັງສອງດ້ານໝາຍຄວາມວ່າໃນມ້ວນພຣະຄັມພີນີ້ປະກອບດ້ວຍຫລາຍຄຳເວົ້າ. ມີນັກສາສນາຫລາຍຄົນໄດ້ແນະນຳວ່າມ້ວນພຣະຄັມພີນີ້ໄດ້ຈົດຄຳສັນຍາຂອງພຣະເຈົ້າໄວ້ວ່າພຣະອົງຈະປະທານມູນມໍຣະດົກແກ່ທຸກຄົນ ຜູ້ຈົງຮັກພັກດີຕໍ່ພຣະອົງ. ແຕ່ອີກພວກນຶ່ງໄດ້ເຊື່ອວ່າໃນມ້ວນພຣະຄັມພີໄດ້ບອກເຖິງການລົງໂທດທີ່ຈະມາເຖິງໂລກ. ເຫັນວ່າຄຳແນະນຳອັນທີສອງຖືກຕ້ອງກວ່າ ເມື່ອຕາປະທັບໄດ້ຖືກເປີດອອກ ພວກເຮົາອາດເຫັນເຖິງການຕັດສິນຂອງພຣະເຈົ້າໄດ້ດີຂຶ້ນຕໍ່ຄົນຜູ້ຕໍ່ສູ້ພຣະເຈົ້າ.

ມ້ວນພຣະຄັມພີນັ້ນໄດ້ຖືກຕິຕາປະທັບເຈັດອັນ (5:1). ໃນສມັຍເດີມ ຕາປະທັບເທິງເອກກະສານນັ້ນໝາຍເຖິງເປັນຂອງແທ້ເພື່ອບໍ່ໃຫ້ຄົນນຶ່ງຄົນໃດປອມໄດ້. ໃນນິມິດຂອງໂຢຮັນໄດ້ເຫັນມ້ວນພຣະຄັມພີໄດ້ຖືກຕິຕາປະທັບເຈັດອັນໝາຍຄວາມວ່ານັ້ນແມ່ນພຣະທັມຂອງພຣະເຈົ້າທີ່ບໍ່ມີຜູ້ໃດປອມແປງ. ໃນເມື່ອມີຕາປະທັບເຈັດອັນຢ່າງນີ້ອາດເປັນບັນຫາ ເພາະບໍ່ມີຜູ້ໃດສາມາດເປີດໄດ້ຄືກັນ. ສຽງຂອງເທວະດາໄດ້ກ່າວໄວ້ໃນບົດ 5:2 ເຫັນວ່າ ທຳອິດໝົດທັງໂລກຈັກກະວານບໍ່ມີຜູ້ໃດສາມາດເປີດໄດ້. ດັ່ງນັ້ນ, ໂຢຮັນຈຶ່ງຮ້ອງໄຫ້ດ້ວຍຄວາມຜິດຫວັງຢ່າງປລາດ. ຖ້າບໍ່ມີຜູ້ໃດເປີດຕາປະທັບນັ້ນ ກໍແປວ່າແຜນການຂອງພຣະເຈົ້າທີ່ຂຽນໄວ້ໃນພຣະຄັມພີນັ້ນກໍອາດບໍ່ມີຜູ້ໃດຮູ້ໄດ້ເລີຍ.

ແຕ່ເຫັນວ່າມີຜູ້ອາວຸໂສຄົນນຶ່ງໄດ້ມາຕັດການຄ່ຳຄວນຂອງໂຢຮັນ ແລະໄດ້ປະກາດຂ່າວດີບອກວ່າມີຜູ້ນຶ່ງສາມາດເປີດຕາປະທັບນັ້ນໄດ້: “ສິງແຫ່ງຕະກຸນຢູດາ ໜໍ່ເຊື້ອຂອງດາວິດ” (5:5). ໃນນິມິດຂອງໂຢຮັນໄດ້ເຫັນພຣະເມສານ້ອຍໄດ້ຍ່າງໄປທາງໜ້າຈັບເອົາຈາກພຣະຫັດຂອງຜູ້ນັ່ງເທິງບັນລັງນັ້ນ. ຫລັງຈາກນັ້ນພຣະເມສານ້ອຍໄດ້ເປີດຕາປະທັບ ແລະບອກເຖິງແຜນການຂອງພຣະເຈົ້າ ສິ່ງທີ່ມະນຸດໃນໂລກບໍ່ອາດເຮັດໄດ້ແຕ່ພຣະເມສານ້ອຍຄືອົງພຣະເຢຊູອົງດຽວສາມາດເປີດໄດ້.

## 2. <u>ວິທີການຕັດສິນ</u>: (ພຣະນິມິດ 6:1-8)

ດ້ວຍການເປີດຕາປະທັບເຫລົ່ານີ້ ພວກເຮົາໄດ້ເຫັນການຕັດສິນລົງໂທດຊຶ່ງໄດ້ຈົດໄວ້ໃນມ້ວນພຣະຄັມພີນັ້ນ. ໝາຍເຫດ: ການຕັດສິນໄດ້ຮູ້ເພາະຕາປະທັບໄດ້ເປີດອອກແລ້ວ ມີສາມຢ່າງຕາມໂຢຮັນເຫັນ: ຕາປະທັບ (6:1-8:5, ແກ (8:6-21, 11:15), ແລະອ່າງໃຫຍ່ (16:1-21). ໃນສາມການຕັດສິນນີ້ໂຢຮັນໄດ້ບອກເຖິງຄວາມຮ້າຍກາດ. ໝາຍເຫດ: ພຣະເຈົ້າຈະໃຊ້ຄົນເປັນເຄື່ອງມື, ໃຊ້ພັຍທັມມະຊາດໃນໂລກ, ແລະພັຍວິບັດອື່ນໆ.

ໃນເວລາພຣະເມສານ້ອຍເປີດຕາປະທັບທັງສີ່ຄັ້ງທຳອິດ, ສັດສີ່ຕົວທີ່ມີຊີວິດຢູ່ ໄດ້ຮ້ອງບອກໃຫ້ໂຢຮັນ “ເຂົ້າມາ” (6:1; 3, 5, 7). ໂຢຮັນໄດ້ແນະນຳໃຫ້ຮູ້ຈັກສັດທັງສີ່ໃນບົດ 4:6. ໃຜເປັນສັດສີ່ໂຕນີ້? ມີນັກປາດຫລາຍຄົນກ່າວວ່າ ອາດເປັນສິ່ງຊົງສ້າງ. ສິງໂຕເປັນຕົວແທນສັດປ່າ, ງົວນ້ອຍເປັນຕົວແທນສັດບ້ານ, ມະນຸດເປັນຕົວແທນຊີວິດຂອງຄົນ, ແລະ ນົກອິນຊີເປັນຕົວແທນຊີວິດຂອງນົກ. ສັດທັງສີ່ນີ້ໄດ້ຍົກຍ້ອງສັຣເສີນຕລອດໄປຕໍ່ພຣະເຈົ້າຜູ້ນັ່ງເທິງບັນລັງ (4: 8). ໃນບົດຮຽນນີ້ພວກສັດທັງສີ່ໄດ້ມີພາກສ່ວນຕັດສິນ. ເມື່ອຕາປະທັບທັງສີ່ໄດ້ຖືກເປີດ ພວກເຂົາໄດ້ຮ້ອງເປັນສຽງ ດຽວວ່າ, “ເຊີນສະເດັດມາ!”

ຕາປະທັບສີ່ອັນທຳອິດໝາຍເຖິງສິ່ງທີ່ພຣະເຈົ້າຈະໃຊ້ຕັດສິນອານາຈັກພວກໂຣມັນ. ການຕັດສິນລົງໂທດທັງສີ່ນີ້ແມ່ນຈະມີຄົນຂີ່ມ້າ. ມີພວກນັກປາດກ່າວວ່າພາບດັ່ງກ່າວນີ້ມີຢູ່ໃນການປະກາດຂອງເຊຂາຣີຢາ 1:8-17 ຊຶ່ງກ່າວວ່າຜູ້ຂີ່ມ້ານີ້ໄດ້ເຝົ້າຍາມຮັກສາໂລກເພື່ອຈະເອົາຊັຍຊະນະ. ສຳລັບໂຢຮັນໃນບົດ 6 ໄດ້ບອກໄປແລ້ວເຖິງຊັຍຊະນະທີ່ພຣະເຈົ້າໄດ້ຕັດສິນຄົນອະທັມ.

ຜູ້ຂີ່ມ້າຂາວມີທະນູໃນມືໝາຍເຖິງຄົນເຂົ້າມາໃນເມືອງຢ່າງຜູ້ມີຊັຍ (6:1-2). ຜູ້ຂີ່ມ້າສີແດງເຂົ້າມາໃນເມືອງ ໝາຍເຖິງຈະເອົາອຳນາດອອກໄປຈາກໂລກ ແລະນຳການຕັດສິນຈາກພຣະເຈົ້າມາສູ່ໂລກ (6:3-4). ຜູ້ຂີ່ມ້າສີດຳເຂົ້າມາ ໝາຍເຖິງພັຍວິບັດ, ການອຶດຢາກ , ແລະມີເສິກສົງຄາມ ຈະມີການນອງເລືອດແລະ

ຄວາມຕາຍ (6:7-8). ພຣະເຈົ້າ ໄດ້ໃຊ້ຄວາມຊົ່ວລົງໂທດໂລກເພາະຄວາມບາບ. ນັ້ນແຫລະເປັນເຫດຜົນທີ່ມີການຕັດສິນລົງໂທດ (6:9-16).

ໂດຍການເປີດຕາປະທັບອັນທີຫ້າ ໂຢຮັນໄດ້ຫັນປ່ຽນເຣື່ອງການຕັດສິນທີ່ໄດ້ກ່າວໄວ້ຫລັງຈາກໄດ້ເປີດຕາປະທັບທີສີ່ຊຶ່ງເປັນໝວດທີນຶ່ງ ແລະບອກເຖິງເຫດຜົນທີ່ໄດ້ຮັບການຕັນສິນ (6:9-11). ພວກຖືກຂ້າດ້ວຍຄວາມເຊື່ອໂດຍຈັກກະພັດໂຣມຜູ້ມີຊື່ວ່າ <u>ໂດມິຊຽນ</u> ພວກເຂົາໄດ້ທູນຂໍພຣະເຈົ້າໃຫ້ນຳຄວາມເປັນທັມມາສູ່ພວກເຂົາ. ໂຢຮັນໄດ້ໃຊ້ພາບທີ່ເຫັນໃນພຣະວິຫານເວລາມີການຖວາຍ ຊຶ່ງເຕັມໄປດ້ວຍເລືອດຂອງສັດທີ່ຄົນນຳມາຂ້າ. ໃນນິມິດນັ້ນໄດ້ເຫັນວິຍານຂອງພວກຖືກຂ້າຍ້ອນຄວາມເຊື່ອ (6:9).

ຜູ້ທີ່ນຸ່ງເຄື່ອງຂາວທີ່ຖືກຂ້າຍ້ອນຄວາມເຊື່ອໃນອົງພຣະຄຣິດນັ້ນ ມີຄວາມໝາຍວ່າພຣະເຈົ້າຈະໄດ້ປ່ຽນແປງສະພາບຈາກການເປັນທຸກໃຫ້ເປັນຜູ້ຊອບທັມ. ຄາວສຸດທ້າຍຈະມາເຖິງເມື່ອຜູ້ເຊື່ອໃນອົງພຣະຄຣິດຖືກຂ້າເປັນຈຳນວນຫລາຍ ແຕ່ບໍ່ໄດ້ບອກເປັນຕົວເລກແນ່ນອນ (6:11). ປໂຍກນີ້ໄດ້ບອກວ່າພຣະເຈົ້າມີແຜນການທີ່ຈະຕັດສິນລົງໂທດໂລກນີ້ດ້ວຍໄຟ.

ການເປີດຕາປະທັບອັນທີຫົກເປັນເຄື່ອງໝາຍວ່າພຣະເຈົ້າໄດ້ເທຄຳຕັດສິນລົງມາໃນໂລກ (6:12-16). ທຸກສິ່ງຢ່າງໃນໂລກຈະໄດ້ປ່ຽນແປງ ເດືອນດາວຈະຕົກຈາກຟ້າ. ຄົນທຸກຊັ້ນວັນນະຈະໄດ້ຮັບເຄາະກັມແລະຢ້ານກົວທີ່ສຸດ ເມື່ອພວກເຂົາໄດ້ພົບກັບພຣະເຈົ້າອົງສັດຊື່ແລະທ່ຽງທັມ. ໃນຂໍ້ 5 ໂຢຮັນໄດ້ຊຽນເຖິງຄົນຊັ່ງເພື່ອຊັ່ງຊາມະນຸດ ໝາຍຄວາມວ່າຄົນເຮົາກໍຈະຖືກຕັດສິນລົງໂທດ ແລະບໍ່ມີຜູ້ໃດ ຫລືສິ່ງໃດພົ້ນຈາກການຕັດສິນຈາກພຣະເຈົ້າໄດ້ເລີຍ.

## 3. <u>**ຜົນຍິ່ງໃຫຍ່ສຸດທ້າຍ**</u>: (ພຣະນິມິດ 6:16-17)

ໂຢຮັນໄດ້ໃຊ້ປໂຍກເຣື່ອງການຕັດສິນເປັນໜ້າສົນໃຈຫລາຍ "ພຣະພິໂຣດຂອງພຣະເມສານ້ອຍ"(6:16). ເພາະເວລາເວົ້າເຖິງພຣະເມສານ້ອຍແລ້ວ ສ່ວນຫລາຍຈະເວົ້າເຖິງຄວາມດີ ຄວາມຮັກ ຄວາມເມດຕາ. ມີນັກປາດທາງສາສນາກ່າວວ່າ ກໍເພາະຄົນເຮັດຄວາມຜິດບາບແລ້ວກໍຕັ້ງໃຈເຮັດຄວາມຜິດຄືເກົ່າຈຶ່ງເປັນເຫດໃຫ້ມີການລົງໂທດ. ໂຢຮັນຍັງໄດ້ອະທິບາຍອີກເຖິງການບໍ່ເປັນລະບຽບ ແລະການໝົດຫວັງໃນຕາປະທັບອັນທີຫົກເພາະຄວາມໂກດຮ້າຍຂອງພຣະເຈົ້າ. ໃຜຈະພົ້ນຈາກການຕັດສິນເພາະວັນຍິ່ງໃຫຍ່ ແລະໂກດຮ້າຍມາເຖິງ? (6:17). ໂຢຮັນໄດ້ເຫັນດີກັບຄຳປະກາດເຕືອນຈາກຜູ້ປະກາດພຣະທັມ (ໂຢເອນ 2:11, ນາຮູມ 1:6, ມາລາກີ 3:2). ໃນສັງຄົມສມັຍໂຢຮັນມີຄວາມຊົ່ວຊ້າຫລາຍທີ່ສຸດ. ພວກໂຣມັນມີກຳລັງໄດ້ປົກຄອງໂລກໃນນິມິດທີ່ໂຢຮັນໄດ້ເຫັນນັ້ນ ເປັນຮູບພາບເຖິງຄວາມເປັນທັມຂອງພຣະເຈົ້າຕ້ອງຊະນະຄວາມໂຫດຮ້າຍຂອງພວກໂຣມັນ. ພຣະເຈົ້າປົດປ່ອຍຄວາມຊົ່ວຊ້າບໍ່ໃຫ້ໂຣມັນໄດ້ປົກຄອງໂລກອີກຕໍ່ໄປ ຜູ້ທີ່ນຳເອົາຄວາມຊົ່ວເຂົ້າມາໃນໂລກຈະໄດ້ຖືກຕັດສິນລົງໂທດຢ່າງຍຸດຕິທັມ. ສ່ວນຜູ້ທີ່ເຊື່ອແລະວາງໃຈໃນພຣະເຈົ້າຈະໄດ້ຖືກໄຖ່ໃຫ້ພົ້ນພັຍ. ດັ່ງນັ້ນ, ໃນຄວາມໂກດຮ້າຍຂອງພຣະເຈົ້າຕໍ່ຄວາມຊົ່ວ ໂຢຮັນໄດ້ບອກວ່າຜູ້ທີ່ເຊື່ອຍັງມີຫວັງເພາະເປັນປະຊາກອນຜູ້ຈົງຮັກພັກດີຕໍ່ພຣະເຈົ້າ.

## ເຣື່ອງນີ້ມີຄວາມໝາຍຫຍັງໃນທຸກວັນນີ້?

ໂລກທີ່ໂຢຮັນໄດ້ເວົ້າໃນນິມິດໃຫ້ຟັງນັ້ນບໍ່ໄດ້ແຕກຕ່າງກັບໂລກໃນປັດຈຸບັນ. ຄວາມຊົ່ວໄດ້ມີຢູ່ໃນທຸກບ່ອນທຸກທີ່ທຸກສັງຄົມ ແລະທຸກສມັຍ. ພວກເຮົາໄດ້ເຫັນພວກກໍ່ການຮ້າຍໃນໂລກ. ໃນພຣະນິດມິດບົດທີ 6 ໄດ້ກ່າວໄວ້ສອງຢ່າງ ເພື່ອຕອບບັນຫາເຣື່ອງຄວາມຊົ່ວໃນໂລກ. ໂຢຮັນບອກວ່າ ຜູ້ທີ່ເຊື່ອໃນພຣະເຈົ້າມີຄວາມຫວັງ ບໍ່ແມ່ນຍ້ອນສະພາບການ, ຄວາມສາມາດ, ຫລືຄວາມສລາດຫລັກແຫລມ. ຄວາມຫວັງນີ້ຢູ່ໃນພຣະເຈົ້າຜູ້ນັ່ງພຣະບັນລັງ ແລະໃນອົງພຣະຄຣິດ ພຣະເມສານ້ອຍຜູ້ປົກຄອງໂລກຈັກກະວານສົມເປັນ "ສິງຂອງຕະກູນຢູດາ." ສຳລັບຜູ້ເຮັດຄວາມຊົ່ວ ໂຢຮັນໄດ້ເຕືອນພວກເຂົາວ່າ ພຣະເຈົ້າຈະລົງໂທດພວກເຂົາຍ້ອນການກະທຳ ຕາມແຜນການຂອງພຣະອົງແຕ່ຫົວທີ ວ່າພຣະອົງຈະບໍ່ປະປ່ອຍໃຫ້ຄວາມຊົ່ວລອຍນວນຢູ່ຕລອດໄປ.

**<u>ຄຳຖາມ</u>**

1. ໂຢຮັນໄດ້ກ່າວເຖິງພຣະຄັມພີເດີມປຶ້ມເຫຼັ້ມໃດ ວ່າພຣະເຈົ້າຈະລົງໂທດໂດຍມີຄົນຂີ່ມ້າເຂົ້າມາ?
2. ແມ່ນຫຍັງເປັນຄວາມຊົ່ວໃນສມັຍໂຢຮັນ ແລະທຽບກັບສມັຍດຽວນີ້?
3. ໂຢຮັນໄດ້ບອກວ່າພຣະເຈົ້າຈະທຳລາຍຄວາມຊົ່ວຊ້າ ມີອັນໃດບອກວ່າຈະກາຍເປັນຈິງແທ້?
4. ທ່ານຄຶດໄດ້ບໍ່ວ່າການກະທຳຊົ່ວຂອງພວກເຮົາຈະເປັນຜົນຮ້າຍຕໍ່ສິ່ງແວດລ້ອມ?
5. ອັນໃດເປັນຜົນຮ້າຍທີ່ໂຢຮັນໄດ້ເຕືອນວ່າ ຄົນຊົ່ວຕ້ອງລໍໄປອີກຈົນພວກເຂົາໄດ້ເຮັດຊົ່ວຊ້າຢ່າງໂຫດຮ້າຍທີ່ສຸດກ່ອນພຣະເຈົ້າຈະນຳການຕັດສິນລົງໂທດມາເຖິງ?

*ສບ. ບຸນຈັນ ວົງສຸຣິດທຣ໌*

# ບົດຮຽນທີ 5
## <u>ຍຸດພັກຕອນທີນຶ່ງ: ປະຊາກອນຂອງພຣະເຈົ້າຖືກຮັກສາເອົາໄວ້</u>

---

| | |
|---|---|
| **<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** | ພຣະນິມິດ 7 |
| **<u>ພູມຫລັງຂອງພຣະຄັມພີ:</u>** | ພຣະນິມິດ 7 |
| **<u>ຈຸດສຳຄັນຂອງບົດຮຽນນີ້:</u>** | ຖ້າມກາງການລົງໂທດອັນໃຫຍ່ ປະຊາກອນຂອງພຣະເຈົ້າຖືກຮັກສາເອົາໄວ້. |
| **<u>ຄຳຖາມເພື່ອການຄົ້ນຄວ້າ:</u>** | ອັນໃດແມ່ນບໍ່ເກີດຂອງຄວາມຫວັງທ່ານ ແລະຖ້າມກາງຄວາມໝົດຫວັງ? |
| **<u>ຈຸດປະສົງຂອງບົດຮຽນ:</u>** | ເພື່ອສຳຣວດເຖິງພາບຂອງການຍຸດພັກວ່າແມ່ນຫຍັງແລະມີຄວາມໝາຍແນວໃດ ເພື່ອຈະເອົາມາປະກອບໃຊ້ໃນຊີວິດຂອງຕົນເອງ. |

### ບົດນຳ

ນ້ຳພຣະທັຍຂອງພຣະເຈົ້ານັ້ນຄືຮັກສາ ແລະຊ່ວຍໃຫ້ຜູ້ທີ່ມີຄວາມເຊື່ອໃນອົງພຣະເຢຊູພົ້ນຈາກພັຍອັນຕະລາຍ. ຕົວຢ່າງທີ່ເຫັນໃນຕອນສົງຄາມໃນປະເທດເຢັຽຣະມັນ ພໍ່ສອນໃຫ້ລູກມັກອ່ານປື້ມເພື່ອເພີ້ມຄວາມຮູ້ ວັນນຶ່ງເດັກຍິງນ້ອຍເອົາປື້ມແລະລົງໄປອ່ານຢູ່ຫ້ອງໃຕ້ດິນ ແລະໃນເວລານັ້ນມີພວກສັດຕູເອົາເຮືອບິນຖິ້ມລະເບີດທຳລາຍໝົດທັງເມືອງ ຄົນແລະສັດໄດ້ເສັຽຊີວິດເພາະຖືກລະເບີດ ແຕ່ຍິງນ້ອຍຄົນນັ້ນເຫລືອຊີວິດຢູ່.

ໃນຕອນນີ້ໃນປື້ມພຣະນິມິດເຫັນວ່າຕາປະທັບທີຫົກໄດ້ຖືກແກະ ແລະໄດ້ນຳຄວາມເປັນທຸກມາສູ່ໂລກຈັກກະວານ(ພນມ 6:1-17). ກ່ອນຕາປະທັບດວງທີເຈັດຈະຖືກແກະເພື່ອຈະບອກເຖິງທີ່ສຸດປາຍຂອງໂລກ. ພຣະນິມິດ 7 ໄດ້ແນະນຳໃຫ້ມີການຍຸດພັກ ເພື່ອຈະອະທິບາຍບອກເຖິງສະພາບຂອງຜູ້ທີ່ເຊື່ອວ່າຈະເປັນແນວໃດໃນວັນສຸດທ້າຍໃນໂລກນີ້. ເໝືອນດັ່ງເດັກຍິງນ້ອຍໄດ້ພົ້ນຈາກລະເບີດເພາະນາງຢູ່ຫ້ອງໃຕ້ດິນພຣະເຈົ້າກໍຈະຮັກສາຜູ້ທີ່ເຊື່ອໃນພຣະອົງຖ້າມກາງພັຍອັນຕະລາຍໃຫຍ່ນັ້ນ.

### 1. <u>ປະຊາກອນຂອງພຣະເຈົ້າຖືກປະທັບຕາເອົາໄວ້</u>: (ພຣະນິມິດ 7:1-8)

ພຣະນິມິດ 7 ໄດ້ແນະນຳເຣື່ອງສຳຄັນຂອງເທວະດາສີ່ຕົນຜູ້ທຳລາຍແຜ່ນດິນແລະທະເລ (7:1). ໃນຕອນນີ້ໃນນິມິດຂອງໂຢຮັນບອກວ່າເທວະດາຕົນທີຫ້າ ໄດ້ເຮັດເປັນເຣື່ອງທີ່ໜ້າສົນໃຈເພາະໄດ້ບອກໃຫ້ເທວະດາສີ່ຕົນນັ້ນຢຸດທຳລາຍ (7:2-3). ມີສອງຢ່າງໄດ້ບອກເຖິງເທວະດາຕົນນີ້ວ່າຈະມາຊ່ອຍ. ນຶ່ງ, "ຈາກທິດຕາເວັນອອກ." ການຊ່ອຍຂອງຜູ້ປະກາດເອເຊກຽນກໍໄດ້ມາຈາກທິດຕາເວັນອອກຄືກັນ (ອຊກ 43:2), ຜູ້ປະກາດ ມາລາກີ ໄດ້ເບິ່ງໄປທາງທິດຕາເວັນອອກແຫ່ງຄວາມຍຸດຕິທັມແລະການປິ່ນປົວຈະມາເຖິງ (ມລກ

4:2). ໝາຍຄວາມວ່າເທວະດາມາຈາກທິດຕາເວັນອອກໝາຍເຖິງສິ່ງດີຈະເກີດຂຶ້ນ. ພວກເຮົາຮູ້ຈັກວ່າເທວະດາຕົນນີ້ໄດ້ນຳເອົາການຊ່ວຍເຫລືອມາໃຫ້ເພາະໄດ້ຖືກ "ຕາປະທັບຂອງພຣະເຈົ້າຜູ້ຊົງພຣະຊົນຢູ່." ຕານີ້ຈະຖືກຈ້ຳໄວ້ທີ່ໜ້າຜາກທຸກຄົນທີ່ເປັນປະຊາກອນຂອງພຣະເຈົ້າ. ໃນບົດນີ້ ໂຢຮັນໄດ້ໃຊ້ຄຳເວົ້າພາສາກຣີກຊຶ່ງເປັນຄຳເວົ້າອັນດຽວກັບອາຈານໂປໂລໃຊ້ເວລາຂຽນຈົດໝາຍໄປຫາຄຣິສຕະຈັກເມືອງເອເຟໂຊວ່າເມື່ອຄົນຜູ້ໃດໄດ້ເຊື່ອໃນອົງພຣະເຢຊູແລ້ວ ພວກເຂົາກໍໄດ້ຖືກຈ້ຳກາ ຫລືຕີຕາປະທັບຊຶ່ງເປັນຄຳສັນຍາຈາກອົງພຣະວິນຍານບໍຣິສຸດ. (ອຟຊ 1:13). ພວກເຮົາໄດ້ເຫັນແລະເຂົ້າໃຈເຖິງຕາປະທັບຈາກຂໍ້ພຣະຄຳນີ້.

ຮູບພາບທີ່ຜ່ານມາ ໂຢຮັນໄດ້ມີປະສົບການມາກ່ອນເພິ່ນໄດ້ກ່າວເຖິງຜູ້ທີ່ເຊື່ອໄດ້ຖືກປະທັບຕາໄວ້ທີ່ໜ້າຜາກ ເພື່ອບໍ່ໃຫ້ຖືກທຳລາຍໃນຄາວສຸດທ້າຍ ເໝືອນກັບຜູ້ປະກາດພຣະທັມເອເຊກຽນ (ອຊກ 9). ພຣະເຈົ້າໄດ້ສອນຂ້າທາດພວກເຮັບເຣີໃຫ້ເອົາເລືອດທາໄວ້ທີ່ຂອບປະຕູເພື່ອບໍ່ໃຫ້ພວກເທວະດາສັງຫານຄົນໃນບ້ານນັ້ນ (ອພຍ 12:7-13).

ໂຢຮັນໄດ້ໃຊ້ພາບເປັນຕາປະທັບເພື່ອເຕືອນຜູ້ທີ່ເຊື່ອວ່າພຣະເຈົ້າຈະເປັນຜູ້ຮັກສາພວກເຂົາບໍ່ໃຫ້ຖືກອັນຕະລາຍໃນວັນສຸດທ້າຍ. ຕາປະທັບນັ້ນໝາຍເຖິງການໄຖ່ໃຫ້ລອດພົ້ນໄດ້ສຳເຣັດແລ້ວ ແລະໃຫ້ເຂົາແນ່ໃຈວ່າ ຜູ້ທີ່ເຊື່ອຢ່າງຕາຍໃຈກໍໄດ້ຢູ່ໃນອົ້ງພຣະຫັດຂອງພຣະເຈົ້າແລ້ວ ພຣະອົງຈະບໍ່ປ່ອຍພວກເຂົາອອກໄປຢ່າງເດັດຂາດ.

ໃຜເປັນຄົນໄດ້ຮັບຈາກເທວະດາຕົນທີຫ້າ "ຕາປະທັບທີ່ໜ້າຜາກ"? ບາງຄົນຄຶດວ່າແມ່ນຄົນຢິວຜູ້ທີ່ເຊື່ອ (7:1-8), ແລະຄົນຕ່າງຊາດທີ່ນຸ່ງເຄື່ອງຂາວ (7:9-17). ສ່ວນຫລາຍແມ່ນພວກທີ່ເຊື່ອວ່າອາດແມ່ນແສນສີ່ໝື່ນສີ່ພັນຄົນໃນເວລາມີຄວາມເປັນທຸກເວທະນານັ້ນ. ໝາຍຄວາມວ່າໃນພຣະນິມິດ 7:1-8 ໄດ້ກ່າວເຖິງກ່ອນສຽງແກເປົ່າໃນຍາມລົງໂທດ, ແລະໃນບົດ 7:9-17 ໄດ້ກ່າວເຖິງຫລັງຈາກສຽງແກເປົ່າໃນເວລາຕັດສິນລົງໂທດ, ແລະພວກຜູ້ທີ່ເຊື່ອໄດ້ມີຄວາມຊົມຊື່ນຍິນດີຕາມທີ່ພຣະເຈົ້າໄດ້ຈັດຕຽມໄວ້ໃຫ້ພວກເຂົາ.

## 2. <u>ປະຊາກອນຂອງພຣະເຈົ້າຖືກຮັກສາເອົາໄວ້</u>: (ພຣະນິມິດ 7:9-12)

ພວກທີ່ກ່າວເຖິງໃນບົດ 7:1-8 ກໍເປັນຄົນກຸ່ມດຽວກັນກັບໃນບົດທີ 7:9-17 ແຕ່ໂຢຮັນໄດ້ອະທິບາຍເຖິງຄວາມສຳຄັນຂອງຄວາມແຕກຕ່າງ. ພວກເຂົາເປັນກຸ່ມໃຫຍ່ຈົນບໍ່ມີຜູ້ໃດນັບໄດ້ຈາກຫລາຍປະເທດໃນໂລກ (7:9). ໄດ້ຢືນຢູ່ຕໍ່ໜ້າພຣະບັນລັງແລະຢູ່ທາງໜ້າຂອງພຣະເມສານ້ອຍ ພວກເຂົາໄດ້ຢູ່ໃນບ່ອນມີກຽດ (7:9).

ຄົນພວກນີ້ນຸ່ງເຄື່ອງຂາວ (7:9) ຊຶ່ງໂຢຮັນໄດ້ກ່າວໄວ້ອີກບ່ອນດຽວເທົ່ານັ້ນ, ພຣະນິມິດ 6:11. ທີ່ນັ້ນພຣະເຈົ້າໄດ້ປະທານເຄື່ອງນຸ່ງຂາວໃຫ້ແກ່ຜູ້ທີ່ຖືກຂ້າຍ້ອນຄວາມເຊື່ອ ໂດຍການເປີດຕາປະທັບອັນທີຫ້າ. ເຄື່ອງນຸ່ງຂາວເປັນສັນຍາລັກຂອງຄວາມບໍຣິສຸດເພາະພວກເຂົາຖືກຊຳຣະດ້ວຍພຣະໂລຫິດຂອງພຣະເມສານ້ອຍ (7:15). ເລືອດນີ້ໄດ້ບອກເຖິງພວກອັຄສາວົກ ແລະການສິ້ນພຣະຊົນຂອງອົງພຣະເຢຊູຢູ່ເທິງໄມ້ກາງແຂນ ແລະໝາຍເຖິງເລືອດຂອງຜູ້ຮັບໃຊ້ຢ່າງເສັຽສະລະຂອງຄົນອື່ນໆ.

ຕາມນິມິດ ໂຢຮັນໄດ້ເຫັນຄົນຊອບທັມຢືນຢູ່ຕໍ່ໜ້າບັນລັງແລະພຣະເມສານ້ອຍ ໄດ້ບອກວ່າພວກເຂົາໄດ້ຖືກ້ານຕານ (7:9) ນີ້ເປັນສັນຍາລັກເຖິງຊັຍຊະນະເວລາພວກຢິວໄດ້ສລອງງານຜ້າເຕັ້ນ (ລລວ 23:40 ; ນຫມ 8:15). ພວກທີ່ເຊື່ອຈະໄດ້ຮັບຄວາມຊື່ນຊົມຍິນດີພົ້ນຈາກການຂົມຂື່ນເພາະຖືກຂົ່ມເຫງ. ພວກເຂົາໄດ້ຮັບຊັຍຊະນະນີ້ບໍ່ແມ່ນຍ້ອນຄວາມດີທີ່ເຂົາເຮັດມາ ແຕ່ຍ້ອນພຣະຄຸນແລະຄວາມຮັກຂອງພຣະເຈົ້າຕ່າງ

ຫາກ. ພຣະໂລຫິດຂອງພຣະເມສານ້ອຍໄດ້ຊຳຣະລ້າງພວກເຂົາໃຫ້ບໍຣິສຸດ ຄົນພວກນີ້ໄດ້ຖວາຍພຣະກຽດດ້ວຍສຽງເພງ ສັຣເສີນເພາະຄວາມພົ້ນໄດ້ມາເຖິງແລ້ວ ຈາກພຣະເຈົ້າຜູ້ຊົງນັ່ງເທິງບັນລັງ ນັ້ນແລະພຣະເມສານ້ອຍຜູ້ນຳຊັຍຊະນະມາໃຫ້ (7:12).

### 3. <u>ປະຊາກອນຂອງພຣະເຈົ້າຖືກເອີ້ນຊື່</u>: (ພຣະນິມິດ 7:13-17)

ໃນນິມິດຂອງໂຢຮັນໄດ້ເຫັນນັ້ນ ມີຄຳຖາມຂຶ້ນມາວ່າຄົນພວກນີ້ແມ່ນໃຜ? (7:13) ພວກອາວຸໂສໄດ້ຈື່ຈຳຄົນເປັນຈຳນວນຫລວງຫລາຍໄດ້ ພວກເຂົາໄດ້ອອກມາຈາກຄວາມທຸກເວທະນາ (7:15). ນັກສາສນາສາດໄດ້ໃຊ້ຄຳວ່າເປັນທຸກເວທະນາ ຊຶ່ງເປັນຄວາມທຸກທໍຣະມານທີ່ຫລີກເວັ້ນບໍ່ໄດ້ ເພາະອົງພຣະເຢຊູກໍໄດ້ປະສົບເໝືອນກັນ. ອົງພຣະເຢຊູໄດ້ໃຊ້ຄວາມເວົ້າຢ່າງນີ້ໃນໂຢຮັນ 16:33. ຄຣິສະຕຽນທຸກ ໆສມັຍໄດ້ພົບກັບສິ່ງນີ້ເປັນປະຈຳຕລອດມາ.

ພຣະຄັມພີໄດ້ກ່າວເຖິງຄວາມທຸກຄັ້ງຍິ່ງໃຫຍ່ທີ່ຈະເກີດຂຶ້ນ ໝັກກວ່າຄາວສຸດທ້າຍທີ່ຈະມາເຖິງ (ດນອ 12:1) ໂຢຮັນໄດ້ກ່າວເຖິງເຫດການນີ້ໃນຕອນຕົ້ນຂອງການເປີດຕາປະທັບອັນທີເຈັດ ໂດຍກວ່າວ່າຄົນພວກທີ່ນຸ່ງເຄື່ອງຂາວໄດ້ອອກມາຈາກຄວາມເປັນທຸກເວທະນາອັນໃຫຍ່. ໝາຍຄວາມວ່າການເປັນທຸກເວທະນາແລະສິ່ງອື່ນໃດບໍ່ສາມາດຍາດເອົາພວກເຂົາອອກຈາກພຣະຫັດຂອງພຣະເຈົ້າໄດ້ເດັດຂາດ.

ໂຢຮັນກ່າວວ່າ, "ເພາະເຫດນັ້ນເຂົາຈິ່ງໄດ້ຢູ່ຕໍ່ໜ້າພຣະຣາຊບັນລັງຂອງພຣະເຈົ້າ ແລະປະຕິບັດພຣະອົງໃນພຣະວິຫານຂອງພຣະອົງທັງກາງເວັນແລະກາງຄືນ ແລະພຣະອົງຜູ້ຊົງປະທັບເທິງພຣະຣາຊບັນລັງນັ້ນຈະຊົງສະຖິດຢູ່ນຳແລະປົກປ້ອງຄຸ້ມຄອງເຂົາ" (7:15). ພວກຄົນທີ່ເຊື່ອເຫລົ່ານີ້ບໍ່ໄດ້ພຽງແຕ່ພົ້ນຈາກຄວາມເປັນທຸກເວທະນາເທົ່ານັ້ນ ແຕ່ຄວາມເຊື່ອຂອງພວກເຂົາຈະໄດ້ຖືກຫລໍ່ຫລອມໃຫ້ດີທີ່ສຸດ ເພື່ອພວກເຂົາຈະໄດ້ຢືນຕໍ່ໜ້າບັນລັງຂອງອົງພຣະຜູ້ເປັນເຈົ້າ ບໍ່ແມ່ນຍ້ອນຄວາມດີຂອງພວກເຂົາ ແຕ່ແມ່ນອົງພຣະຄຣິດໄດ້ກະທຳເພື່ອພວກເຂົາຢູ່ເທິງໄມ້ກາງແຂນ.

ນຶ່ງ, ພວກເຂົາຈະໄດ້ຮັບໃຊ້ພຣະເຈົ້າຕລອດໄປຕາມນິມິດຂອງໂຢຮັນ ແຕ່ບໍ່ໄດ້ກ່າວເຖິງການຮັບໃຊ້ຢ່າງໃດ ເຫັນວ່າໃນສວັນຈະບໍ່ມີຄົນຢູ່ລ້າ. ທຸກຄົນຜູ້ທີ່ເຊື່ອຈະເປັນຄົນເກີດຜົນດີໃນທາງໃດທາງນຶ່ງ. ຍິ່ງໄປກວ່ານັ້ນພຣະເຈົ້າຈະເປັນຜູ້ຮັກສາພວກເຂົາໃຫ້ພົ້ນຈາກອັນຕະລາຍ ແລະປະທານທຸກສິ່ງທີ່ພວກເຂົາຕ້ອງການ. ຄວາມຕ້ອງການຕາມມາດຕະຖານໃນໂລກຈະບໍ່ມີອີກຕໍ່ໄປ ຄວາມເຈັບປວດຈະໝົດໄປ. ນ້ຳຕາຈະບໍ່ມີ ພວກຝູງຄົນຈະໄດ້ຮ້ອງເພງສັຣເສີນພຣະເຈົ້າເໝືອນນັກປະພັນເພງສັຣເສີນບົດ 23:1. ພຣະເຈົ້າເປັນຜູ້ຮັກສາ ເບິ່ງແຍງ ແລະລ້ຽງເກືອດ້ວຍຄວາມຮັກ ເໝືອນຜູ້ລ້ຽງແກະທີ່ດີ.

### ເຣື່ອງນີ້ມີຄວາມໝາຍຫຍັງໃນທຸກວັນນີ້?

ໂຢຮັນຕ້ອງການໃຫ້ຜູ້ທີ່ເຊື່ອສແວງຫາຄວາມປອດພັຍໃນພຣະເຈົ້າ ເພື່ອເປັນຄຳສອນຕໍ່ພວກເຮົາເຊັ່ນກັນ. ພວກເຮົາໄດ້ເຫັນຄຳສັນຍາຂອງພຣະເຈົ້າວ່າພຣະອົງຈະເປັນຜູ້ປ້ອງກັນ, ບໍ່ແມ່ນຄວາມຫຍຸ້ງຍາກສັບສົນໃຈຊີວິດ. ຜູ້ປະພັນເພງສັຣເສີນບອກວ່າພຣະເຈົ້າຈະນຳທາງຜ່ານຮ່ອມພູເຂົາເງົາມັດຈຸຣາດ, ບໍ່ແມ່ນທາງອ້ອມພູ (ພສສ 23:4).

ພວກເຮົາຍັງໄດ້ເຫັນຄຳສັນຍາຈາກພຣະເຈົ້າວ່າ ພຣະອົງຈະຈັດຫາສິ່ງໃດທີ່ຈຳເປັນໃຫ້. ໂຢຮັນຕ້ອງການສິ່ງຈຳເປັນເຊັ່ນ: ອາຫານ, ນ້ຳດື່ມ, ແລະຮົ່ມກັນແດດຮ້ອນກ້າ. ທຸກມື້ນີ້ຄວາມຕ້ອງການຂອງພວກເຮົາອາດປ່ຽນໄປ ແຕ່ເຫັນວ່າພຣະເຈົ້າສາມາດຈັດຫາໃຫ້ໄດ້ສເມີ. ຍິ່ງໄປກວ່ານັ້ນ ພຣະເຈົ້າສັນຍາວ່າຈະສະຖິດຢູ່ນຳ ແລະພວກເຮົາຈະຢືນຕໍ່ພຣະພັກຂອງພຣະເຈົ້າ ແລະພຣະເມສານ້ອຍຢ່າງຄົບຊອບທັມ.

**<u>ຄຳຖາມ</u>**

6. ທ່ານຈື່ໄດ້ບໍ່ວ່າພຣະເຈົ້າເຄີຍຊ່ອຍທ່ານໃນຍາມລຳບາກ?
7. ມີຄວາມໝາຍຢ່າງໃດວ່າພຣະເຈົ້າໄດ້ໄຖ່ພວກເຮົາຢ່າງຄົບບໍຣິບູນແລ້ວໃນຊີວິດ?
8. ທ່ານຄຶດວ່ານິມິດທີ່ໂຢຮັນໄດ້ເຫັນໃນສວັນ ຄືຄົນເປັນຈຳນວນຫລາຍໄດ້ຖືກໄຖ່ແລ້ວນັ້ນແມ່ນພວກໃດ?
9. ຄວາມໝາຍຂອງຜູ້ຖືກໄຖ່ແລະນຸ່ງເຄື່ອງຂາວມີຄວາມໝາຍຢ່າງໃດ?
10. ພວກເຮົາສາມາດຮຽນຫຍັງເຖິງວິທີນະມັສການທີ່ພວກເທວະດາແລະສັດສີ່ຕົວທີ່ມີຊີວິດໄດ້ຮ້ອງເພງສັຣເສີນ ແລະໄດ້ກົ້ມໜ້າຕໍ່ພຣະບັນລັງຂອງພຣະເຈົ້າ?
11. ມີຄວາມໝາຍຢ່າງໃດວ່າພວກຖືກໄຖ່ຈະໄດ້ຮັບໃຊ້ພຣະເຈົ້າທັງກາງເວັນແລະກາງຄືນໃນສວັນ?

*ສບ. ບຸນຈັນ ວົງສຸຣິດທຣ໌*

# ບົດຮຽນທີ 6
# <u>ສຽງແກແຫ່ງການຕັດສິນ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ພຣະນິມິດ 8; 9:1-6, 13-15, 20-21

**<u>ພູມຫລັງຂອງພຣະຄັມພີ:</u>** ພຣະນິມິດ 8 ແລະ 9

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ພຣະເຈົ້າຈະຕັດສິນພວກສັດຕູຂອງພຣະອົງຢ່າງເຂັ້ມງວດ ແລະ ຈະບໍ່ມີທາງຫລີກເວັ້ນໄດ້ເດັດຂາດ.

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ພຣະເຈົ້າຈະເອົາຊະນະຄວາມຊົ່ວແທ້ບໍ່?

**<u>ຈຸດປະສົງຂອງບົດຮຽນ:</u>** ເພື່ອເຮັດເປັນໂຄງຮ່າງວ່າອັນໃດປະກອບໃນສຽງແກຄັ້ງທີທີກວ່າ ພຣະເຈົ້າຈະຕັດສິນ ແລະເອົາປະກອບໃຊ້ໃນຊີວິດໃນປັດຈຸບັນນີ້.

## ບົດນຳ

ເຖິງແມ່ນວ່າພຣະເຈົ້າສົ່ງການຕັດສິນລົງໂທດມາໃນໂລກນີ້ ພຣະເຈົ້າຍັງໃຫ້ໂອກາດປ່ຽນແປງຄືໃຫ້ຖິ້ມໃຈເກົ່າ ແລະເອົາໃຈໃໝ່ໄດ້. ໃຫ້ພວກເຮົາຄຶດເຖິງສັດຕະວັດທີນຶ່ງຊີວິດຂອງຄຣິສະຕຽນ ທີ່ພວກໂຣມັນໄດ້ຂົ່ມເຫງພວກເຂົາເປັນຢ່າງໜັກ. ໃນຖ້າມກາງຄວາມເປັນທຸກແລະໝົດຫວັງ ໂຢຮັນໄດ້ໜູນໃຈພວກເຂົາບໍ່ໃຫ້ຍອມແພ້ ແຕ່ເຫັນວ່າຄຳເວົ້ານັ້ນບໍ່ຄ່ອຍມີຄວາມໝາຍຈົນເຫັນບາງຢ່າງໄດ້ເກີດຂຶ້ນຕໍ່ພວກໂຣມັນ. ເຂົາຄຶດວ່າຕາບໃດພວກເຂົາຍັງຕົກເປັນທາດ ຄວາມຫວັງເຖິງເສຣີພາບກໍມືດດຳໄປ. ດັ່ງນັ້ນ ໂຢຮັນໄດ້ກ່າວເພີ້ມເຖິງຄວາມຫວັງໃນພຣະນິດມິດ ບົດ 8-11 ທຳນວາຍໄວ້ວ່າໂຣມັນຈະຕົກໄປ. ໂຢຮັນບອກວ່າການຕັດສິນຈາກພຣະເຈົ້າຈະເກີດຂຶ້ນລະຫວ່າງເທວະດາຕົນທີເຈັດ ແລະດ້ວຍສຽງແກເຈັດເທື່ອ.

## 1. <u>ເລີ້ມຕົ້ນ</u>: (ພຣະນິມິດ 8:1-5)

ສຽງແກມີຄວາມສຳຄັນຕໍ່ຊີວິດຂອງພວກເຮັບເຣີທີ່ສຸດ. ເວລາພວກເຂົາເຮັດສົງຄາມກໍມີທະຫານເປົ່າແກປະຈຳໝວດ (1 ຊາມູເອັນ 13:3) ແລະເວລານະມັສການກໍມີການເປົ່າແກອີກ (ຈົດບັນຊີ 10:10; ລະບຽບພວກເລວີ 23:24). ໃນປຶ້ມອົບພະຍົບ 19: 16 ເວລາໄດ້ຍິນສຽງແກໝາຍເຖິງພຣະເຈົ້າອົງບໍຣິສຸດປາກົດແກ່ປະຊາຊົນ ແລະໃນທີ່ສຸດສຽງແກກໍປະກອບໃຊ້ໃນວັນຕັດສິນວັນສຸດທ້າຍຂອງໂລກ. ໃນບົດຮຽນນີ້ໄດ້ເວົ້າເຖິງການປາກົດຂອງພຣະເຈົ້າເວລາພຣະອົງຕັດສິນ.

ການເປົ່າແກເຈັດອັນເປັນການຕັດສິນລົງໂທດພວກສັດຕູຂອງພຣະເຈົ້ານັ້ນໄດ້ກ່າວມາແລ້ວເວລາຕາປະທັບອັນທີເຈັດໄດ້ຖືກເປີດອອກ. ໂຢຮັນອະທິບາຍໄວ້ວ່າເມື່ອພຣະເມສານ້ອຍໄດ້ເປີດຕາປະທັບດວງທີເຈັດ, “ຄວາມງຽບສງັດກໍເກີດຂຶ້ນໃນສວັນປະມານເຄິ່ງຊົ່ວໂມງ” (8:1). ມີຄຳຖາມວ່າ ເຄິ່ງຊົ່ວເປັນເວລາສັ້ນເທົ່າໃດ? ບາງເທື່ອອາດຈະແມ່ນຄວາມມິດງຽບຂອງຄວາມຕັ້ງໃຈເອົາໄວ້. ໂຢຮັນໄດ້ອະທິບາຍເຖິງສິ່ງທີ່ພຣະ

ເຈົ້າໃຊ້ໃນການຕັດສິນ, ຄວາມຢ້ານຂອງພວກຄົນຊົ່ວຮ້າຍໃນວັນນັ້ນ, ແລະການປົກປ້ອງຮັກສາຂອງພຣະເຈົ້າຕໍ່ຜູ້ທີ່ເຊື່ອ. ໃນບົດ 8 ບອກວ່າທຸກສິ່ງໃນສວັນໄດ້ກັ້ນໃຈເອົາໄວ້ວ່າແມ່ນຫຍັງຈະເກີດຂຶ້ນ. ເມື່ອພຣະເຈົ້າໄດ້ເອົາແກໃຫ້ເທວະດາຕົນທີເຈັດນັ້ນທຸກຄົນເຂົ້າໃຈດີວ່າ ຄວາມມິດສັງັດຈະສິ້ນສຸດລົງ. (8:2).

ຫລັງຈາກຄວາມມິດສັງັດ ໂຢຮັນໄດ້ກ່າວເຖິງຄວັນໄຟຫອມເພາະເທວະດາອີກຕົນນຶ່ງໄດ້ໃຕ້ຕະກຽງຄຳ (8:3-5). ພວກທ່ຽງທັມໄດ້ອ້ອນວອນອະທິຖານຕໍ່ພຣະເຈົ້າໃຫ້ພຣະອົງຊ່ອຍພົ້ນພັຍ, ແຕ່ເຫັນວ່າຄຳອະທິຖານຂອງພວກເຂົາຍັງບໍ່ພຽງພໍ. ຖ້າເມື່ອໃດເຫັນຕະກຽງຄຳເຕັມໄປດ້ວຍຄວັນໄຟ ເມື່ອນັ້ນຈະຮູ້ວ່າຄຳອ້ອນວອນໄດ້ຮັບຄຳຕອບ. ດັ່ງນັ້ນ, ແມ່ນຫຍັງເປັນເຄື່ອງຫອມ? ໂຢຮັນບໍ່ໄດ້ບອກ, ແຕ່ພວກເຮົາຄຶດວ່າຕາມຄຳຂຽນມາກ່ອນນັ້ນ, ເຄື່ອງຫອມນີ້ເປັນຕົວແທນຂອງພຣະຜູ້ຊ່ອຍໃຫ້ພົ້ນໄດ້ອ້ອນວອນເພື່ອຜູ້ຖືກຂົ່ມເຫງຍ້ອນຄວາມເຊື່ອ.

## 2. <u>ແກສີ່ອັນໃນໝວດທີນຶ່ງ</u>: (ພຣະນິມິດ 8:6-12)

ມີນັກປະວັດສາດຜູ້ມີຊື່ວ່າ ແອດເວີດ ກິບເບິນ ໄດ້ຂຽນປຶ້ມເຣື່ອງອານາຈັກໂຣມໝົດອຳນາດລົງຍ້ອນພລັງສາມຢ່າງ: ພັຍທັມມະຊາດ, ການສໍ້ຣາດບັງຫລວງພາຍໃນ, ແລະພລັງຈາກຕ່າງປະເທດ. ໂຢຮັນໄດ້ກ່າວເຖິງເຣື່ອງສາມຢ່າງນີ້ເວລາສຽງແກໄດ້ເປົ່າຂຶ້ນ.

ການເປົ່າແກສີ່ອັນໝວດທຳອິດແມ່ນຜົນຮ້າຍຈາກທັມມະຊາດ ການເປົ່າແກອັນທີນຶ່ງນີ້ເຮັດໃຫ້ໝາກເຫັບຕົກລົງມາໃນໂລກຢ່າງໃຫຍ່ພ້ອມດ້ວຍໄຟ (8:7). ເວລາແກອັນທີສອງດັງຂຶ້ນພູເຂົາໃຫຍ່ໄດ້ຕົກລົງໄປໃນທະເລ (8:8-9). ເມື່ອແກອັນທີສາມກ້ອງຂຶ້ນ ດວງດາວໃນທ້ອງຟ້າເຮັດໃຫ້ນ້ຳເປັນພິດພັຍ (8:10-11). ສຽງແກອັນທີສີ່ດັງຂຶ້ນເຮັດໃຫ້ດວງຕາເວັນ ດວງເດືອນແລະດວງດາວມືດມົນໄປ (8:12). ການຕັດສິນລົງໂທດສີ່ຢ່າງນີ້ໄດ້ຖືກນຳມາດ້ວຍການເປົ່າແກສີ່ອັນ ຊຶ່ງເປັນຜົນຮ້າຍຕໍ່ສີ່ຢ່າງເຊັ່ນ: ໂລກ, ທະເລ, ນ້ຳ, ແລະຊັ້ນຟ້າ (ເດືອນແລະດາວ).

ໝາຍເຫດ: ໂຢຮັນໄດ້ໃຊ້ຄຳເວົ້າ "ສາມສ່ວນ" ສອງສິ່ງທີ່ຖືກທຳລາຍເວລາສຽງແກໄດ້ດັງຂຶ້ນໝາຍຄວາມວ່າການຕັດສິນນີ້ບໍ່ແມ່ນໝົດທັງໂລກ ແຕ່ເປັນບາງພາກສ່ວນ ພຣະເຈົ້າບໍ່ຢາກໃຫ້ຄົນຈິບຫາຍ ແຕ່ຕ້ອງການໃຫ້ມະນຸດໃນໂລກຖິ້ມໃຈເກົ່າແລະເອົາໃຈໃໝ່.

## 3. <u>ແກອັນທີ ຫ້າແລະທີຫົກ</u>: (ພຣະນິມິດ 8:13-9:6, 13-15, 20-21)

ຕອນນີ້ນິມິດຂອງໂຢຮັນ ມີເທວະດາອີກຕົນນຶ່ງຈະໄດ້ເປົ່າແກ່ເຕືອນວ່າ ສຽງແກສຸດທ້າຍສາມອັນຈະນຳເອົາພັຍວິບັດອັນໃຫຍ່ເຂົ້າມາ ເຮັດໃຫ້ສິ່ງທີ່ທຳລາຍສີ່ຢ່າງດ້ວຍສຽງແກສີ່ອັນມາກ່ອນນັ້ນທຽບບໍ່ໄດ້ (8:13). ການທຳນວາຍນີ້ກາຍເປັນຈິງໃນຂະນະເທວະດາຕົນທີຫ້າເປົ່າແກອັນທີຫ້າ ແລະໂຢຮັນໄດ້ເຫັນ "ດາວດວງນຶ່ງຕົກຈາກຟ້າມາຍັງແຜ່ນດິນໂລກ" (9:1). ໃຜແມ່ນດາວດວງນີ້? ມີນັກປາດກ່າວວ່າແມ່ນດາວຮ້າຍ (ຊາຕານ). ແຕ່ມີຫລາຍຄົນເຂົ້າໃຈວ່າ ແມ່ນເທວະດາແຫ່ງສວັນຜູ້ທີ່ພຣະເຈົ້າສົ່ງມາເຮັດຕາມນ້ຳພຣະທັຍຂອງພຣະອົງ.

ພຣະເຈົ້າປະທານຂໍກະແຈໃຫ້ເທວະດາຕົນນີ້ໄຂ "ປ່ອງເຫວເລິກ" (9:1). ຄຳເວົ້ານີ້ໃຊ້ເປັນພາບທີ່ເປັນພາກສ່ວນຂອງຄວາມເລິກໃນທະເລ (ປຖກ 1:2; ພສສ 42:7). ຕໍ່ມາຄົນສ່ວນຫລາຍມັກໃຊ້ຄຳເວົ້ານີ້ວ່າ

ເປັນແດນມໍຣະນາ ແລະເປັນບ່ອນຄຸມຂັງ. ປ່ອງເຫວເລິກແມ່ນບ່ອນພຍາມານຈະໄດ້ຖືກຂັງໄວ້ພັນປີ (ພນມ 20:1-3).

ເມື່ອເທວະດາໄດ້ໄຂປ່ອງເຫວເລິກ,"ຄວັນໄຟໄດ້ອອກມາເໝືອນອອກຈາກເຕົາໄຟຮ້ອນກ້າໃຫຍ່" (9:2). ໃນນິມິດຂອງໂຢຮັນໄດ້ເຫັນຄວັນໄຟໜາບັງແສງສະຫວ່າງ, ບໍ່ໃຫ້ຄົນທັນໃຈ ເໝືອນກັບໝໍ້ນະຣົກໄດ້ແຕກ ເຮັດສິ່ງທີ່ພຣະເຈົ້າຊົງສ້າງສູນເສັຽໄປ.

ຮ້າຍໄປກວ່ານັ້ນອອກຈາກຄວັນໄຟມີຕັກແຕນອອກມາ "ມີອຳນາດເໝືອນກັບແມງງອດທີ່ແຜ່ນດິນໂລກ" (9:3). ຕັກແຕນບໍ່ໄດ້ຢູ່ແຕ່ໃນປຶ້ມໂຢເອນ 1:2-2:11 ແຕ່ມີຢູ່ປຶ້ມອົບພະຍົບ 10:1-20 ຊຶ່ງເປັນການລົງໂທດທີແປດໃນສິບຢ່າງ. ໃນປຶ້ມພຣະນິມິດ 9:4-6 ໄດ້ກ່າວເຖິງການທຳລາຍຂອງຕັກແຕນ, ແຕ່ພຣະເຈົ້າຊ່ອຍປະຊາກອນຂອງພຣະອົງໃຫ້ພົ້ນຈາກພັຍວິບັດໃນວັນສຸດທ້າຍນີ້. ຕັກແຕນໄດ້ທຳລາຍຄົນຜູ້ບໍ່ມີຕາປະທັບຂອງພຣະເຈົ້າທີ່ໜ້າຜາກ (9:4).

ຕັກແຕນເຫລົ່ານີ້ຈະທຳລາຍຜົລປູກປະມານຫ້າເດືອນ (9:5). ພວກນັກປາດກ່າວວ່າຫ້າເດືອນນີ້ເປັນອາຍຸຂອງຕັກແຕນ. ບາງຄົນເຂົ້າໃຈວ່າຫ້າເດືອນເປັນພຽງສັນຍາລັກເທົ່ານັ້ນ ເພາະຫ້າແມ່ນເຄິ່ງຂອງສິບໝາຍເຖິງບໍ່ຄົບຖ້ວນ ແລະຍັງມີສິ່ງທີ່ຈະມາອີກ. ບາງທີໂຢຮັນໄດ້ໃຊ້ຄຳເວົ້າຫ້ານີ້ໝາຍເຖິງລະຍະສັ້ນ.

ຕັກແຕນມີອຳນາດທຳລາຍຫລາຍ ແຕ່ບໍ່ເຖິງຕາຍ (9:5). ໂຢຮັນທຽບຕັກແຕນໃສ່ແມງງອດໃນແຜ່ນດິນໂລກ ເຮັດໃຫ້ມີຄວາມເຈັບປວດເປັນທຸກ (9:5). ຄົນທີ່ຖືກແມງງອດຕອດຢາກຕາຍເພາະຄວາມເຈັບແຕ່ຈະບໍ່ເຖິງຄວາມຕາຍ. ພວກເຂົາຄຶດຢາກຈະຂ້າຕົນເອງເພາະຄວາມເຈັບ ແຕ່ພຣະເຈົ້າບໍ່ອະນຸຍາດໃຫ້ພວກເຂົາເຮັດຢ່າງນັ້ນຕາມຄວາມປາຖນາຂອງເຂົາ. ພວກເຂົາຈະຍັງມີຊີວິດເພື່ອຈະປະສົບກັບຄວາມເປັນທຸກ ເຈັບປວດອັນແສນສາຫັດ.

ໂຢຮັນໄດ້ອະທິບາຍເຖິງຕັກແຕນໃນບົດທີ 9:7-10 ໄດ້ບອກພວກເຮົາວ່າ ໂຢຮັນບໍ່ໄດ້ໃຊ້ຕັກແຕນແທ້ ແຕ່ເປັນສັນຍາລັກທີ່ພຣະເຈົ້າໃຊ້ໃນວັນຕັດສິນລົງໂທດ. ຕັກແຕນມີກຳລັງເໝືອນຕົວມ້າ (9:7). ມັນມີມົງກຸດເປັນຄຳ (9:7). ຕັກແຕນມີໜ້າຕາແລະສລາດເໝືອນຄົນ (9:7). ມີຜົມຍາວງາມເໝືອນຜົມຜູ້ຍິງ ແຕ່ມີແຂ້ວເໝືອນໂຕສິງ (9:8). ພວກເຂົາໃສ່ເຄື່ອງຄົບຊຸດເໝືອນໄປຕີເສິກ (9:9). ສຸດທ້າຍໂຢຮັນໄດ້ຫວນກັບມາປຽບກັບແມງງອດ (9:10). ໂຢຮັນໄດ້ເວົ້າລົ້ມຄືນເຖິງຈຸດປະສົງຂອງຕັກແຕນຄືມັນໄດ້ທໍຣະມານມະນຸດເຖິງຫ້າເດືອນ.

ສຸດທ້າຍໂຢຮັນໄດ້ເຫັນ "ເຈົ້າຊີວິດ" ຂອງຕັກແຕນ ຜູ້ມີຊື່ວ່າເຫວເລິກ ຫລືຕາມພາສາເຮັບເຣີວ່າ ອາໂປລີໂອນ (9:11). ກະສັດຂອງຕັກແຕນອາດແມ່ນພຍາມານ ຫລືຜູ້ເປັນຕົວແທນຂອງຄວາມຊົ່ວຊ້າ. ຕາມພາສາເຮັບເຣີ ຫລືພາສາກຣີກແລ້ວແປວ່າ "ຜູ້ທຳລາຍ". ຊາຕານເປັນກະສັດທີ່ວໜ້າມານຜູ້ຕໍ່ສູ້ພຣະເມສານ້ອຍທີ່ໄດ້ກ່າວມາໃນບົດ 5. ພຣະເມສານ້ອຍຜູ້ຖືກຂ້າປາຖານາຢາກຈະຊ່ອຍມະນຸດຊາດ; ແຕ່ພຍາມານມີຈິດໃຈຢາກທຳລາຍມະນຸດທັງໂລກ.

ພວກເຮົາໄດ້ເຫັນອີກຄັ້ງນຶ່ງເວລາເທວະດາສີ່ຕົນໄດ້ເປົ່າແກອັນທີຫົກ ເທວະດາພວກນີ້ໄດ້ຕ້ານລົມສີ່ທິດໃນໂລກໄວ້ (7:1), ບາດນີ້ເທວະດາເຫລົ່ານັ້ນໄດ້ປ່ອຍລົມມາທຳລາຍ (9:4). ແທນທີ່ຈະທຳລາຍດ້ວຍທັມມະຊາດ ແຕ່ແມ່ນເທວະດາສີ່ຕົນນີ້ທີ່ຕົກມາໃນໂລກເພື່ອທຳລາຍມະນຸດ. ເໝືອນຄັ້ງກ່ອນ ການທຳລາຍນີ້ບໍ່

ແມ່ນທົ່ວໂລກ ແຕ່ເປັນ "ຕາມສາມສ່ວນສີ່ຂອງມະນຸສໂລກ" ໄດ້ຕາຍດ້ວຍສິ່ງນີ້. (9:15). ເພື່ອພຣະເຈົ້າຈະເປີດໂອກາດໃຫ້ມະນຸດກັບໃຈໃໝ່.

ລະຫວ່າງການເປົ່າແກ່ອັນທີຫົກແລະທີເຈັດ, ໂຢຮັນໄດ້ກ່າວເຖິງສິ່ງທີ່ຖືກທຳລາຍໂດຍການລົງໂທດທົກຄັ້ງມາກ່ອນນັ້ນ (9:20-21). ພຣະເຈົ້າທຳລາຍພຽງສາມສ່ວນສີ່ນັ້ນກໍເພາະພຣະອົງເປີດໂອກາດໃຫ້ຄົນກັບໃຈກ່ອນພັຍອັນໃຫຍ່ກວ່າຈະມາເຖິງ. ຢ່າງໃດກໍຕາມເຫັນວ່າຜູ້ຕໍ່ຕ້ານແລະມີຈິດໃຈແຂງກະດ້າງຍັງສືບຕໍ່ໃນການນັບຖືຜີ, ພຣະທຽມ (9:20) ຫລືເຮັດຄວາມບາບຊົ່ວຮ້າຍຕໍ່ໄປ (9:21)

## ເຣື່ອງນີ້ມີຄວາມໝາຍຫຍັງໃນທຸກວັນນີ້?

ຄຳຂວັນອັນສຳຄັນຈາກພຣະທັມຕອນນີ້ແມ່ນເຣື່ອງພຣະເຈົ້າເປັນຜູ້ບັງຄັບອະນາຄົດ. ເຖິງຈະເປັນເຣື່ອງເກີດຂຶ້ນໃນອະນາຄົດຕໍ່ຄົນຜູ້ຖືກຊ່ອຍໃຫ້ພົ້ນດ້ວຍພຣະເມສານ້ອຍ ຫລືການລົງໂທດມາເຖິງຄົນຜູ້ປະຕິເສດພຣະເມສານ້ອຍ, ພຣະເຈົ້າກໍຍັງເປັນຜູ້ບັງຄັບບັນຊາຢູ່ສເມີ.

ບົດຮຽນນີ້ໄດ້ເຕືອນພວກເຮົາວ່າ ມານມັນມີອຳນາດຫລາຍໃນໂລກຂອງພວກເຮົາອາສັຍຢູ່ນີ້. ໃນເມື່ອມານເຮັດຫຍັງກໍຕາມ ມານຢາກທຳລາຍຜູ້ທີ່ພຣະເຈົ້າສ້າງຄ້າຍຄືກັບພຣະອົງ. ແຕ່ໃຫ້ເຂົ້າໃຈວ່າມັນບໍ່ມີສິດແລະອຳນາດເທົ່າພຣະເຈົ້າ. ຄວາມມືດບໍ່ແມ່ນສິ່ງສຸດທ້າຍໃນສິ່ງຊົງສ້າງ ແຕ່ແສງສະຫວ່າງແມ່ນສິ່ງແລກ. ເໝືອນກັບການປຣາຊັຍບໍ່ແມ່ນຕອນຈົບ ແຕ່ແມ່ນຊັຍຊະນະອັນຍິ່ງໃຫຍ່ຂອງພຣະເຈົ້າຕ່າງຫາກ.

## <u>ຄຳຖາມ</u>

12. ໃນບົດຮຽນນີ້ແມ່ນໃຜເປັນດາວຕົກຈາກຟ້າ?
13. ເປັນດ້ວຍເຫດໃດພວກເຮົາຈິ່ງມີບັນຫາທີ່ຮັບວ່າພຣະເຈົ້າເປັນຜູ້ຕັດສິນສຸດທ້າຍຕໍ່ຄົນຜິດບາບໃນໂລກນີ້?
14. ເປັນດ້ວຍເຫດໃດ້ຝູງຕັກແຕນແລະແມງງອດເປັນສິ່ງພຣະເຈົ້າໃຊ້ໃນການລົງໂທດມະນຸສໂລກ?
15. ໃນທາງໃດທີ່ທ່ານບໍ່ຫົວຊາເຖິງອຳນາດຂອງມານໃນໂລກນີ້?
16. ທ່ານຈຳໄດ້ບໍ່ເວລາໃດພຣະເຈົ້າໄດ້ສົ່ງຄົນໄປບອກທ່ານໃຫ້ຖິ້ມໃຈເກົ່າແລະເອົາໃຈໃໝ່?

*ສບ. ບຸນຈັນ ວົງສຸຣິດທ໌*

# ບົດຮຽນທີ 7

## ຍຸດພັກຕອນທີສອງ: ພຍານສັດຊື່

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້**: ພຣະນິມິດ 10: 1-9; 11: 1-15

**ພູມຫລັງຂອງພຣະຄັມພີ**: ພຣະນິມິດ 10---11

**ຈຸດສຳຄັນສຳລັບບົດຮຽນນີ້**: ຜູ້ຮັບໃຊ້ຂອງພຣະເຈົ້າຈະສືບຕໍ່ໃນການເປັນພຍານເຖິງຈະມີການຕໍ່ຕ້ານ.

**ຄຳຖາມເພື່ອຄົ້ນຄວ້າ**: ຜູ້ຕິດຕາມພຣະຄຣິດຈະເຮັດຢ່າງໃດເວລາຖືກຕໍ່ຕ້ານເພາະຄວາມເຊື່ອຂອງພວກເຂົາ?

**ຈຸດປະສົງຂອງການສຶກສານີ້**: ເພື່ອຊອກຫາວິທີເປັນພຍານຢ່າງສັດຊື່ທີ່ໄດ້ບັລຍາຍໄວ້ໃນເວລາຍຸດພັກລະຫວ່າງປິດສາກ.

**ອ່ານລວບ**: ເຖິງວ່າຫລາຍຢ່າງຈະບໍ່ເປັນໄປຕາມທີ່ພວກເຮົາຄິດໄວ້, ພວກເຮົາຈະຕ້ອງສັດຊື່ຮັບໃຊ້ພຣະຄຣິດ ແລະຈະຕ້ອງເປັນພຍານເພື່ອພຣະອົງຢ່າງກ້າຫານ.

### ຄຳນຳ

ທ່ານໂປລີຂາບ ເປັນຄຣິສຕຽນໃນສັດຕະວັດທີສອງ ແລະຮັບໃຊ້ໃນຖານະພຣະປົກຄອງທີ່ເມືອງຊະມີນາ ໃນ ຄ.ສ 155, ອຳນາດການປົກຄອງຂອງໂຣມັນໄດ້ສັ່ງຈັບທ່ານ; ເມື່ອໂປລີຂາບບໍ່ຍອມປະຖິ້ມຄວາມເຊື່ອ, ພວກເຂົາກໍໃຊ້ໄຟເຜົາທ່ານທີ່ຫລັກເສົາ. ມີຄຳກ່າວໄວ້ວ່າ ຜູ້ມີອຳນາດໄດ້ສັ່ງໂປລີຂາບວ່າ "ຈົ່ງປະຕິເສດພຣະຄຣິດຂອງທ່ານ, ຫລືທ່ານຈະຕາຍ;" ໂປລີຂາບຕອບວ່າ "ຈົ່ງຮັບພຣະຄຣິດ, ແລະທ່ານຈະມີຊີວິດ." ໂປລີຂາບໄດ້ສະແດງຄວາມກ້າຫານໃນການເປັນພຍານເຣື່ອງພຣະຄຣິດ ເໝືອນກັບພຍານສອງຄົນມີພວກເຮົາຈະເຫັນໃນບົດຮຽນນີ້. ຖ້າມກາງຄົນທັງຫລາຍທີ່ບໍ່ຍອມຮັບຄຳພຍານຂອງທ່ານ ແລະການຕໍ່ສູ້ກັບສັດຮ້າຍຈາກນະຮົກ, ພຍານທັງສອງສືບຕໍ່ການເປັນພຍານກ່ຽວກັບຄວາມຈິງເຣື່ອງພຣະຄຣິດ.

ບົດຮຽນນີ້ຈະຄົ້ນຄວ້າເຣື່ອງມ້ວນໜັງສື, ເບິ່ງພຶດຕິການຂອງພຍານທັງສອງ, ການຕາຍຂອງພຍານເພາະມືຂອງສັດຮ້າຍຈາກນະຮົກ, ການຄືນຊີວິດ ແລະການກັບຄືນສູ່ສວັນຂອງພວກເຂົາເຈົ້າ.

### 1. ***ໜັງສືມ້ວນ***: (*ພຣະນິມິດ* 10: 1-9)

ໃນນິມິດຂອງໂຢຮັນ, ພວກເຮົາເຫັນເວລາຍຸດພັກອີກເທື່ອນຶ່ງກ່ອນສຽງແກທີເຈັດ. ເທວະດາຜູ້ມີອຳນາດຕົນນຶ່ງໄດ້ຊົງປາກົດ, ມີເມກເປັນຜ້າຄຸມຕົວ, ມີຮຸ້ງກິນນ້ຳເປັນມົງກຸດ, ແລະມີໃບໜ້າເປັນແສງເໝືອນຕາເວັນ (ພນມ 10: 1); ເທວະດາຕົນນີ້ມີຮູບຮ່າງໃຫຍ່; "ເພິ່ນເອົາຕີນຂວາຢຽບນ້ຳທະເລ ແລະເອົາຕີນຊ້າຍຢຽບເທິງບົກ" (10: 2). ໃນມືຂອງເທວະດາມີໜັງສືມ້ວນນ້ອຍ ແລະເພິ່ນຮ້ອງສຽງດັງ; ຫລັງຈາກນັ້ນສຽງຟ້າຮ້ອງທັງ

ເຈັດກໍກ່າວຕອບ (10: 3). ສຽງຟ້າຮ້ອງສະແດງເຖິງຣິດອຳນາດຂອງພຣະເຈົ້າຊົງປາກົດ ແລະນ້ຳເບີເຈັດບອກເຖິງຄວາມຄົບບໍຣິບູນ.

ພຣະເຈົ້າໄດ້ຊົງຕອບຄຳອ້ອນວອນຂອງໄພ່ພົນຂອງພຣະອົງ ແລະການຮ້ອງຂອງເທວະດາ. ໂຢຮັນກຳລັງຈະບັນທຶກສິ່ງທີ່ເກີດຂຶ້ນ ແຕ່ສຽງຈາກສວັນສັ່ງທ່ານໃຫ້ຢຸດ (10: 4). ຄຳສັ່ງໃຫ້ຢຸດຂຽນອາດຈະເປັນການບອກວ່າເວລາໝົດແລ້ວສຳລັບການຕັກເຕືອນຄົນໃນໂລກ; ພວກເຮົາສັງເກດເຫັນວ່າ ເທວະດາໄດ້ບອກວ່າ "ຈະບໍ່ມີການຊັກຊ້າອີກຕໍ່ໄປ" (10: 5-6). ການຕັກເຕືອນກ່ອນນັ້ນແມ່ນເພື່ອໃຫ້ມະນຸດກັບໃຈ; ແຕ່ການພິພາກສານີ້ຈະລົງໂທດຄົນຊົ່ວຊ້າ; "ແຜນການເລິກລັບຂອງພຣະເຈົ້າກໍສຳເຣັດຜົນ" (10: 7). ແຜນການເລິກລັບຂອງພຣະເຈົ້າໄດ້ຖືກເປີດເຜີຍໃນພຣະຄຳຂອງພຣະເຈົ້າ; ສິ່ງທີ່ພຣະອົງໄດ້ເປີດເຜີຍໃຫ້ໂຢຮັນເຫັນໄດ້ສຳເຣັດແລ້ວ.

ສຽງຈາກສວັນສັ່ງໃຫ້ໂຢຮັນຮັບເອົາໜັງສືມ້ວນຈາກເທວະດາແລະເອົາມາກິນ (10: 8-9), ຊຶ່ງອາດໝາຍຄວາມວ່າໂຢຮັນຈະສາມາດເຂົ້າໃຈສິ່ງຕ່າງໆໃນມ້ວນໜັງສື ແລະນຳສິ່ງເຫລົ່ານັ້ນໄປປະຕິບັດ. ໂຢຮັນຮູ້ສຶກວ່າເວລາຢູ່ໃນປາກໜັງສືນັ້ນກໍຫວານ ແຕ່ພໍໄປເຖິງທ້ອງໜັງສືນັ້ນກໍຂົມ (10: 10). ຄວາມຫວານເກີດຈາກການໄດ້ຮັບແລະເຂົ້າໃຈພຣະຄຳຂອງພຣະເຈົ້າ; ຄວາມຂົມມາຈາກຄວາມເຂົ້າໃຈໃນສິ່ງທີ່ຈະເກີດຂຶ້ນກັບຄົນຊົ່ວຊ້າທັງຫລາຍ ເພາະພຣະເຈົ້າກຳລັງຈະລົງໂທດສັດຕຣູຂອງພຣະອົງ.

## 2 <u>**ໄມ້ແທກ**:</u> (**ພຣະນິມິດ** 11: 1-2)

ສຽງຈາກສວັນສັ່ງໂຢຮັນໃຫ້ຮັບເອົາໄມ້ແທກ ແລະໄປແທກພຣະວິຫານ (11:1). ສຽງນັ້ນສັ່ງໃຫ້ແທກຂ້າງໃນຂອງວິຫານເທົ່ານັ້ນ ແລະສັ່ງບໍ່ໃຫ້ວັດແທກບໍຣິເວນຂ້າງນອກ "ເພາະບ່ອນນັ້ນໄດ້ມອບໃຫ້ພວກຄົນຕ່າງຊາດແລ້ວ" (11: 2). ຫລາຍຄົນເຂົ້າໃຈຄວາມໝາຍໃນຕອນນີ້ຕ່າງໆກັນ; ແຕ່ສ່ວນຫລາຍຍອມຮັບວ່າວິຫານເປັນຕົວແທນຂອງໄພ່ພົນທີ່ແທ້ຈິງຂອງພຣະເຈົ້າ ຄືຊົນຊາດອິສຣາເອນທີ່ແທ້; ພຣະເຈົ້າຈະປົກປ້ອງພວກເຂົາຈາກການທຳລາຍທີ່ຈະມາເຖິງ. ບາງຄົນເຊື່ອວ່າບໍຣິເວນຂ້າງນອກຂອງພຣະວິຫານໝາຍເຖິງບຸກຄົນທີ່ອ້າງຕົວເອງວ່າເປັນຄຣິສຕຽນ ແຕ່ຍັງມີພາກສ່ວນຢູ່ໃນໂລກນີ້. ຖ້າດັ່ງນັ້ນ ຄຣິສຕະຈັກຈະຖືກປົກປ້ອງ ແຕ່ຄົນທີ່ທຳທ່າເປັນຄຣິສຕຽນຈະບໍ່ຖືກປົກປ້ອງ. ອີກບາງຄົນກໍເຊື່ອວ່າທັງບໍຣິເວນຂ້າງໃນແລະຂ້າງນອກໝາຍເຖິງຄຣິສຕຽນທີ່ແທ້ຈິງສອງກຸ່ມ; ໄພ່ພົນຂອງພຣະເຈົ້າຈະຖືກຂົ່ມເຫງ, ແຕ່ຄຣິສຕະຈັກຈະຖືກປົກປ້ອງໄວ້.

ການຂົ່ມເຫງຄຣິສຕະຈັກຈະເກີດຂຶ້ນເປັນເວລາດົນເຖິງສີ່ສິບສອງເດືອນ (11: 2), ແລ້ວພຍານທັງສອງຈະປາກົດ "ແລະຈະປະກາດຖ້ອຍຄຳຂອງພຣະເຈົ້າໃນລະຫວ່າງພັນສອງຮ້ອຍຫົກສິບວັນ" (11: 3). ສິ່ງນີ້ໝາຍຄວາມວ່າການທຸກລຳບາກໄດ້ຖືກກຳນົດໄວ້ຕາມເວລາຂອງມັນ; ໂຢຮັນໄດ້ເຕືອນຜູ້ເຊື່ອໃນສມັຍນັ້ນວ່າພຣະເຈົ້າຈະຊົງດູແລແລະປົກປ້ອງພວກເຂົາ.

## 3. <u>**ພຍານທັງສອງ**:</u> (ພຣະນິມິດ 11: 3-15)

ພຍານທັງສອງທີ່ນຸ່ງເສື້ອທີ່ເຮັດດ້ວຍຜ້າກະສອບນັ້ນແມ່ນໃຜ? ຫລາຍຄົນເຊື່ອວ່າແມ່ນເອລີຢາ ແລະໂມເຊ; ພວກເຂົາເຈົ້າໄດ້ສະແດງຣິດອຳນາດເໝືອນເອລີຢາຜູ້ໄດ້ອ້ອນວອນບໍ່ໃຫ້ຝົນຕົກ ແລະເໝືອນໂມເຊຜູ້ໄດ້ສັ່ງພັຍອັນຕະລາຍຕ່າງໆໃສ່ຄົນເອຢິບ (11: 6). ບາງຄົນກໍເຊື່ອວ່າພຍານທັງສອງໝາຍເຖິງຄຣິສຕະຈັກ; ຖ້າເປັນຄຣິສຕະຈັກ, ແນ່ນອນພຣະເຈົ້າຈະຊົງປົກປ້ອງພຍານນີ້ຈົນກວ່າການເປັນພຍານຈະສຳເຣັດ (11: 7).

ມາເຖິງຕອນນີ້ໃນພຣະນິມິດ, ສັດຮ້າຍທີ່ອອກມາຈາກເຫວເລິກຈະຕໍ່ສູ້ພຍານທັງສອງ (11: 7); "ສັດຮ້າຍຈະຊະນະພວກເພິ່ນ ແລະຂ້າພວກເພິ່ນເສັຽ(ຂໍ້ 8) ສົບຂອງທ່ານທັງສອງຈະຢູ່ເທິງຖນົນຂອງມະຫານະຄອນ" (11: 7-8). ພຣະເຢຊູໄດ້ຖືກຄຶງໄວ້ທີ່ໄມ້ກາງແຂນ ໂດຍອຳນາດໃນທຳນອງດຽວກັນ. ສົບຂອງພຍານທັງສອງໄດ້ຖືກປະໄວ້ກາງຖນົນເປັນເວລາສາມວັນເຄິ່ງເພື່ອຄົນທັງໂລກຈະໄດ້ເຫັນ (11: 8-10). ການບໍ່ຝັງສົບຄົນຕາຍເປັນການໝິ່ນປມາດທີ່ສຸດສຳລັບຄົນຍິວ; ການປະສົບຂອງພຍານທັງສອງໄວ້ກາງຖນົນເປັນສັນຍາລັກບອກເຖິງທ່າທີຂອງຊາວໂລກຕໍ່ຄຣິສຕະຈັກຂອງພຣະຄຣິດ. ຊາວໂລກເກີດຄວາມພໍໃຈເມື່ອຄຣິສຕະຈັກຖືກຂົ່ມເຫງ ແລະພົບຄວາມລຳບາກ.

ຊາວໂລກອາດຈະຢຽບຍ່ຳຄຣິສຕະຈັກ ແຕ່ພຣະເຈົ້າຈະບໍ່ຊົງປະຖິ້ມຄຣິສຕະຈັກຂອງພຣະອົງ ແລະພຣະອົງຈະບໍ່ລືມພຣະສັນຍາທີ່ໄດ້ຊົງໃຫ້ໄວ້. ເພາະພຣະຄຣິດໄດ້ຊົງຄືນພຣະຊົນຈາກຄວາມຕາຍ, ຄຣິສຕະຈັກກໍຈະເປັນຄືນຈາກຕາຍ ຊຶ່ງພຍານທັງສອງໄດ້ເປັນຕົວແທນ (11: 11-12). ການທຸກທໍຣະມານ, ການຕາຍ, ແລະການດັບສູນຂອງຄຣິສຕະຈັກໃນເວລາສາມວັນເຄິ່ງຈະນຳໄປສູ່ການຄືນຈາກຄວາມຕາຍ, ສູ່ຊັຍຊະນະ ແລະການຖືກຮັບຂຶ້ນໄປຫາພຣະເຈົ້າຢູ່ເທິງສວັນ.

ໃນຂະນະດຽວກັນນັ້ນຄົນທັງຫລາຍທີ່ຢຽບຍ່ຳຄຣິສຕະຈັກຊຶ່ງຍັງຢູ່ໃນໂລກກໍຈະປະເຊີນກັບພຣະພິໂຣດຂອງພຣະເຈົ້າ ສິບເປີເຊັນຂອງຕົວເມືອງຈະພິນາດເພາະແຜ່ນດິນໄຫວຄັ້ງໃຫຍ່ ແລະຄົນປະມານເຈັດພັນຄົນຈະເສັຽຊີວິດ. ໃນພຣະທັມພຣະນິມິດ, ເລກ 7 ແລະເລກ 1000 ມີຄວາມໝາຍສຳຄັນ ເພາະ 7 ແລະ 1000 ໝາຍເຖິງຄວາມຄົບບໍຣິບຸນ; ຄູນ 7 ໃຫ້ 1000 ຈະບອກເຖິງຈຳນວນຂອງຜູ້ເສັຽຊີວິດທີ່ຈະສະແດງໃຫ້ເຫັນວ່າພຣະປະສົງຂອງພຣະເຈົ້າໄດ້ສຳເຣັດແລ້ວ ແລະແຜ່ນດິນໄຫວຈະບໍ່ຂ້າຄົນອີກ. ໃນນິມິດຂອງໂຢຮັນ, ເນື່ອງຈາກຄວາມຢ້ານກົວໃຫຍ່ໃນສິ່ງທີ່ພວກເຂົາໄດ້ເຫັນ, ຄົນທີ່ຍັງເຫລືອກໍຈະສັຣເສີນພຣະເຈົ້າແຫ່ງຟ້າສວັນ (ພນມ 11: 13). ພວກເຮົາກໍແນ່ໃຈວ່າຄວາມຢ້ານກົວນີ້ເກີດຂຶ້ນເປັນການຊົ່ວຄາວ ຫລືເປັນຢູ່ຕລອດໄປ ໂຢຮັນບອກວ່າພຣະເຈົ້າຈະຊົງປົກປັກຮັກສາຄຣິສຕະຈັກ; ຄຣິສຕະຈັກຕ້ອງການຄວາມໝັ້ນໃຈເນື່ອງຈາກມີອີກຫລາຍໆຢ່າງທີ່ຈະເກີດຂຶ້ນໃນພຣະທັມພຣະນິມິດ.

## <u>ຄວາມໝາຍແລະການປະຕິບັດ</u>

ພຣະຄຳໃນຕອນນີ້ເປັນການເຕືອນຄຣິສຕະຈັກ. ພວກເຮົາບໍ່ຮູ້ລາຍລະອຽດວ່າອະນາຄົດຈະເປັນຢ່າງໃດ ແຕ່ພວກເຮົາຮູ້ວ່າ: ອະນາຄົດຢູ່ໃນກຳມືຂອງຜູ້ຊົງເປັນມາ, ຜູ້ຊົງເປັນຢູ່, ແລະຜູ້ຈະຊົງເປັນ ເວລາອານາຈັກໂຣມໄດ້ພິນາດລົງ (ຫລືຄວາມຊົ່ວໄດ້ພິນາດລົງ), ພຣະເຈົ້າຈະຊົງຢູ່ທີ່ບັນລັງຂອງພຣະອົງ ແລະຈະຊົງຄຸ້ມຄອງທຸກຢ່າງຢູ່ ເໝືອນທີ່ພຣະອົງໄດ້ຊົງຄຸ້ມຄອງໂລກມາແລ້ວ.

ພຣະຄຳຕອນນີ້ເປັນຄຳຮ້ອງຂໍ; ຫລາຍໆເທື່ອ ໂຢຮັນຂໍໃຫ້ການລົງໂທດຂອງພຣະເຈົ້າມີຂອບເຂດ. ພາກສ່ວນຂອງການລົງໂທດທີ່ເຫັນມານີ້ ເປັນການຕັກເຕືອນຄົນບາບທັງຫລາຍໃຫ້ຖິ້ມໃຈເກົ່າເອົາໃຈໃໝ່, ປ່ຽນແປງວິຖີຊີວິດ, ແລະຫັນໜ້າເຂົ້າຫາພຣະອົງກ່ອນທີ່ຈະຊ້າເກີນໄປ.

ພຣະຄຳນີ້ຍັງສະແດງເຖິງການຊົງຄອບຄອງຂອງພຣະເຈົ້າ; ພຣະອົງຍັງຊົງຄອງຣາຊ ເຖິງຕາພວກເຮົາບໍ່ສາມາດເຫັນໄດ້. ພວກເຮົາອາດຈະຮູ້ສຶກວ່າ ຊາຕານກຳລັງເປັນນາຍຢູ່ໃນໂລກ ແຕ່ພຣະເຈົ້າໄດ້ຊົງສະແດງເຖິງການຊົງເປັນຢູ່; ເມື່ອສັດຕຣູຖືກທຳລາຍ, ໂລກທັງໝົດກໍຈະເປັນຂອງພຣະເຈົ້າແລະພຣະຄຣິດເທົ່ານັ້ນ.

<u>ຄຳຖາມ:</u>

1. ເປັນຫຍັງເທວະດາຈຶ່ງເອົາຕີນນຶ່ງຢືນຢູ່ເທິງທະເລ ແລະອີກຕີນນຶ່ງຢືນຢູ່ເທິງບົກ?

2. ເປັນຫຍັງສຽງຈາກສວັນຈຶ່ງບໍ່ອະນຸຍາດໃຫ້ໂຢຮັນຂຽນສິ່ງທີ່ຮຽນຮູ້ຈາກຟ້າຮ້ອງທັງເຈັດ?

3. ເວລາພວກເຮົາກິນພຣະຄຳຂອງພຣະເຈົ້າ, ເປັນຫຍັງຈຶ່ງຫວານໃນປາກ ແລະຂົມໃນທ້ອງ?

4. ການທີ່ພະຍານທັງສອງຈະຕາຍເປັນເວລາສາມມື້ເຄິ່ງມີຄວາມໝາຍແນວໃດ?

5. ພວກເຮົາຈະຕຽມຕົວແນວໃດແດ່ເມື່ອຮູ້ວ່າວັນສຸດທ້າຍຈະມາເຖິງແນ່ນອນ?

*ສຄ*

# ບົດຮຽນທີ 8
# <u>ພວກຜູ້ເຊື່ອ ຕໍ່ສູ້ພະຍານາກ</u>

---

**<u>ຂໍ້ພຣະຄໍາພີສໍາລັບບົດຮຽນນີ້</u>**: ພຣະນິມິດ 12: 1-6, 13-17; 13: 1-4, 11-18

**<u>ພູມຫລັງຂອງພຣະຄໍາພີ</u>**: ພຣະນິມິດ 12-13

**<u>ຈຸດສໍາຄັນສໍາລັບບົດຮຽນນີ້</u>**: ໃນຂະນະທີ່ຄຣິສຕຽນຕໍ່ສູ້ກັບອໍານາດຊົ່ວ, ພວກເຮົາຈະຕ້ອງອົດທົນໃນຄວາມເຊື່ອ ເພາະພວກເຮົາໝັ້ນໃຈໃນຊັຍຊະນະຂອງພຣະເຈົ້າ.

**<u>ຄໍາຖາມເພື່ອຄົ້ນຄວ້າ</u>**: ອໍານາດຊົ່ວແນວໃດແດ່ທີ່ກໍາລັງຕໍ່ສູ້ພັນທະກິດຂອງພຣະເຈົ້າໃນປັດຈຸບັນນີ້?

**<u>ຈຸດປະສົງຂອງການສຶກສານີ້</u>**: ເພື່ອອະທິບາຍການກະທໍາຂອງອໍານາດຊົ່ວໃນບົດຮຽນນີ້ ແລະເພື່ອຈະຮູ້ວ່າຈະຕ້ອງຕໍ່ຕ້ານແນວໃດໃນສມັຍຂອງໂຢຮັນ ແລະສມັຍຂອງພວກເຮົາ.

**<u>ອ່ານລວບ</u>**: ພຣະເຈົ້າໄດ້ຊົງຂັບໄລ່ຊາຕານ, ຊຶ່ງມີພະຍານາກໃຫຍ່ສີແດງທີ່ມີເຈັດຫົວ ສິບເຂົາ, ເປັນຕົວແທນ ອອກຈາກສວັນ. ການຕໍ່ສູ້ລະຫວ່າງພຣະເຈົ້າ ແລະຄວາມຊົ່ວຊຶ່ງເລີ້ມໃນຕອນນັ້ນ ຍັງສືບຕໍ່ມາເຖິງທຸກມື້ນີ້.

## <u>ຄໍານໍາ</u>

ອາຈານສາອີດ ອາເບເດນີ ເປັນຄົນອະເມຣິກັນເຊື້ອຊາດອີຣານ ຖືກຕິດຄຸກຢູ່ປະເທດອີຣານເປັນເວລາສາມປີ; ທ່ານຖືກຄຸມຕົວໃນລະດູຮ້ອນປີ 2012 ແລະໄດ້ຖືກຕັດສິນລົງໂທດໃຫ້ຈໍາຄຸກແປດປີຖານເຕົ້າໂຮມຄົນເພື່ອຮຽນພຣະຄໍາພີທີ່ບ້ານພັກ. ພັລຍາແລະລູກຂອງເພິ່ນຊຶ່ງຢູ່ທີ່ອະເມຣິກາບໍ່ໄດ້ລົດລະໃນການຫາວິທີທາງເພື່ອຈະໃຫ້ອາຈານສາອີດໄດ້ຖືກປົດປ່ອຍ. ໃນຂະນະທີ່ຢູ່ໃນການຄຸມຂັງ, ອາຈານສາອີດໄດ້ຖືກຍົກຍ້າຍໄປຢູ່ຄຸກຫລາຍໆແຫ່ງ; ແຕ່ລະແຫ່ງທ່ານຕ້ອງພົບຄວາມລໍາບາກເພີ້ມຂຶ້ນ. ແມ່ນວ່າຈະຖືກຕົບຕີ, ຖືກທໍຣະມານ, ແລະຖືກທາລຸນທາງຈິດໃຈ, ອາຈານສາອີດບໍ່ຍອມປະຄວາມເຊື່ອ ຫລືປະຕິເສດພຣະເຢຊູຄຣິດ. ອາຈານສາອີດເປັນພຽງຜູ້ນຶ່ງຂອງຄຣິສຕຽນຈໍານວນຫລາຍໃນປະເທດຕ່າງໆທີ່ຖືກທໍຣະມານ ຫລືຖືກຂ້າເພາະຄວາມເຊື່ອຂອງພວກເຂົາເຈົ້າ.

ພຣະທັມພຣະນິມິດບອກໃຫ້ຮູ້ເຖິງຕົ້ນຕໍຂອງຄວາມຊົ່ວຮ້າຍ ແລະໜູນໃຈຄຣິສຕຽນໃຫ້ສູ້ທົນ ແລະຕັ້ງໝັ້ນໃນຄວາມເຊື່ອຈົນການມີຊັຍຊະນະຂອງພຣະຄຣິດຈະສໍາເຣັດລົງ. ພຣະເຢຊູຊົງເຕືອນພວກສິດວ່າບໍ່ໃຫ້ແປກໃຈເວລາໂລກກຽດຊັງພວກເຂົາເຈົ້າ ເພາະໂລກກໍໄດ້ກຽດຊັງພຣະອົງເຊັ່ນກັນ.

### 1. <u>ພະຍານາກ ແລະເດັກຊາຍ</u>: (ພຣະນິມິດ 12: 1-6, 13-17)

ພຣະທັມພຣະນິມິດໄດ້ຖືກຂຽນໄວ້ໃນສມັຍທີ່ຈັກພັດໂຣມກໍາລັງຄອງໂລກ, ທີ່ຮູ້ກັນໃນຕອນນັ້ນ; ພຣະເຈົ້າຊົງໃຫ້ໂຢຮັນຂຽນປຶ້ມນີ້ເພື່ອໜູນໃຈຄຣິສຕຽນທີ່ກໍາລັງຖືກຄວາມລໍາບາກເພາະການຂົ່ມເຫງຜູ້ເຊື່ອທີ່ຢູ່ໃຕ້ອໍາ

ນາດຂອງກຸງໂຣມ.   ຍັງມີການສົງສັຍວ່າໃນຕອນທີ່ໂຢຮັນໄດ້ຮັບພຣະນິມິດນັ້ນແມ່ນໃຜເປັນຈັກກະພັດປົກຄອງໂຣມ; ຫລາຍຄົນຄິດວ່າຄົງເປັນ ໂດມິຊຽນ ເພາະເພິ່ນເປັນຜູ້ສ້າງເຣື່ອງການນະມັສການຈັກກະພັດ.

ກຸງໂຣມຍອມຮັບຊາວຢິວເພາະພວກເຂົາເຈົ້ານະມັສການພຣະເຈົ້າອົງດຽວ; ໂຣມບໍ່ໄດ້ບັງຄັບໃຫ້ຊາວຢິວນະມັສການຈັກກະພັດ.   ແຕ່ໃນຕອນນັ້ນ ຄົນຢິວທີ່ມາເຊື່ອພຣະເຢຊູຈະຖືກໄລ່ອອກຈາກສາລາໂຮງທັມ ແລະໂຣມກໍບໍ່ໄດ້ຕ້ອນຮັບຄຣິສຕຽນເໝືອນທີ່ເຂົາເຈົ້າຍອມຮັບຄົນຢິວທີ່ຖືສາສນາຢູດາຍ. ໃນສັດຕະວັດທີສອງຈັກກະພັດໂຕຣເຈີນ ຂຶ້ນຄອງອຳນາດ; ເພິ່ນໄດ້ສັ່ງຈັບກຸມຄຣິສຕຽນຜູ້ທີ່ບໍ່ຍອມນະມັສການຈັກກະພັດແລະທໍຣະມານພວກເຂົາ. ຄຣິສຕະຈັກ, ຊຶ່ງເວົ້າເຖິງໃນພຣະທັມພຣະນິມິດ, ທີ່ຖືກການຂົ່ມເຫງແລະການທົດລອງ ພາກັນຈະປະຄວາມເຊື່ອ ເພື່ອໄປນະມັສການຈັກກະພັດ.

ພຣະທັມພຣະນິມິດ 12 ແລະ 13 ແນະນຳບຸກຄົນສຳຄັນສາມຄົນ: ຊາຕານ (ພະຍານາກ), ພຣະຄຣິດປອມ, ແລະຜູ້ປະກາດປອມ. ພວກເຂົາທັງສາມເປັນຜູ້ຕໍ່ຕ້ານພຣະເຈົ້າ ແລະໄພ່ພົນຂອງພຣະອົງ. ໂຢຮັນໄດ້ໃຊ້ເຄື່ອງໝາຍເພື່ອສື່ສານ; ເຄື່ອງໝາຍທີນຶ່ງໃນ ພຣະນິມິດ 12: 1-6 ແມ່ນຜູ້ຍິງທີ່ກຳລັງອອກລູກ. ຜູ້ຂຽນໃນສມັຍພຣະສັນຍາເດີມມັກເອີ້ນອິສຣາເອນວ່າຜູ້ຍິງກຳລັງຢູ່ໃນຄວາມທຸກລຳບາກ.
ນັກຂຽນຫລາຍຄົນເຊື່ອວ່າຜູ້ຍິງທີ່ກ່າວເຖິງໃນຕອນນີ້ແມ່ນອິສຣາເອນ ແລະມາຣີອາ  (ແມ່ຂອງພຣະເຢຊູ). ການໃຊ້ເຄື່ອງໝາຍເຊັ່ນດວງອາທິດ, ດວງເດືອນ, ແລະດວງດາວສິບສອງດວງ ຊີ້ໃສ່ຜູ້ຍິງຊຶ່ງເປັນເຄື່ອງໝາຍສຳລັບອິສຣາເອນທີ່ເປັນໄພ່ພົນຜູ້ຖືກໄຖ່ແລ້ວຂອງພຣະເຈົ້າ.   ລູກຊາຍນັ້ນແມ່ນພຣະເຢຊູ ຜູ້ໄດ້ຊົງບັງເກີດຈາກເຊື້ອສາຍຂອງໄພ່ພົນຜູ້ຖືກໄຖ່ແລ້ວຂອງພຣະເຈົ້າ.

ໂຢຮັນເອີ້ນງູບູຮານວ່າພະຍານາກ ເພາະເປັນງູໂຕດຽວທີ່ຫລອກລວງອາດາມແລະເອວາບໍ່ໃຫ້ເຊື່ອຟັງພຣະເຈົ້າ. ພະຍານາກມີເຈັດຫົວແລະສິບເຂົາ ແລະເທິງຫົວຂອງມັນມີມົງກຸດເຈັດອັນ. ໃນຂັ້ນຕໍ່ໄປພວກເຮົາຈະເຫັນວ່າ ຫົວໝາຍເຖິງພູ ແລະເຂົາໝາຍເຖິງກະສັດ. ຄົນໃນສມັຍນັ້ນເຂົ້າໃຈວ່າ ດວງດາວແມ່ນພວກເທວະດາ. ສະນັ້ນດວງດາວທີ່ຕົກລົງໃສ່ແຜ່ນດິນໂລກ ກໍແມ່ນພວກເທວະດາທີ່ປະຕິເສດພຣະເຈົ້າ. ໂຢຮັນບອກວ່າ "ພະຍານາກໄດ້ຟາດດວງດາວໃນທ້ອງຟ້າ ນຶ່ງສ່ວນສາມລົງໃສ່ແຜ່ນດິນໂລກ" (12: 4). ພຣະເຈົ້າໄດ້ຊົງລົງໂທດພວກເທວະດາແລະພະຍານາກໂດຍການຂັບໄລ່ພວກເຂົາອອກຈາກສວັນ.  ພວກເຮົາໄດ້ເຫັນວ່າເປົ້າໝາຍອັນສຸດຍອດຂອງຊາຕານຄືຕໍ່ຕ້ານພຣະເຢຊູເພື່ອບໍ່ໃຫ້ພຣະອົງສຳເຣັດພັນທະກິດໃນໂລກ;  ສະນັ້ນເວລາພຣະເຢຊູສເດັດຂຶ້ນສູ່ສວັນຫລັງຈາກຄືນມາຈາກຄວາມຕາຍ,   ພຣະອົງໄດ້ຊົງຊະນະແຜນຂອງຊາຕານແລ້ວ. ພຣະເຈົ້າໄດ້ຊົງປົກປັກຮັກສາຜູ້ຍິງແລະລູກຂອງນາງ;  ພຣະຄຳບອກວ່າ ລູກຊາຍຂອງນາງ  "ຈະປົກຄອງປະຊາຊາດທັງປວງດ້ວຍຄ້ອນເຫລັກ" (12: 5);  ໃນຕອນນີ້ ໂຢຮັນໄດ້ເວົ້າເຖິງພຣະເຢຊູ ຜູ້ຊົງເປັນກະສັດ;   ທຸກໆປະເທດຈະຢູ່ໃຕ້ອຳນາດຂອງພຣະອົງ.   ເຣື່ອງນີ້ໝາຍເຖິງອະນາຄົດ  ແລະໂລກໃນອະນາຄົດ. ພຣະທັມພຣະນິມິດໃນພາກນີ້ໄດ້ເປີດເຜີຍພຣະປະສົງຂອງພຣະເຈົ້າໃນພຣະເຢຊູຄຣິດ. ຂໍ້ 12:13 ເວົ້າເຖິງເຫດການທີ່ກ່າວມາແລ້ວໃນຂໍ້ 12:4. ຊາຕານບໍ່ສາມາດເອົາຊະນະຝູງເທວະດາໂດຍການນຳຂອງມີກາເອນລາວໄດ້ຖືກຖິ້ມລົງມາຍັງແຜ່ນດິນໂລກ ຊາຕານຈຶ່ງໄດ້ຕັ້ງຕົວຕໍ່ສູ້ໄພ່ພົນຂອງພຣະເຈົ້າແຕ່ນັ້ນມາ(12:7-12).

## 2. <u>**ສັດຮ້າຍຈາກທະເລ**</u>: (**ພຣະນິມິດ** 13: 1-4, 11-18)

ຫລາຍຄົນກໍບໍ່ໝັ້ນໃຈວ່າສັດຮ້າຍໂຕນີ້ແມ່ນໝາຍເຖິງຜູ້ໃດ. ຄົນຢິວສ່ວນຫລາຍຄິດວ່າສັດຮ້າຍໂຕທີສີ່ນັ້ນແມ່ນກຸງໂຣມ ໂດຍອີງໃສ່ພວກສັດສີ່ໂຕໃນພຣະທັມດານີເອນ 7: 1-8. ພວກເຮົາອາດບໍ່ຮູ້ແນ່ນອນວ່າສັດຮ້າຍໂຕນີ້ໝາຍເຖິງຜູ້ໃດ, ແຕ່ພວກເຮົາຮູ້ແນ່ວ່າສັດໂຕນີ້ເປັນເຄື່ອງໝາຍຂອງຜູ້ຕໍ່ສູ້ພຣະຄຣິດ. ມື້ນຶ່ງຢູ່ໃນໂລກນີ້, ຊາຕານຈະໃຫ້ອຳນາດກັບສັດຮ້າຍ; ສັດຮ້າຍໂຕນີ້ຄືພຣະຄຣິດປອມ ແລະຄົນທັງຫລາຍໃນໂລກຈະຕິດຕາມແລະນະມັສການສັດນັ້ນ. ຄຳຖາມ: ໃຜຈະປາບສັດນີ້ໄດ້? ຄຳຕອບ: ພຣະຄຣິດຜູ້ດຽວ.

ໃນຂໍ້ 13: 11, ໂຢຮັນໄດ້ແນະນຳສັດຮ້າຍໂຕທີສອງ. ສັດຮ້າຍໂຕນີ້ຄືຜູ້ປະກາດປອມ ມັນມີຮູບຮ່າງເໝືອນແກະນ້ອຍ ແຕ່ມັນເວົ້າເໝືອນພະຍານາກ. ຜູ້ປະກາດແທ້ພາຄົນນະມັສການພຣະເຈົ້າ ແຕ່ຜູ້ປະກາດປອມພາຄົນນະມັສການສັດຮ້າຍ. ສັດຮ້າຍໂຕນີ້ຍິ່ງໃຫຍ່ກວ່າຜູ້ປະກາດທັງຫລາຍ; ສອງເຂົາຂອງມັນໝາຍເຖິງອຳນາດ; ຜູ້ປະກາດປອມຈະໃຊ້ແຜນເສຖກິດເພື່ອຄວບຄຸມຄົນທັງໂລກ. ໃນສມັຍຂອງໂຢຮັນ, ບຸກຄົນທີ່ບໍ່ຢູ່ໃນລະບົບເສຖກິດຈະຕ້ອງພົບກັບຄວາມອຶດຫິວ ຫລືຕາຍ (ຜູ້ທີ່ຢູ່ໃນລະບົບຈະຕ້ອງນະມັສການພຣະທຽມ ຫລືກິນເນື້ອທີ່ຖືກນຳໄປຖວາຍໃຫ້ພຣະທຽມແລ້ວ).

ພຣະນິມິດ 13: 16-17 ເວົ້າເຖິງເຄື່ອງໝາຍຊຶ່ງອາດເປັນວິທີຕິດຕາມຜູ້ທີ່ນະມັສການສັດຮ້າຍ ແລະຜູ້ທີ່ບໍ່ນະມັສການສັດນັ້ນ. ຄົນທີ່ຈະຊື້ແລະຂາຍຕ້ອງມີເຄື່ອງໝາຍນັ້ນ; ບຸກຄົນສາມາດໄດ້ຮັບເຄື່ອງໝາຍຖ້າເຂົາຍອມນະມັສການ ແລະຍອມຢູ່ໃຕ້ຂໍ້ບັງຄັບຂອງສັດຮ້າຍ.

ເລກຂອງສັດຮ້າຍໂຕທີນຶ່ງແມ່ນ 666 (13:18) ເລກນີ້ເປັນຕົວແທນຂອງຜູ້ຕໍ່ສູ້ພຣະຄຣິດ ແຕ່ບໍ່ມີໃຜຮູ້ຄວາມໝາຍທີ່ແທ້ຂອງຕົວເລກນີ້ ຫລາຍຄົນເວົ້າເຖິງພຣະເຈົ້າໄດ້ຊົງສ້າງໂລກເປັນເວລາ 6 ວັນ; 6 ເປັນເລກສຳລັບຄົນ; 6 ເປັນຕົວເລກມາກ່ອນ 7 ຊຶ່ງໝາຍເຖິງຄວາມຄົບບໍຣິບູນ. ຂຽນຕົວເລກສຳລັບຄົນລົງສາມເທື່ອກໍເລີຍກາຍເປັນຕົວເລກທີ່ໝາຍເຖິງຄວາມຊົ່ວຊ້າ. ມີອີກຕຳຣານຶ່ງທີ່ຄົນຢິວແລະຄຣິສຕຽນໃນສມັຍແລກຄຸ້ນເຄີຍຄືການເອົາຕົວເລກແທນຕົວອັກສອນເພື່ອຊອກຫາຄວາມໝາຍຂອງຄຳເວົ້າ ຫລືຊື່ຄົນ; ຫລາຍຄົນເຫັນເລກ 666 ໃນຊື່ຂອງກາຍຊາ ເນໂຣ; ແລະຖ້າແປເປັນພາສາເຮັບເຣີຄຳວ່າສັດຮ້າຍຕົວເລກຈະອອກມາ 666. ຄົນໃນສມັຍຂອງໂຢຮັນເຂົ້າໃຈເລກ 666 ດີ ເພາະເລກນີ້ເປັນສັນຍານເຕືອນໃຫ້ຄອຍເບິ່ງບຸກຄົນແລະພຶດຕິກັມທີ່ຈະຕໍ່ສູ້ພຣະຄຣິດ.

### <u>ຄວາມໝາຍແລະການປະຕິບັດ</u>

ຊາຕານເຄື່ອນໄຫວໃນໂລກເໝືອນກັບສິງໂຕທີ່ໂອ່ຍຄາງ ເພາະມັນຮູ້ວ່າເວລາຂອງຕົນເຫລືອໜ້ອຍເຕັມທີແລ້ວ. ຄຳເຕືອນຂອງໂຢຮັນສຳລັບເຈັດຄຣິສຕະຈັກໃນພຣະທັມພຣະນິມິດ ເປັນການເຕືອນທີ່ເໝາະສົມສຳລັບຄຣິສຕະຈັກໃນປັດຈຸບັນ. ພວກເຮົາບໍ່ໄດ້ຕໍ່ສູ້ກັບເນື້ອໜັງແລະເລືອດ, ແຕ່ຕໍ່ສູ້ຝ່າຍວິນຍານ. ສະນັ້ນພວກເຮົາຈະບໍ່ສາມາດຕໍ່ສູ້ດ້ວຍເຫື່ອແຮງຂອງເຮົາ; ຄຣິສຕຽນຕ້ອງໃຊ້ພຣະຄຳ, ພຣະວິນຍານ, ແລະການອ້ອນ

ວອນເປັນອາວຸດຕໍ່ສູ້ຊາຕານ. ການຜ່າຍແພ້ຂອງຊາຕານໂດຍນ້ຳມືຂອງພຣະຄຣິດເຮັດໃຫ້ພວກເຮົາມີກຳລັງໃຈສູ້ຕໍ່ໄປ, ບໍ່ວ່າການຕໍ່ສູ້ຈະມີຕໍ່ໄປອີກນານເທົ່າໃດກໍຕາມ.

<u>ຄຳຖາມ:</u>

1. ການຮູ້ຈັກເຣື່ອງອະນາຄົດຊ່ວຍພວກເຮົາໃຫ້ດຳເນີນຊີວິດເພື່ອພຣະຄຣິດໃນມື້ນີ້ວິທີໃດ?
2. ເປັນຫຍັງພວກເຮົາຈຶ່ງຮູ້ສຶກວ່າຊາຕານກຳລັງຊະນະ?
3. ເປັນຫຍັງພຣະທັມພຣະນິມິດຈຶ່ງເປັນປື້ມທີ່ເລິກລັບຊັບຊ້ອນແທ້?
4. ທ່ານເຫັນຂໍ້ມູນຂອງສົງຄາມຝ່າຍວິນຍານໃນເວລານີ້ບໍ່?
5. ທ່ານໄດ້ຕຽມຕົວວິທີໃດແດ່ເພື່ອສົງຄາມຝ່າຍວິນຍານ?
6. ບັລຍາຍສົງຄາມຝ່າຍວິນຍານທີ່ທ່ານໄດ້ຕໍ່ສູ້ໃນລະຍະທີ່ຜ່ານມາ?

*ສຄ*

# ບົດຮຽນທີ 9
# <u>ກຳລັງຂອງຄວາມຊົ່ວຖືກຕັດສິນ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້</u>**: ພຣະນິມິດ 14: 1-13

**<u>ພູມຫລັງຂອງພຣະຄັມພີ</u>**: ພຣະນິມິດ 14

**<u>ຈຸດສຳຄັນສຳລັບບົດຮຽນນີ້</u>**: ໄພ່ພົນຂອງພຣະເຈົ້າສາມາດໝັ້ນໃຈໄດ້ວ່າພຣະເຈົ້າຈະຊົງຕັດສິນພວກຜູ້ຕໍ່ສູ້ຢ່າງຮ້າຍແຮງ.

**<u>ຄຳຖາມເພື່ອຄົ້ນຄວ້າ</u>**: ການຕິດຕາມພຣະເຈົ້າຄຸ້ມຄ່າບໍ່?

**<u>ຈຸດປະສົງຂອງການສຶກສານີ້:</u>** ເພື່ອເບິ່ງຄວາມໝາຍຂອງຄຳສອນໃນພຣະຄຳຕອນນີ້ ກ່ຽວກັບການຕັດສິນຂອງພຣະເຈົ້າ.

**<u>ອ່ານລວບ</u>**: ໂຍຮັນໜູນໃຈຜູ້ອ່ານດ້ວຍຄວາມຈິງວ່າການຕໍ່ສູ້ອາດຈະຮ້າຍແຮງ ຫລືເຖິງຂັ້ນຕາຍ ແຕ່ພຣະເຈົ້າຈະຊົງທຳລາຍທຸກໆກຳລັງທີ່ຕໍ່ສູ້ພວກເຂົາ.

## <u>ຄຳນຳ</u>

ເອດອບ ຮິດເລີ ຂ້າຕົວເອງດ້ວຍປືນທີ່ກຸງເບີລິນໃນວັນທີ 30 ເດືອນ 4 ປີ 1945. ສາດາມ ຮູສເຊນຖືກປະຫານຊີວິດວັນທີ 30 ເດືອນ 12 ປີ 2006 ທະຫານຈາກໜ່ວຍຮົບພິເສດຂອງເນວີຍົງແລະຂ້າ ໂອສາມາ ເບນລາເດັນທີ່ປະເທດປາກີສະຖານໃນວັນທີ 2 ເດືອນ 5 ປີ 2011. ເຣື່ອງຂອງຄົນຊົ່ວຮ້າຍມີເຕັມຢູ່ໃນປຶ້ມປະວັດສາດ. ພວກເຂົາມີສິ່ງນຶ່ງທີ່ເໝືອນກັນຄືການຢາກຄອງໂລກ ແລະຫລາຍຄົນກໍໄດ້ຕາຍໄປກ່ອນທີ່ຈະສຳເຣັດເປົ້າໝາຍ. ແນ່ນອນທີ່ສຸດໃນເວລາບໍ່ດົນກໍຈະມີຄົນໃໝ່ຂຶ້ນມາແທນພວກເຂົາ, ແຕ່ຈະບໍ່ມີກຳລັງໃດໆທີ່ຈະສາມາດຄອງໂລກນີ້ໄດ້. ແຜ່ນດິນນີ້ແລະທຸກຢ່າງເທິງຂີ້ດິນເປັນຂອງພຣະເຈົ້າ. ພຣະອົງຈະຊົງຊະນະຄວາມໂຫດຮ້າຍຕ່າງໆ ແລະໄຊຊະນະຈະເປັນຂອງພຣະອົງຕລອດໄປເປັນນິດ.

## 1. <u>ແສນສີ່ໝື່ນສີ່ພັນຄົນ:</u> (ພຣະນິມິດ 14: 1-5)

ໃນພຣະນິມິດ 7, ໂຍຮັນໄດ້ຂຽນເຣື່ອງຄົນ 144, 000 ຄົນຊຶ່ງມາຈາກສິບສອງຕະກຸນຂອງອິສຣາເອນທີ່ໄດ້ຖືກປະທັບຕາ ແລະຖືກແຍກໄວ້. ພວກເຂົາໄດ້ໝາຍທີ່ໜ້າຜາກຊຶ່ງໝາຍເຖິງກຸ່ມບຸກຄົນທີ່ຖືກໄຖ່ໄວ້. ເຄື່ອງໝາຍນັ້ນຈະຊ່ວຍພວກເຂົາໃຫ້ສາມາດສູ້ທົນຈົນກວ່າຄວາມທຸກລຳບາກຄັ້ງໃຫຍ່ຈະສິ້ນສຸດ. ຄົນແສນສີ່ໝື່ນສີ່ພັນຄົນນີ້ປາກົດຕົວໃນບົດຮຽນນີ້ໃນຖານະທະຫານຂອງພຣະເມສານ້ອຍ ເພື່ອຕໍ່ສູ້ບຸກຄົນທີ່ຢູ່ຝ່າຍສັດຮ້າຍ ແລະທີ່ໄດ້ຮັບເຄື່ອງໝາຍຈາກມັນທີ່ໜ້າຜາກຂອງພວກເຂົາ.

ສະຖານທີ່ ຊຶ່ງໄພ່ພົນຂອງພຣະເຈົ້າຈະຢືນຢູ່ມີຄວາມສຳຄັນ. ພູເຂົາຊີໂອນເຄີຍເປັນທີ່ພັກຂອງພຣະເຈົ້າໃນໂລກມະນຸດ; ຊີໂອນຄືບ່ອນທີ່ອິສຣາເອນຫວັງຈະໄດ້ເຫັນຄວາມພົ້ນແລະໄຊຊະນະ. ຊີໂອນເປັນບ່ອນທີ່

ພຣະເຈົ້າຈະຊົງຢູ່ເພື່ອເຮັດສົງຄາມ; ຊີໂອນຄືເຢຣູຊາເລັມໃໝ່ໃນພຣະທັມພຣະນິມິດ. ເຖິງເຢຣູຊາເລັມຈະຖືກທຳລາຍໂດຍທະຫານໂຣມໃນ ຄ.ສ 70 ກໍຕາມ, ຊົນຊາດຢິວມີຄວາມຫວັງວ່າພຣະເຈົ້າຈະຊົງສ້າງນະຄອນນີ້ຂຶ້ນໃໝ່ ແລະທຸກຄົນຍັງລໍຄອຍໃຫ້ວັນນັ້ນມາເຖິງ.

ໃນນິມິດຂອງໂຢຮັນ, ທ່ານໄດ້ເຫັນໄພ່ພົນຂອງພຣະເຈົ້າກຳລັງຮ້ອງເພງຢູ່ກັບພຣະເມສານ້ອຍ (ພນມ 5: 9 ແລະ 15: 2-3). ທັງສອງຄັ້ງ ຊັຍຊະນະຈະຕາມມາດ້ວຍການຮ້ອງເພງ. ໃນສມັຍນັ້ນການຮ້ອງເພງຈະມີຂຶ້ນຫລັງຈາກໄດ້ຮັບຊັຍຊະນະ. ໃນ ພນມ 14:3, ພວກ 144, 000 ຄົນໄດ້ຮ້ອງເພງໃໝ່ເພາະພວກເຂົາໄດ້ເຫັນຊັຍຊະນະຂອງພຣະເມສານ້ອຍ ສຽງເພງດັ່ງເໝືອນສຽງນ້ຳໄຫລແຮງ (14: 2) ເພາະມີຫລາຍຄົນກຳລັງຮ້ອງ.

ພວກ 144, 000 ຄົນເປັນຊາວຢິວ, ເປັນຜູ້ທີ່ບໍ່ມີຄວາມຊົ່ວ, ເປັນພົມມະຈາຣີ, ແລະເປັນຜູ້ທີ່ຖວາຍຕົວແດ່ພຣະເຈົ້າ (14: 3-4). ພຣະເຈົ້າໄດ້ຊົງໄຖ່ພວກເຂົາຈາກມວນມະນຸດເພື່ອເຮັດໃຫ້ພວກເຂົາເປັນຜູ້ບໍຣິສຸດ. ຄົນເຫລົ່ານີ້ຈະຕິດຕາມພຣະເມສານ້ອຍໄປຕລອດເວລາ ແລະພວກເຂົາຈະເວົ້າແຕ່ຄວາມຈິງ. ຄຣິສຕຽນຕ້ອງເວົ້າແຕ່ຄວາມຈິງບໍ່ວ່າຜົນປາກົດຈະເປັນຢ່າງໃດ.

## 2. <u>ເທວະດາມີຂ່າວປະເສີດ</u>: (ພຣະນິມິດ 14: 6-8)

ໃນພຣະນິມິດ 14: 6, ໂຢຮັນໄດ້ປ່ຽນຈາກຜູ້ທີ່ຖືກໄຖ່ໄປເວົ້າເຖິງພວກທີ່ບໍ່ໄດ້ຖືກໄຖ່ໃນໂລກເພື່ອເວົ້າເຖິງຄວາມແຕກຕ່າງກ່ຽວກັບອະນາຄົດຂອງຄົນແຕ່ລະພວກ. ເທວະດາຕົນທີນຶ່ງເວົ້າເຖິງການຕັດສິນຂອງຂ່າວປະເສີດ ເພາະຂ່າວປະເສີດເປັນພຣະຄຸນສຳລັບຜູ້ເຊື່ອ ແລະເປັນການລົງໂທດສຳລັບຜູ້ທີ່ປະຕິເສດ. ເທວະດາຕົນນີ້ປະກາດເຣື່ອງການຕັດສິນສຳລັບຜູ້ທີ່ຍັງຢູ່ໃນໂລກມະນຸດ. ເທວະດາບອກໃຫ້ຄົນນະມັສການພຣະເຈົ້າ ແທນທີ່ຈະນະມັສການສັດຮ້າຍ.

ເທວະດາຕົນທີສອງປະກາດວ່າ "ບາບີໂລນມະຫານະຄອນນັ້ນຫລົ້ມຈົມແລ້ວ" (14: 8). ບາບີໂລນເປັນສັນຍາລັກຂອງລະບົບການຂອງໂລກ ແລະໃນສມັຍນັ້ນແມ່ນໝາຍເຖິງກຸງໂຣມ. ຊົນຊາດຢິວຖືກເປັນຊະເລີຍທີ່ບາບີໂລນ ແລະໄດ້ຂຶ້ນກັບໂຣມ. ບາບີໂລນແລະໂຣມເປັນຜູ້ທຳລາຍພຣະວິຫານ. ທັງສອງໄດ້ພາອິສຣາເອນໃຫ້ນະມັສການຮູບໂຄຣົບ ແລະໃຫ້ດຳເນີນຊີວິດແບບຄົນຕ່າງຊາດ; ຄົນຢິວຈຳນວນຫລາຍບໍ່ໄດ້ເຮັດຢ່າງນັ້ນແຕ່ໄດ້ສັດຊື່ຕໍ່ພຣະເຈົ້າ. ໃນພຣະທັມພຣະນິມິດ, ບາບີໂລນໝາຍເຖິງລະບົບຊົ່ວຊ້າຂອງໂລກ.

ໃນຄາວສຸດທ້າຍ, ຫລາຍຄົນໄດ້ຫັນໄປເຊື່ອລະບົບໂລກເພາະຄຳສັນຍາເຣື່ອງຊັບສິນ, ຄວາມໝັ້ນຄົງ, ແລະຄວາມສຳເຣັດທີ່ຈະຕິດຕາມມາ. ຫລາຍຄົນໄດ້ຫລົງເຊື່ອແລະບໍ່ສາມາດແບ່ງແຍກສິ່ງດີແລະສິ່ງຮ້າຍຂອງໂລກນີ້. ພວກເຂົາພາກັນເຮັດສິ່ງຊົ່ວຊ້າ. ແຕ່ກົງກັນຂ້າມພວກ 144,000 ຄົນບໍ່ໄດ້ຫລົງກົນຂອງບາບີໂລນ; ພຣະທັມພຣະນິມິດໄດ້ເອີ້ນຜູ້ທີ່ຫລົງກົນຂອງບາບີໂລນວ່າເປັນໂສເພນີ.

## 3. <u>ເທວະດາມີຂ່າວເຣື່ອງດັບສູນ</u>: (ພຣະນິມິດ 14: 9-13)

ເທວະດາຕົນທີສາມສົ່ງຂ່າວໃຫ້ຜູ້ທີ່ຕິດຕາມສັດຮ້າຍ ແລະເຕືອນວ່າການເລືອກທາງງ່າຍເປັນການເລືອກທາງທີ່ນຳໄປສູ່ຄວາມພິນາດ; ຜູ້ທີ່ຕິດຕາມສັດຮ້າຍ (ໂລກ) ກໍຄືຜູ້ທີ່ເລືອກທາງອອກຈາກພຣະເຈົ້າ (ພນມ 13: 9-10). ແມ່ນວ່າຈະເຖິງຄາວນີ້ແລ້ວກໍຕາມ, ຄົນທັງຫລາຍຍັງມີໂອກາດເລືອກທາງວ່າຈະຕິດຕາມພຣະເຈົ້າ ຫລືຕິດຕາມສັດຮ້າຍ.

ຜູ້ທີ່ຕິດຕາມສັດຮ້າຍຊຶ່ງໄດ້ຮັບເຄື່ອງໝາຍທີ່ໜ້າຜາກ ຫລືມືຈະຕ້ອງຖືກພຣະພິໂຣດຂອງພຣະເຈົ້າ. ພຣະພິໂຣດຂອງພຣະເຈົ້ານັ້ນຮ້າຍແຮງກວ່າການທາລຸນຂອງສັດຮ້າຍສຳລັບໄພ່ພົນຂອງພຣະເຈົ້າ. ໂຢຮັນເວົ້າເຖິງການດື່ມຈອກແຫ່ງຄວາມໂກດຮ້າຍ (14:10). ເຫລົ້າແວງທີ່ສັດຮ້າຍເອົາໃຫ້ກໍນັບວ່າແຮງ ແຕ່ບໍ່ສາມາດປຽບກັບເຫລົ້າແວງແຫ່ງຄວາມໂກດຮ້າຍຂອງພຣະເຈົ້າ . ໄຟເປັນສັນຍາລັກຂອງການພິພາກສາ; ແຕ່ເມື່ອເພີ້ມມາດເຂົ້າໄປ, ການພິພາກສານັ້ນຖືວ່າທໍຣະມານຮ້າຍແຮງທີ່ສຸດ (13: 10-11). ຖ້າການທໍຣະມານນີ້ຈະເກີດຂຶ້ນໃນການພິພາກສາຄາວສຸດທ້າຍຕໍ່ໜ້າພວກເທວະດາ ສະແດງໃຫ້ເຫັນວ່າເທວະດາພວກນີ້ຈະຕ້ອງເປັນຜູ້ນຳການລົງໂທດລົງມາ. ຜູ້ທີ່ປະຕິເສດພຣະເມສານ້ອຍຈະຕ້ອງຍອມຮັບພຣະອົງ, ແຕ່ກໍຈະຊ້າເກີນໄປແລ້ວ.

ຄວັນແຫ່ງການທໍຣະມານຈະພຸ່ງຂຶ້ນຕລອດໄປເປັນນິດ ຊຶ່ງໝາຍຄວາມວ່າພວກຜູ້ທີ່ຕິດຕາມສັດຮ້າຍຈະຖືກທໍຣະມານຊົ່ວນິຣັນດອນການ (14: 11). ຜູ້ທີ່ຕິດຕາມພຣະເຈົ້າຈະນະມັສການພຣະອົງຕລອດວັນແລະຄືນໃນຂະນະທີ່ຜູ້ປະຕິເສດພຣະອົງຈະຖືກທໍຣະມານຊົ່ວລະຍະດຽວກັນ. ຄົນທັງຫລາຍທີ່ຕາຍໃນອົງພຣະຄຣິດຈະໄດ້ພັກຜ່ອນຕລອດໄປ; ຜູ້ທີ່ປະຕິເສດພຣະອົງກໍຈະບໍ່ໄດ້ພັກຜ່ອນ. ຄຳຂອງເທວະດາເປັນຄຳໜູນໃຈຜູ້ເຊື່ອໃຫ້ສັດຊື່ຖ້າມກາງຄວາມທຸກລຳບາກ, ໃຫ້ອົດທົນ, ໃຫ້ເຊື່ອຟັງ, ໃຫ້ສັດຊື່ຕໍ່ພຣະເຢຊູ. ຜູ້ເຊື່ອທັງຫລາຍຈະໄດ້ຮັບລາງວັນ. ຜູ້ເຊື່ອທີ່ອົດທົນ, ຕໍ່ໜ້າຂອງຄວາມຕາຍ, ກໍເປັນສຸກເພາະຈະໄດ້ພັກຜ່ອນຈາກວຽກງານ. "ຈິງຢູ່ແລ້ວ ເພື່ອພວກເຂົາຈະໄດ້ພັກຜ່ອນຈາກຄວາມອິດເມື່ອຍຂອງຕົນ ເພາະການງານທີ່ພວກເຂົາໄດ້ເຮັດນັ້ນ ກໍຕິດຕາມພວກເຂົາໄປ" (14: 12-13).

## <u>ຄວາມໝາຍແລະການປະຕິບັດ</u>

ການທົດລອງຈະຕ້ອງມີຢູ່ຕລອດໄປ, ບາງຄັ້ງພວກເຮົາກໍຢາກເຮັດແບບຊາວໂລກແທນທີ່ຈະຕິດຕາມທາງຂອງພຣະເຈົ້າ. ບາງຄັ້ງພວກເຮົາກໍເຫັນວ່າຜູ້ທີ່ບໍ່ຕິດຕາມພຣະເຈົ້າໄດ້ຈະເຣີນຮຸ່ງເຮືອງ ແຕ່ຜູ້ທີ່ສັດຊື່ຕໍ່ພຣະເຈົ້າໄດ້ພົບຄວາມລຳບາກ; ຄວາມຮູ້ສຶກເຊັ່ນນີ້ຈະມີຂຶ້ນເວລາພວກເຮົາວັດແທກທຸກຢ່າງຕາມວິທີຂອງໂລກນີ້. ຖ້າມກາງຄວາມວຸ້ນວາຍ, ຄຣິສຕຽນສາມາດມີຄວາມຫວັງເພາະພວກເຮົາຮູ້ວ່າພຣະເຢຊູໄດ້ຊົງຊະນະແລ້ວ. ຄຣິສຕຽນທຸກຄົນມີສ່ວນໃນໄຊຊະນະຂອງພຣະອົງ ແລະໃນວັນນຶ່ງໄຊຊະນະນີ້ກໍຈະປາກົດຂຶ້ນຕຼອດໄປເປັນນິດ. ໃຫ້ພວກເຮົາປະກາດພຣະສັນຍາເຣື່ອງໄຊຊະນະ ແລະພຣະສັນຍາອື່ນໆຂອງພຣະເຈົ້າດ້ວຍຄວາມຊື່ນບານ. ເວລາໃດພວກເຮົາປະກາດໄຊຊະນະໃນພຣະເຢຊູ, ຊາຕານຈະໄດ້ຮູ້ຕົວວ່າມັນຍັງເປັນຜູ້ຜ່າຍແພ້ຢູ່.

**<u>ຄຳຖາມ</u>**:

1. ທ່ານໄດ້ພົບຄວາມທຸກລຳບາກແນວໃດແດ່ ເພາະການຕິດຕາມພຣະເຢຊູ?

2. ການຮູ້ວ່າພຣະເຈົ້າຈະຊົງໃຫ້ລາງວັນກັບຜູ້ທີ່ສັດຊື່ ໄດ້ໜູນໃຈທ່ານຢ່າງໃດ?

3. ມີຫຍັງແດ່ໃນຊີວິດທ່ານທີ່ເປັນຕົວແທນຂອງສັດຮ້າຍ?

4. ທ່ານຈະອະທິບາຍຄວາມແຕກຕ່າງສອງຢ່າງຂອງຂ່າວປະເສີດວິທີໃດ; ພຣະຄຸນ ແລະການຕັດສິນ?

5. ເຣື່ອງຄົນ 144,000 ຄົນເຮັດໃຫ້ທ່ານຮູ້ສຶກແນວໃດ?

*ສຄ*

# ບົດຮຽນທີ 10
## <u>ເພງແຫ່ງຊັຍຊະນະ</u>

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ພຣະນິມິດ 15--16
**ພູມຫລັງຂອງພຣະຄັມພີ:** ພຣະນິມິດ 15--16
**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຈົ້າຊົງເປັນທຸກ ເພື່ອໃຫ້ມະນຸດເປັນສຸກ.
**ຄຳຖາມເພື່ອການຄົ້ນຄວ້າ:** ແຜນການພຣະເຈົ້າລົ້ມເຫລວບໍ່?
**ຈຸດປະສົງຂອງບົດຮຽນ:** ເພື່ອເຂົ້າໃຈຄວາມໝາຍຂອງເຈັດ

## <u>ບົດນຳ</u>

ພຣະທັມພຣະນິມິດນັບວ່າເປັນພຣະທັມທີ່ເຂົ້າໃຈຍາກສົມຄວນ ເພາະວ່າເປັນເຣື່ອງຂອງອັຄສາວົກໂຢຮັນໄດ້ເຫັນນິມິດເຣື່ອງຟ້າສວັນຊຶ່ງເປັນເຣື່ອງຂອງໂລກສິ້ນຍຸກແລະເຣື່ອງອະນາຄົດຂອງຄຣິສຕຽນ ໂດຍສະເພາະຢ່າງຍິ່ງແມ່ນໂຢຮັນບັນທຶກພັຍອັນຕະລາຍເຈັດຢ່າງທີ່ເຮົາກຳລັງຈະຮຽນໃນວັນນີ້.

### 1. <u>ພັຍເຈັດຢ່າງໂດຍເທວະດາເຈັດອົງ:</u> (ພຣະນິມິດ 15:1-8)

ພຣະເຈົ້າຊົງສຳແດງໃຫ້ອັຄສາວົກໂຢຮັນເຫັນນິມິດໂດຍເຫັນ " *ມີເທວະດາເຈັດຕົນຖືພັຍອັນຕະລາຍເຈັດຢ່າງ ເປັນພັຍອັນຕະລາຍຄັ້ງສຸດທ້າຍ ເພາະວ່າພຣະພິໂຣດຂອງພຣະເຈົ້າກໍຄົບຖ້ວນລົງດ້ວຍພັຍອັນຕະລາຍເຫລົ່ານັ້ນ* "( ຂໍ້ 1). ມີຄວາມໝາຍວ່າພຣະເຈົ້າຊົງພຣະພິໂຣດ(ໃຈຮ້າຍ) ໃນຄາວສຸດທ້າຍຂອງໂລກ, ເຣື່ອງນີ້ໄດ້ເຫັນໃນພາບພົດຕອນພຣະເຈົ້າຊົງນຳຊົນຊາດອິສຣາເອນອອກຈາກເອຢິບ ທີ່ພຣະເຈົ້າໄດ້ເຮັດພັຍອັນຕະລາຍໃຫ້ອີຢິບໃນຂະນະທີ່ເຂົາກົດຂີ່ຂົ່ມເຫງປະຊາຊົນຂອງພຣະອົງ, ແລະພຣະເຈົ້າອົງດຽວກັນນີ້ຈະນຳຄຣິສຕຽນຜູ້ເປັນໄພ່ພົນຂອງພຣະອົງໃຫ້ພົ້ນຈາກໂລກແຫ່ງຄວາມມືດມົນນີ້ໃນວັນສຸດທ້າຍເຊັ່ນກັນ. ໂຢຮັນໄດ້ນິມິດເຫັນເທວະດາທັງເຈັດຂອງພຣະເຈົ້າຖືຖ້ວຍແຫ່ງພຣະພິໂຣດຂອງພຣະເຈົ້າແລ້ວຖອກເທລົງສູ່ໂລກເຣື່ອງທີ່ໂຢຮັນເຫັນນິມິດນີ້ມີຄວາມໝາຍວ່າໂລກກຳລັງຈະສິ້ນຍຸກ, ພວກມານຊາຕານແລະບໍຣິວານຂອງມັນພ້ອມທັງຜູ້ຕໍ່ສູ້ພຣະຄຣິດແລະຜູ້ຕໍ່ສູ້ສາວົກຂອງພຣະອົງຈະຖືກພິພາກສາລົງໂທດຢ່າງໜັກ.

ພ້ອມກັນນັ້ນການເຫັນນິມິດຂອງໂຢຮັນຍັງມີຄວາມໝາຍໄປເຖິງພຣະພອນທີ່ເທວະດາຖອກອອກໃສ່ທຸກຄົນທີ່ເຊື່ອແລະຕິດຕາມພຣະເຢຊູ, ຄົນເຫລົ່ານີ້ແມ່ນຄຣິສຕຽນທັງຫລາຍທີ່ຜ່ານພົ້ນການທົດສອບດ້ວຍຄວາມທຸກຍາກລຳບາກນາໆປະການ ແລະມາບັດນີ້ບຸກຄົນເຫລົ່ານີ້ທີ່ຮ້ອງວ່າຄຣິສຕຽນຫລືວ່າທະຫານຂອງອົງພຣະຜູ້ເປັນເຈົ້ານັ້ນບັດນີ້ໄດ້ມາເຖິງຫລັກຊັຍແລ້ວ. ເມື່ອເຖິງຫລັກຊັຍແລ້ວ ເຂົາກໍຮ້ອງເພງແຫ່ງຊັຍຊະນະວ່າ,

" *ຂ້າແດ່ພຣະເຈົ້າຜູ້ຊົງຣິດທານຸພາບອັນສູງສຸດ ພຣະຣາຊກິຈຂອງພຣະອົງກໍໃຫຍ່ຫລວງແລະໜ້າອັສຈັນ ຂ້າແດ່ອົງພຣະມະຫາກະສັດແຫ່ງປະຊາຊາດທັງປວງ ວິຖີທາງຂອງພຣະອົງກໍຍຸດຕິທັມແລະທ່ຽງຈິງ ຂ້າແດ່ອົງພຣະຜູ້ເປັນເຈົ້າ ໃຜຫນໍຈະບໍ່ຢໍາເກງພຣະອົງ ແລະຈະບໍ່ຖວາຍພຣະກຽດແດ່ພຣະນາມຂອງພຣະອົງ ເພາະວ່າພຣະອົງຜູ້ດຽວຊົງເປັນຜູ້ບໍຣິສຸດ ປະຊາຊາດທັງປວງຈະມານະມັສການຕໍ່ພຣະພັກພຣະອົງ ເພາະກິຈການອັນຍຸດຕິທັມຂອງພຣະອົງກໍປາກົດຕໍ່ພຣະພັກພຣະອົງກໍປາກົດແຈ້ງແລ້ວ" ຫລັງຈາກນີ້ຂ້າພະເຈົ້າໄດ້ເຫັນພຣະວິຫານໃນສວັນ ຄືສໍານັກຜ້າແຫ່ງຄໍາພຍານໄຂອອກ* " (ຂໍ້ 3-4).

" *ພຣະຣັສມີຂອງພຣະເຈົ້າແລະຈາກຣິດທານຸພາບຂອງພຣະອົງ ບໍ່ມີຜູ້ໃດສາມາດເຂົ້າໄປໃນພຣະວິຫານນັ້ນໄດ້ ຈົນກວ່າພັຍອັນຕະລາຍທັງເຈັດຂອງເທວະດາເຈັດຕົນນັ້ນຈະໄດ້ສິ້ນສຸດລົງ* "(ຂໍ້ 8). ນິມິດຂອງໂຢຮັນຕອນນີ້ໄດ້ສະທ້ອນໃຫ້ເຫັນໃນສມັຍພຣະເຈົ້າຊົງນໍາຊົນຊາດອິສຣາເອນ ໃນຂະນະທີ່ທະຫານເອຢິບໄລ່ລ້າຕາມຫລັງຄື ພຣະເຈົ້າໄດ້ຊົງເຮັດໃຫ້ນໍ້າທະເລແຫ້ງເປັນຮ່ອມເພື່ອໃຫ້ຊາວອິສຣາເອນຍ່າງຜ່ານກາງທະເລນັ້ນໄປ ສ່ວນພວກທະຫານເອຢິບເມື່ອຕິດຕາມໄປ ນໍ້າທະເລທີ່ແຫ້ງນັ້ນກໍກັບມາຖລົ່ມທໍາລາຍພວກທະຫານເສັຽຈົນກ້ຽງ (ອົບພະຍົບ 14).

" *ເທວະດາເຈັດຕົນທີ່ຖືພັຍອັນຕະລາຍທັງເຈັດໄດ້ອອກມາຈາກພຣະວິຫານນັ້ນ ນຸ່ງຫົ່ມຜ້າປ່ານເນື້ອລະອຽດເສາະໃສ ແລະມີສາຍຮັດຄໍາຮັດທີ່ຫນ້າເອິກ* " (ຂໍ້ 6). ຄໍາວ່າຜ້າປ່ານເນື້ອດີລະອຽດເສາະໃສ ມີຄວາມໝາຍວ່າການກະທໍາຂອງເທວະດານັ້ນແມ່ນເຮັດຕາມພຣະດໍາຣັດຂອງອົງພຣະຜູ້ເປັນເຈົ້າຢ່າງຂາວສະອາດສົດໃສ, ເທວະດາທັງເຈັດອົງໄດ້ນໍາເອົາຂັນແຫ່ງພຣະພິໂຣດຂອງພຣະເຈົ້າເພື່ອຖອກເທໃສ່ຄົນທີ່ບໍ່ເຊື່ອຟັງໃຫ້ໄດ້ຮັບພັຍອັນຕະລາຍ, ໃນຂະນະທີ່ພຣະເຈົ້າຊົງສະຖິດໃນພຣະວິຫານນັ້ນໄດ້ເກີດມີຄວັນໄຟປົກຄຸມພຣະວິຫານຊຶ່ງສະແດງເຖິງຣິດອໍານາດຂອງພຣະອົງປົກຄຸມໄວ້ ດັ່ງທີ່ໄດ້ເຫັນມາແລ້ວໃນສມັຍໂມເຊນໍາອິສຣາເອນອອກຈາກເອຢິບ, ໃນຂະນະທີ່ມີໝອກຫລືຄວັນໄຟປົກຄຸມຢູ່ນັ້ນບໍ່ມີໃຜສາມາດຫລືອະນຸຍາດໃຫ້ເຂົ້າໄປຢ່າງເດັດຂາດ (ອ່ານອົບພະຍົບ 40:).

## 2. <u>ຂັນແຫ່ງພຣະພິໂຣດ</u>: (ພຣະນິມິດ 16:1-11)

ໂຢຮັນບອກວ່າເພິ່ນໄດ້ຍິນສຽງຂອງພຣະເຈົ້າດັງຈາກພຣະວິຫານວ່າ " *ຈົ່ງໄປເສັຽ ເອົາຂັນທັງເຈັດຫນ່ວຍທີ່ເຕັມໄປດ້ວຍພຣະພິໂຣດຂອງພຣະເຈົ້າຖອກເທລົງເທິງແຜ່ນດິນໂລກ* " (ຂໍ້ 1).ເຫດການທີ່ໂຢຮັນກໍາລັງເລົ່າເຖິງນີ້ເປັນຄາວສຸດທ້າຍຂອງໂລກ, ເທວະດາທັງເຈັດອົງໄດ້ຮັບໜ້າທີ່ມອບໝາຍຈາກອົງພຣະຜູ້ເປັນເຈົ້າຄົນລະຢ່າງຄື:

1. *ເທວະດາຕົນແຣກຈຶ່ງອອກໄປເອົາຂັນຂອງຕົນຖອກລົງເທິງແຜ່ນດິນໂລກ" ແລະຄົນທັງຫລາຍທີ່ມີເຄື່ອງຫມາຍຂອງສັດຮ້າຍ ແລະບູຊາຮູບຂອງມັນ ຈຶ່ງເກີດເປັນຝີຮ້າຍແຮງແລະເຈັບປວດ* (ຂໍ້ 2)..
2. *ເທວະດາຕົນທີສອງໄດ້ຖອກຂັນຂອງຕົນລົງໃສ່ທະເລ ແລ້ວນໍ້າທະເລກໍກາຍເປັນເລືອດເຫມືອນເລືອດຂອງຄົນຕາຍ ແລະບັນດາສິ່ງທີ່ມີຊີວິດຢູ່ນັ້ນກໍຕາຍຫມົດ* (ຂໍ້ 3).

3. *ເທວະດາຕົນທີ່ສາມໄດ້ຖອກຂັນຂອງຕົນລົງໃສ່ແມ່ນ້ຳແລະນ້ຳພຸທັງຫລາຍ ນ້ຳເຫລົ່ານັ້ນກໍກາຍເປັນເລືອດ* (ຂໍ້ 4).

4. *ເທວະດາຕົນທີສີ່ໄດ້ຖອກຂັນຂອງຕົນລົງໃສ່ດວງອາທິດ ດວງອາທິດຈຶ່ງໄດ້ຮັບພຣະຣາຊທານອຳນາດລວກມະນຸດດ້ວຍໄຟ* (ຂໍ້ 8).

5. *ເທວະດາຕົນທີ່ຫ້າໄດ້ຖອກຂັນຂອງຕົນລົງໃສ່ບັນລັງຂອງສັດຮ້າຍ ແລະອານາຈັກຂອງມັນກໍມືດໄປ ຄົນເຫລົ່ານັ້ນໄດ້ຂົບຄ້ຽວລີ້ນຂອງຕົນດ້ວຍຄວາມເຈັບປວດ* (ຂໍ້ 10).

## 3. <u>ສອງຂັນສຸດທ້າຍ</u>: (ພຣະນິມິດ 16:12-21)

ສອງຂັນສຸດທ້າຍຄືຂັນທີຫົກແລະຂັນທີເຈັດ ເປັນສອງຂັນໃນສົງຄາມການທຳລາຍໃນຣະຫວ່າງຄວາມດີແລະຄວາມຊົ່ວ, ເມື່ອນັ້ນທຸກຢ່າງຈະສຳເຣັດຕາມແຜນການຂອງພຣະເຈົ້າທີ່ພຣະອົງຊົງກຳນົດໄວ້ ຄືຈະຕ້ອງທຳລາຍກຸງບາບີໂລນ ແລະມານຊາຕານກັບບໍຣິວານຂອງມັນ.

6. *ເທວະດາຕົນທີຫົກໄດ້ຖອກຂັນຂອງຕົນລົງໃສ່ແມ່ນ້ຳໃຫຍ່ ຄືແມ່ນ້ຳເອີຟຣາດ ນ້ຳໃນແມ່ນ້ຳນັ້ນຈຶ່ງແຫ້ງໄປ ເພື່ອຈັດແຈງທາງໄວ້ສຳລັບກະສັດທັງຫລາຍທີ່ມາຈາກທິດຕາເວັນອອກ* (ຂໍ້ 12). ແມ່ນ້ຳເອີຟຣາດຈະແຫ້ງຂອດແລ້ວບັນດາກະສັດຝ່າຍໂລກຈະອອກມາສູ້ຮົບທີ່ພູເຂົາ ແມກກິໂດ ພາກເໜືອຂອງອິສຣາເອນ ແລະຍຶດຄອງແຜ່ນດິນສັກສິດ. ຄຳວ່າແມກກິໂດ ແປວ່າ ບ່ອນພວກທະຫານຖືກຂ້າຕາຍ (ອ່ານ ຂໍ້ 13-14).

7. *ເທວະດາຕົນທີ່ເຈັດໄດ້ຖອກຂັນຂອງຕົນລົງໃສ່ອາກາດ ແລະມີພຣະສຸຣະສຽງດັງອອກມາຈາກພຣະຣາຊບັນລັງໃນພຣະວິຫານນັ້ນວ່າ, "ສຳເຣັດແລ້ວ"* (ຂໍ້ 17). ເທວະດາອົງທີເຈັດບໍ່ໄດ້ຖອກຂັນລົງແຜ່ນດິນໃດໆ ແຕ່ຖອກລົງໃສ່ອາກາດ ແລະໃນເວລານັ້ນມີພຣະສຸຣະສຽງຂອງອົງພຣະຜູ້ເປັນເຈົ້າດັງມາຈາກຣາຊບັນລັງກ້ອງໃສ່ອາກາດທີ່ເທວະດາຖອກອອກນັ້ນວ່າ "*ສຳເຣັດແລ້ວ*" ອັນມີຄວາມໝາຍວ່າພຣະອົງເຈົ້າຈະຈັດການບັນດາຊາຕານກັບບໍຣິວານຂອງມັນໂດຍບໍ່ໃຫ້ມັນມີບ່ອນລີ້ຊ່ອນຕົວອີກຕໍ່ໄປ. ຫລັງຈາກພຣະເຈົ້າຊົງກ່າວແລ້ວໄດ້ມີດັ່ງນີ້ເກີດຂຶ້ນ " *ແລະເກີດມີຟ້າແມບ ມີສຽງດັງຕ່າງໆ ມີຟ້າຮ້ອງ ແລະເກີດແຜ່ນດິນໄຫວອັນໃຫຍ່ ຊຶ່ງຕັ້ງແຕ່ມີມະນຸດເກີດມາໃນໂລກ ບໍ່ເຄີຍມີແຜ່ນດິນໄຫວອັນໃຫຍ່ແລະຮ້າຍປານນີ້ຈັກເທື່ອ* " (ຂໍ້ 18). ໃນຄາວສຸດທ້າຍນີ້ຈະມີເຫດຮ້າຍເກີດຂຶ້ນຫລາຍຢ່າງດັ່ງທີ່ທ່ານໄດ້ອ່ານໃນຂໍ້ 18-21 ແຕ່ເຖິງປານນັ້ນເຂົາຍັງບໍ່ກັບໃຈສາຣະພາບຄວາມຜິດບາບ ແຕ່ເຂົາກັບປ້ອຍດ່າອົງພຣະຜູ້ເປັນເຈົ້າ.

ເຣື່ອງການສິ້ນຍຸກ ຫລືການສະເດັດກັບຄືນມາຄັ້ງທີສອງຂອງພຣະເຢຊູນີ້ພຣະທັມຄັມພີໄດ້ກ່າວເຕືອນລ່ວງໜ້າຕັ້ງຫລາຍເທື່ອແລ້ວ ແຕ່ບໍ່ມີໃຜຮູ້ເຖິງວັນນັ້ນຢ່າງແນ່ນອນ ແຕ່ພຣະຄັມພີເຕືອນໄວ້ວ່າ "*ເບິ່ງແມ, ເຮົາຈະມາເຫມືອນຂະໂມຍ ຄວາມສຸກຈະມີແກ່ຜູ້ທີ່ເຝົ້າລະວັງ ແລະແກ່ຜູ້ທີ່ຮັກສາເສື້ອຜ້າຂອງຕົນບໍ່ໃຫ້ຕົວເປືອຍກາຍ ຢ້ານວ່າຄົນທັງຫລາຍຈະເຫັນຄວາມລະອາຍຂອງຕົນ*" (ຂໍ້ 15). ແປວ່າພຣະຄັມພີໄດ້ເຕືອນໃຫ້ທຸກຄົນຖິ້ມໃຈເກົ່າເອົາໃຈໃໝ່ ແລະເຝົ້າຣະວັງການສະເດັດກັບຄືນມາຂອງພຣະເຢຊູດ້ວຍໃຈຈົດຈໍ່. ພຣະຄັມໃໝ່ບາງຕອນໄດ້ກ່າວໄວ້ດັ່ງນີ້; "*ວັນຂອງພຣະຜູ້ເປັນເຈົ້າຈະມາເຫມືອນຂະໂມຍມາໃນເວລາກາງຄືນ ເມື່ອໃດເຂົາທັງຫລາຍເວົ້າວ່າ, "ສງົບສຸກແລະປອດພັຍຢູ່ແລ້ວ" ເມື່ອນັ້ນແຫລະ, ຄວາມວິນາດຈິບຫາຍກໍຈະມາເຖິງເຂົາ*

*ໃນທັນທີ ເຫມືອນດັ່ງຄວາມເຈັບປວດມາເຖິງຍິງທີ່ມີທ້ອງ ແລະເຂົາຈະຫນີບໍ່ພົ້ນເປັນແນ່ ແຕ່ວ່າພີ່ນ້ອງເອີຍ, ພວກເຈົ້າກໍບໍ່ໄດ້ຢູ່ໃນຄວາມມືດແລ້ວ ເຫມືອນວັນນັ້ນຈະມາໂດດໃສ່ເຈົ້າເຫມືອນດັ່ງຂະໂມຍມາ* "(1 ເທຊະໂລນິກ 5:2-4). ເມື່ອອ່ານພຣະຄັມພີຕອນນີ້ແລ້ວເຮັດໃຫ້ຂ້າພະເຈົ້າຄຶດເຖິງ 9/11 ມີຄົນຈຳນວນຫລວງຫລາຍກັບຄືນໄປໂບດ ບາງທີຄົນເຫລົ່ານີ້ອາດຮູ້ເຣື່ອງພຣະຄັມພີໃນເຣື່ອງວັນສຸດທ້າຍຈະມີເຫດການແນວນັ້ນແນວນີ້ຈຶ່ງກັບໄປໂບດ, ພຣະທັມອີກຕອນນຶ່ງກ່າວວ່າ;

"*ວັນຂອງອົງພຣະຜູ້ເປັນເຈົ້າຈະມາເຖິງເຫມືອນດັ່ງຂະໂມຍມາ ໃນວັນນັ້ນທ້ອງຟ້າຈະລ່ວງເສັຽໄປດ້ວຍສຽງດັງກ້ອງສນັ່ນ ໂລກທາດຈະສລາຍໄປດ້ວຍໄຟ ແລະແຜ່ນດິນໂລກກັບສາຣະພັດທຸກສິ່ງຈະໄໝ້ເສັຽໝົດ* " (2 ເປໂຕ 3:10). ຄຣິສຕຽນທຸກຄົນຈຳຕ້ອງໃຊ້ຊີວິດຂອງຕົນໂດຍຕັ້ງເປົ້າໝາຍວ່າຈະເຮັດດີທີ່ສຸດແຕ່ລະວັນໆ ເພາະເຮົາຮູ້ແລ້ວວ່າພຣະເຈົ້າຈະສະເດັດມາມື້ໃດກໍໄດ້, ແລະການສະເດັດກັບມາຂອງພຣະເຢຊູຄຣິດເປັນຄວາມຫວັງອັນຍິ່ງໃຫຍ່ຂອງຄຣິສຕຽນທຸກຄົນ ເພາະວ່າວັນນັ້ນຈະເປັນວັນທີ່ພວກເຮົາພົ້ນຈາກສິ່ງຊົ່ວຮ້າຍ, ພົ້ນຈາກການກົດຂີ່ຂົ່ມເຫງຂອງມະນຸດ ແລະມານຊາຕານ, ພົ້ນຈາກຄວາມທຸກຍາກລຳບາກ, ພົ້ນຈາກຄວາມເຈັບເປັນຂອງຮ່າງກາຍ, ພົ້ນຈາກຕາຍແລ້ວເຂົ້າສູ່ຊີວິດອັນນິຣັນດອນຮ່ວມກັບພຣະເຢຊູຄຣິດທີ່ຟ້າສວັນ. ພຣະເຢຊູຊົງສັນຍາໄວ້ວ່າ " *ເມື່ອເຮົາໄປຈັດແຈງບ່ອນໄວ້ສຳລັບພວກທ່ານແລ້ວ ເຮົາຈະກັບມາອີກຮັບທ່ານໄປຢູ່ກັບເຮົາ ເພື່ອວ່າເຮົາຢູ່ທີ່ໃດພວກທ່ານຈະຢູ່ທີ່ນັ້ນເໝືອນກັນ* " (ໂຢຮັນ 14:3).

**<u>ຄຳຖາມ</u>**

1. ການເຫັນນິມິດຂອງໂຢຮັນຊ່ອຍເຕືອນທ່ານແນວໃດ?

2. ເຣື່ອງນີ້ຈະເກີດຂຶ້ນເມື່ອໃດ?

3. ມີເທວະດາຈັກອົງ? ແຕ່ລະເທວະດາຖືຫຍັງໄວ້ໃນມື?

4. ຂັນທັງເຈັດນັ້ນແມ່ນຂັນໜ່ວຍໃດເປັນຕາຢ້ານທີ່ສຸດ?

5. ຂັນທັງເຈັດໝາຍເຖິງຫຍັງ?

6. ເມື່ອທ່ານໄດ້ຮຽນບົດຮຽນນີ້ແລ້ວທ່ານຮູ້ສຶກແນວໃດ? ຈະເຮັດແນວໃດ?

*ຫວ*

# ບົດຮຽນທີ 11
## <u>ກຸງບາບີໂລນຫລົ້ມຈົມ</u>

---

**<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້:</u>** ພຣະນິມິດ 17:1-6; 18:1-8
**<u>ພູມຫລັງຂອງພຣະຄັມພີ:</u>** ພຣະນິມິດ 17-19:5
**<u>ຈຸດສໍາຄັນຂອງບົດຮຽນນີ້:</u>** ໃຊ້ຄວາມຮັ່ງມີບໍ່ຖືກຕ້ອງຈະຕ້ອງຖືກລົງໂທດ
**<u>ຄໍາຖາມເພື່ອການຄົ້ນຄວ້າ:</u>** ອໍານາດແລະຄວາມຮັງມີ ແນວໃດທີ່ເຮົາຈະຮຽນຮູ້?
**<u>ຈຸດປະສົງຂອງບົດຮຽນ</u>:** ເພື່ອເຮົາຈະບໍ່ຫລົ້ມຈົມດັ່ງບາບີໂລນ.

### <u>ບົດນໍາ</u>

ພຣະທັມພຣະນິມິດ ເປັນພຣະທັມທີ່ເລິກລັບຊັບຊ້ອນ ໂດຍສະເພາະໃນບົດທີ 17-19 ແມ່ນເຣື່ອງທີ່ເລິກຈົນພວກສາສນາສາດພາກັນເວົ້າວ່າ ຕີຄວາມໝາຍຍາກຫລາຍ ເພາະເປັນເຣື່ອງເຫດການທີ່ຈະເກີດຂຶ້ນໃນວັນພິພາກສາ ແລະໃຫ້ລາງວັນແກ່ຜູ້ເຊື່ອແລະອົດທົນ.

### 1. **<u>ຜູ້ທຸດຈະຣິດກໍາອໍານາດ:</u>** (ພຣະນິມິດ 17:1-17)

ໃນຕອນທ້າຍຂອງບົດ 16 ໂຢຮັນໄດ້ກ່າວເຖິງກຸງບາບີໂລນຫລົ້ມຈົມ, ພວກຜູ້ກໍາອໍານາດຊົ່ວຈະຖືກທໍາລາຍດ້ວຍເຈັດຂັນພຣະພິໂຣດຂອງພຣະເຈົ້າ ແລະຕົກມາໃນບົດ 17 ໂຢຮັນໄດ້ເລີ້ມຕົ້ນອະທິບາຍເຖິງເຫດຜົນຂອງການຖືກທໍາລາຍດັ່ງນີ້; ຄືເທວະດາຕົນນຶ່ງໄດ້ອະທິບາຍເຣື່ອງແມ່ນໍ້າທັງຫລາຍ, ເຣື່ອງຂອງແມ່ນໍ້າທັງຫລາຍນີ້ໝາຍເຖິງປະຊາຊາດທັງຫລາຍໃນໂລກນີ້ ຮວມທັງພວກຜູ້ກໍາອໍານາດທີ່ຊົ່ວຊ້າລົງມາຈົນຮອດຍິງໂສເພນີຈະຖືກພິພາກສາລົງໂທດ(17:15). ໂຢຮັນກ່າວວ່າ " *ເທວະດາຕົນນຶ່ງໃນເຈັດຕົນທີ່ຖືຂັນທັງເຈັດໜ່ວຍນັ້ນ ໄດ້ມາຫາຂ້າພະເຈົ້າແລະເວົ້າວ່າ, "ເຊີນມານີ້ເທີນ ເຮົາຈະໃຫ້ທ່ານເຫັນການຊົງພິພາກສາລົງໂທດຍິງໂສເພນີຄົນສໍາຄັນ ທີ່ນັ່ງຢູ່ເທິງແມ່ນໍ້າອັນຫລວງຫລາຍ ຄືຍິງນັ້ນທີ່ບັນດາກະສັດທົ່ວໂລກໄດ້ຫລົ້ນຜິດຊາຍຍິງກັບມັນ ແລະຊາວໂລກທັງຫລາຍໄດ້ມົວເມົາດ້ວຍເຫລົ້າແວງແຫ່ງການຜິດຊາຍຍິງຂອງມັນນັ້ນ*" (ຂໍ້ 1-2). ຄໍາວ່ານັ່ງຢູ່ເທິງແມ່ນໍ້າ ແປວ່ານັ່ງຢູ່ເໜືອແມ່ນໍ້າທັງຫລາຍ ແລະແມ່ນໍ້າທັງຫລາຍແມ່ນປະຊາກອນທັງຫລາຍ, ເຣື່ອງນີ້ມີຄວາມໝາຍວ່າ ພວກປະຊາກອນທັງຫລາຍຕລອດເຖິງກະສັດຕ່າງໆຕົກຢູ່ໃຕ້ອໍານາດຂອງຍິງໂສເພນີ ຄືພວກເຂົາຍອມເຂົ້າຮ່ວມຫລັບນອນກັບຍິງໂສເພນີ ໂດຍລືມຖານະການເປັນຢູ່ຂອງຕົນ.

ໂຢຮັນກ່າວຕໍ່ໄປວ່າ " *ເທວະດາຕົນນັ້ນໄດ້ຍົກຂ້າພະເຈົ້າເຂົ້າໄປໃນປ່າໂດຍພຣະວິນຍານ ແລະຂ້າພະເຈົ້າໄດ້ເຫັນຜູ້ຍິງຄົນນຶ່ງ ນັ່ງຢູ່ເທິງຫລັງສັດຮ້າຍສີແດງເຂັ້ມໂຕນຶ່ງ ຊຶ່ງມີຊື່ຫລາຍຊື່ເປັນຄໍາໝິ່ນປມາດເຕັມໄປ*

*ທັງໂຕມັນມີເຈັດຫົວແລະສິບເຂົາຍິງນັ້ນນຸ່ງເຄື່ອງສີມ່ວງອ່ອນແລະສີແດງເຂັ້ມ ປະດັບປະດາດ້ວຍເຄື່ອງຄຳດ້ວຍເພັດພອຍຕ່າງໆແລະໄຂ່ມຸກ ມືຂອງຍິງນັ້ນຖືຈອກຄຳທີ່ເຕັມດ້ວຍຂອງຫນ້າກຽດຫນ້າຊັງ ແລະຂອງຂີ້ດຽດແຫ່ງການຜິດຊາຍຍິງຂອງຕົນທີ່ຫນ້າຜາກມີຊື່ຂຽນໄວ້ເປັນຄວາມເລິກລັບວ່າ, "<u>ບາບີໂລນມະຫານະຄອນ ແມ່ຂອງຍິງໂສເພນີທັງຫລາຍ</u> ແລະແມ່ຂອງສິ່ງທັງປວງທີ່ຫນ້າກຽດຫນ້າຊັງໃນແຜ່ນດິນໂລກ*" (ຂໍ້ 3-5). ແປວ່າພຣະວິນຍານຂອງພຣະຈົ້າໄດ້ນຳໂຢຮັນໄປເຫັນຍິງຄ້າປະເວນີ (ຍິງແມ່ຈ້າງ) ນັ່ງເທິງຫລັງສັດຮ້າຍຫລືຂີ່ຫລັງສັດຮ້າຍ ແລະສັດຮ້າຍນີ້ໄດ້ບັນລະຍາຍແລ້ວໃນບົດ 13 ຊຶ່ງສັດຮ້າຍນີ້ໝາຍເຖິງພວກຜູ້ທຸດຈະຣິດທີ່ກຳອຳນາດຂອງບ້ານເມືອງຂອງກຸງໂຣມ, ກຸງບາບີໂລນ, ຜູ້ກົດຂີ່ຂົ່ມເຫງໄດ້ຂົ່ມເຫງໃຫ້ປະຊາຊົນຂາບໄຫວ້ພຣະຫຸ່ງມ. ຄົນເຫລົ່ານີ້ມີອຳນາດອັນໃຫຍ່ຫລວງກໍຈິງ ແຕ່ເຂົາກໍຍັງຕົກເປັນເຍື່ອຂອງຍິງໂສເພນີ ຈົນໂຢຮັນເຫັນຮູບພາບຍິງໂສເພນີຂີ່ຫລັງສັດຮ້າຍ ຄືຂີ່ຫລັງພວກເຂົານັ້ນເອງ. ໂຕສັດຮ້າຍທີ່ໂຢຮັນເຫັນນັ້ນມີສິບເຂົາແລະມີເຈັດຫົວ ແລະເຂົາທັງເຈັດນັ້ນໝາຍເຖິງກະສັດທັງເຈັດ ຊຶ່ງຫ້າກະສັດນັ້ນໄດ້ລ່ວງໄປແລ້ວ ແລະອີກກະສັດອົງນຶ່ງຍັງຊົງເປັນຢູ່ ສ່ວນກະສັດອີກອົງນັ້ນຍັງບໍ່ທັນສະເດັດມາ (ເບິ່ງ 17:10).

ຫອນສິບອັນນັ້ນໝາຍເຖິງກະສັດທັງສິບທີ່ບໍ່ໄດ້ສເວີຍຣາດ ແຕ່ມີສິດອຳນາດເຕັມເໝືອນກະສັດ ແຕ່ກະສັດທັງສິບໄດ້ມອບອຳນາດນັ້ນໃຫ້ຄົນຊົ່ວຮ້າຍ ແລ້ວໄປຕໍ່ຕ້ານພຣະເຢຊູ (ພຣະເມສານ້ອຍ) "*ເຂົາທັງສິບທີ່ທ່ານໄດ້ເຫັນນັ້ນ ໄດ້ແກ່ກະສັດສິບອົງທີ່ຍັງບໍ່ໄດ້ສເວີຍຣາຊສົມບັດ ແຕ່ຈະໄດ້ຮັບອຳນາດເຫມືອນກະສັດດ້ວຍກັນກັບສັດຮ້າຍນັ້ນນຶ່ງຊົ່ວໂມງ ກະສັດເຫລົ່ານັ້ນມີນ້ຳພຣະທັຍຢ່າງດຽວກັນ ແລະຊົງມອບຣິດແລະອຳນາດຂອງຕົນໃຫ້ແກ່ສັດຮ້າຍນັ້ນ ກະສັດທັງຫລາຍນັ້ນຈະສູ້ຣົບກັບພຣະເມສານ້ອຍ ແລະ ພຣະເມສານ້ອຍຈະມີຊັຍຊະນະ ເພາະວ່າພຣະອົງເປັນຈອມເຈົ້ານາຍທັງຫລາຍແລະເປັນຈອມເຈົ້າກະສັດທັງຫລາຍ ຝ່າຍບັນດາຄົນທີ່ຢູ່ກັບພຣະອົງ ເປັນຜູ້ທີ່ພຣະອົງໄດ້ຊົງເອີ້ນເອົາ ແລະຊົງເລືອກໄວ້ ກັບທັງເປັນຜູ້ສັດຊື່ ກໍຈະມີຊັຍດ້ວຍກັນກັບພຣະອົງ*" (ຂໍ້ 12-14).

## 2. <u>ໃຫ້ປະຊົນພຣະເຈົ້າອອກກ່ອນ</u>: (ພຣະນິມິດ 18:1-5)

ຕໍ່ມາໂຢຮັນໄດ້ເຫັນເທວະດາອີກຕົນນຶ່ງຮ້ອງແຜດສຽງປະກາດເຖິງຄວາມຫລົ້ມຈົມຂອງກຸງບາບີໂລນ ເທວະດານັ້ນໄດ້ຮ້ອງປະກາດສຽງແຮງກ້າຂຶ້ນວ່າ, "*ບາບີໂລນມະຫານະຄອນຫລົ້ມຈົມແລ້ວ ຫລົ້ມຈົມເສັຽແລ້ວມັນກາຍເປັນບ່ອນອາສັຍຂອງຜີຮ້າຍ ເປັນບ່ອນລີ້ຊ່ອນຂອງຜີຖ່ອຍຮ້າຍທຸກຢ່າງ ແລະເປັນຄອນນົກບໍ່ສະອາດແລະຫນ້າກຽດທຸກຊະນິດ ເພາະວ່າປະຊາຊາດທັງປວງໄດ້ດື່ມເຫລົ້າແວງປຸກຢ່າງເຫລືອເກີນແຫ່ງການຜິດຊາຍຍິງຂອງນະຄອນນັ້ນ ບັນດາກະສັດແຫ່ງແຜ່ນດິນໂລກໄດ້ລ່ວງຜິດຊາຍຍິງກັບນະຄອນນັ້ນ ແລະພໍ່ຄ້າທັງຫລາຍແຫ່ງແຜ່ນດິນໂລກໄດ້ລ້ຳລວຍດ້ວຍຊັບອັນຟຸ່ມເຟືອຍຂອງນະຄອນນັ້ນ* "(ຂໍ້ 2-3) ພຣະເຈົ້າຈະລົງໂທດກຸງບາບີໂລນທີ່ມີຄວາມຊົ່ວຊ້າໃນສາຍພຣະເນດຂອງພຣະເຈົ້າ ເພາະວ່າເປັນບ່ອນອາສັຍ ແລະເປັນບ່ອນລີ້ຊ່ອນຂອງຜີຖ່ອຍຮ້າຍ, ເປັນຄອນນົກຫລືບ່ອນນົກມາຈັບພັກເຊົາ, ເປັນບ່ອນຄົນທັງຫາຍຊຸມແຊວ.

ຂອງເບື່ອເມົາ ເປັນບ່ອນເຂົານິຍົມກັນຫລີ້ນຊູ້ ເປັນບ່ອນພວກກະສັດເຮັດການຊົ່ວ, ເປັນບ່ອນເຂົາຟຸມເຟືອຍອວດອ້າງຄວາມຮັ່ງມີ, ຊື້ຖືກຂາຍແພງ ແລະຂົ່ມເຫງເອົາປຽບຄົນທຸກຍາກດັ່ງນີ້ເປັນຕົ້ນ. ການປົກຄອງຂອງ

ຈັກກະພັດໂຣມກໍໄດ້ໃຊ້ກຳລັງທະຫານບັງຄັບດ້ວຍການເກັບພາສີ ຈົນເຂົາກາຍເປັນພວກເຈົ້ານາຍທີ່ຮັ່ງມີດ້ວຍການກົດຂີ່ຂົ່ມເຫງຂອງເຂົາ, ບັນດາກະສັດຕ່າງໆກໍພາກັນມາຮ່ວມຫົວກັບຈັກກະພັດໂຣມບັງຄັບປະຊາຊົນຂອງຕົນໃຫ້ຍອມຈຳນົນແລະເສັຽພາສີອັນເກີນກຳໜົດອີກ ສິ່ງເຫລົ່ານີ້ແຫລະເປັນຕົ້ນເຫດໃຫ້ພຣະເຈົ້າຕຽມການລົງໂທດກຸງບາບີໂລນໃນວັນນຶ່ງຂ້າງໜ້າ. ໂຢຮັນບອກວ່າການລົງໂທດນີ້ຈະເກີດຂຶ້ນຢ່າງແນ່ນອນໃນວັນຂອງອົງພຣະຜູ້ເປັນເຈົ້າ. ເມື່ອພຣະເຈົ້າຈະຊົງທຳລາຍກຸງບາບີໂລນເນື່ອງຈາກຄວາມຊົ່ວຊ້າເຊັ່ນນັ້ນແລ້ວ ໄດ້ມີຄຳຖາມຕາມມາວ່າສ່ວນປະເທດອື່ນໆທີ່ບໍ່ໄດ້ກ່າວໃນພຣະຄັມພີເດ ຈະຖືກທຳລາຍບໍ່? ເຣື່ອງນີ້ເຮົາຕ້ອງສຶກສາຄົ້ນຄວ້າກັນອີກເທື່ອນຶ່ງ.

ໂຢຮັນຍັງບອກອີກວ່າພຣະເຈົ້າໄດ້ຊົງຮຽກເອີ້ນໄພ່ພົນຂອງພຣະເຈົ້າ ຫລືຜູ້ທີ່ພຣະເຈົ້າຊົງເລືອກແລະຮຽກເອີ້ນໃຫ້ໂອກາດຄົນຊົ່ວທັງຫລາຍໄດ້ກັບໃຈອອກຈາກສິ່ງລາມົກທີ່ໄດ້ກ່າວມາຂ້າງເທິງນັ້ນວ່າ "*ໄພ່ພົນຂອງເຮົາເອີຍ, ຈົ່ງອອກມາຈາກນະຄອນນັ້ນເສັຽ ເພື່ອເຈົ້າທັງຫລາຍຈະບໍ່ໄດ້ເຂົ້າສ່ວນໃນການຜິດບາບຂອງມັນເພື່ອເຈົ້າຈະບໍ່ຖືກພັຍອັນຕະລາຍທີ່ຈະເກີດແກ່ມັນນັ້ນ*" (ຂໍ້ 4). ການຮຽກເອີ້ນຂອງອົງພຣະຜູ້ເປັນເຈົ້ານັ້ນບໍ່ແມ່ນແຕ່ເອີ້ນໃຫ້ມາຫາພຣະອົງເທົ່ານັ້ນ ແຕ່ແມ່ນເອີ້ນໃຫ້ເອົາຕົນເອງອອກຈາກບ່ອນທີ່ເຂົາເຄີຍຢູ່, ບ່ອນທີ່ເຂົາເຄີຍຫຼິ້ນກິນແບບຄົນທັງຫລາຍໃນກຸງບາບີໂລນ. ຂ້າພະເຈົ້າຍັງຄຶດເຖິງການຮຽກເອີ້ນຂອງພຣະເຢຊູຄຣິດໃນເວລານີ້ດ້ວຍ, ພຣະອົງຊົງເອີ້ນ, ຊົງປ່າວປະກາດໃຫ້ຄົນທັງຫລາຍອອກຈາກຄວາມມືດຝ່າຍໂລກແລ້ວມາຮັບເຊື່ອໃນພຣະອົງ ເພື່ອເຂົາທັງຫລາຍຈະບໍ່ໄດ້ຕົກເປັນຂ້ອຍຂ້າຂອງຄວາມຊົ່ວຊ້າທີ່ປະປົນຢູ່ບ່ອນທີ່ເຂົາໄປ, ບ່ອນທີ່ເຂົາຢູ່ ເພາະວ່າຄົນບາບທັງຫລາຍເຮັດການບາບຕ່າງໆໂດຍບໍ່ຮູ້ສຶກຕົວວ່າຕົນເອງເຮັດບາບ, ດັ່ງນັ້ນຄົນທີ່ອອກມາໄດ້ແລ້ວຄືທ່ານແລະຂ້າພະເຈົ້າສົມຄວນຢ່າງຍິ່ງທີ່ຈະຂອບພຣະຄຸນພຣະເຈົ້າດ້ວຍການຖວາຍຕົວໃຫ້ເປັນຂອງພຣະອົງ, ດ້ວຍການຮັບໃຊ້ພຣະອົງ ເພາະເຮົາເປັນໜີ້ພຣະອົງທີ່ຊົງເອີ້ນເຮົາອອກມາ ແລະເມື່ອເຮົາອອກມາພົ້ນແລ້ວຈຶ່ງຮູ້ວ່າ ເຮົາເອງຈຶ່ງຮູ້ວ່າ ຕົນເອງໄດ້ເຮັດບາບ ແລະເຄີຍເປັນຄົນບາບ. ພຣະເຈົ້າຂອງເຮົາເປັນພຣະເຈົ້າທີ່ມີຄວາມຮັກ, ຄວາມເມດຕາອັນສູງສົ່ງ ແລະຊົງເປັນພຣະເຈົ້າທີ່ຍຸດຕິທັມ ດັ່ງນັ້ນຈຶ່ງຊົງໃຫ້ໂອກາດເຮົາເພື່ອຮຽກເອີ້ນ, ບອກກ່າວເຕືອນວ່າຄົນທີ່ບໍ່ກັບໃຈຈະຕ້ອງຖືກທຳລາຍໃນວັນສຸດທ້າຍ ແຕ່ກ່ອນພຣະອົງຈະທຳລາຍ ພຣະອົງໄດ້ຊົງແຍກຜູ້ເຊື່ອແລະບໍ່ເຊື່ອອອກຈາກກັນກ່ອນ ເໝືອນດັ່ງຜູ້ລ້ຽງແກະແຍກຝູງແກະອອກຈາກຝູງແບ້.

ອີກຢ່າງ ການເປັນຄຣິສຕຽນໃນກຸງໂຣມນັ້ນເປັນການຍາກ ເພາະພວກໂຣມັນກຽດຊັງຄຣິສຕຽນຈົນເຖິງຂັ້ນກົດຂີ່ຂົ່ມເຫງໂດຍບໍ່ມີເຫດຜົນ ດ້ວຍເຫດນີ້ພຣະເຢຊູຈຶ່ງອ້ອນວອນເພື່ອເຂົາວ່າ "*ຝ່າຍຂ້າພຣະອົງໄດ້ມອບພຣະທັມຂອງພຣະອົງໃຫ້ແກ່ເຂົາແລ້ວ ແລະໂລກນີ້ໄດ້ກຽດຊັງເຂົາເພາະເຂົາບໍ່ຢູ່ຝ່າຍໂລກ ເໝືອນຂ້າພຣະອົງບໍ່ຢູ່ຝ່າຍໂລກນັ້ນ ຂ້າພຣະອົງບໍ່ໄດ້ຂໍພຣະອົງເອົາເຂົາອອກຈາກໂລກນີ້ ແຕ່ໄດ້ຂໍຮັກສາເຂົາໄວ້ໃຫ້ພົ້ນຈາກມານຮ້າຍ ເຂົາບໍ່ຢູ່ຝ່າຍໂລກເໝືອນດັ່ງຂ້າພຣະອົງນີ້ບໍ່ຢູ່ຝ່າຍໂລກ ຂໍຊົງໂຜດຊຳຣະເຂົາໃຫ້ບໍຣິສຸດດ້ວຍຄວາມຈິງ ພຣະທັມຂອງພຣະອົງນັ້ນເປັນຄວາມຈິງ ພຣະອົງຊົງໃຊ້ຂ້າພຣະອົງມາໃນໂລກສັນໃດ ຂ້າພຣະອົງກໍໃຊ້ເຂົາໄປໃນໂລກສັນນັ້ນ*" (ໂຢຮັນ 17:14-17).

**3. <u>ກຸງບາບີໂລນຖືກພິພາກສາ</u>**: (ພຣະນິມິດ 18:6-8)

ນອກຈາກພຣະເຈົ້າຊົງຮຽກເອີ້ນໃຫ້ປະຊາຊົນຂອງພຣະເຈົ້າ ແລະເປີດໂອກາດໃຫ້ຄົນຮັບເຊື່ອແລ້ວໃຫ້ອອກຈາກກຸງບາບີໂລນກ່ອນທີ່ພຣະເຈົ້າຈະພິພາກສາລົງໂທດແລະທໍາລາຍແລ້ວ ພຣະເຢຊູຍັງຊົງເປັນຫ່ວງຕໍ່ເລົ່າສາວົກທີ່ເຮັດການອັນໜັກໜ່ວງໃນການປະກາດພຣະນາມຂອງພຣະເຈົ້າທີ່ຍັງຖືກກົດຂີ່ຂົ່ມເຫງຕັ້ງແຕ່ຕົ້ນຈົນເຖິງເວລານີ້, ພຣະເຢຊູຊົງຫ່ວງຢ້ານເຂົາຈະບໍ່ສາມາດທົນຕໍ່ການທຸກຍາກລໍາບາກດ້ວຍຖືກຂົ່ມເຫງ, ຊົງສົງສານທີ່ເລົ່າສາວົກຈະຕ້ອງທົນທຸກ ເພາະພຣະເຢຊູເອງຊົງໃຊ້ເຂົາອອກໄປທົ່ວໂລກນັບຕັ້ງແຕ່ປະເທດອຸດົມສົມບູນຈົນເຖິງປະເທດຍາກຈົນ ຕລອດເຖິງໃຊ້ເຂົາໄປໃນບ້ານນອກຄອກນາ, ບ່ອນທີ່ບໍ່ຮູ້ຈັກພາສາແລະບໍ່ຮູ້ຈັກສັງຄົມຂອງຊົນກຸ່ມນ້ອຍໆນັ້ນ ຄົນເຫລົ່ານີ້ຈະມີຄວາມທຸກຍາກລໍາບາກບໍ່ຄືກັນ ແຕ່ກະຍັງບໍ່ມີບ່ອນໃດທີ່ມີຄວາມຊົ່ວຊ້າໄປຫລາຍກວ່າກຸງບາບີໂລນ. ດ້ວຍແຮງກໍາລັງສອງຢ່າງຄື; 1. ພຣະເຈົ້າຊົງເອີ້ນປະຊາຊົນຂອງພຣະອົງອອກກ່ອນພິພາກສາລົງໂທດ ແລະ 2. ພຣະເຢຊູຊົງໄຫວ້ວອນເພື່ອສາວົກທຸກຄົນ, ຄຣິສຕຽນທຸກຄົນຈະຕ້ອງພົ້ນຈາກການພິພາກສາລົງໂທດຢ່າງແນ່ນອນ.

" *ນະຄອນນັ້ນໄດ້ໃຫ້ຜົນຢ່າງໃດກໍຈົ່ງໃຫ້ຜົນແກ່ມັນຢ່າງນັ້ນ ແລະຈົ່ງຕອບແທນແກ່ການກະທໍາຂອງມັນເປັນສອງທໍ່ ໃນຈອກທີ່ມັນໄດ້ປະສົມໄວ້ກໍຈົ່ງປະສົມລົງໃນຈອກນັ້ນສອງທໍ່ ນະຄອນນັ້ນໄດ້ອວດຈອງຫອງແລະປ່ອຍຕົວໄປ ຕາມຄວາມສນຸກສນານເທົ່າໃດກໍຈົ່ງໃຫ້ມັນໄດ້ຮັບການທໍຣະມານແລະຄວາມໂສກເສົ້າຫລາຍເທົ່ານັ້ນ ເພາະມັນຄຶດໃນໃຈວ່າ "ເຮົາຢູ່ໃນຕໍາແໜ່ງຣາຊິນີ ບໍ່ແມ່ນແມ່ຫມ້າຍ ເຮົາຈະບໍ່ປະສົບຄວາມໂສກເສົ້າຈັກເທື່ອ" ເຫດສັນນັ້ນພັຍອັນຕະລາຍຕ່າງໆຂອງນະຄອນນັ້ນຈະເກີດຂຶ້ນໃນວັນດຽວກັນ ຄືຄວາມຕາຍຄວາມໂສກເສົ້າ ຄວາມອຶດຢາກ ແລະໄຟຈະເຜົາມັນໃຫ້ຈົບຫາຍເສັຽ ເພາະວ່າອົງພຣະຜູ້ເປັນເຈົ້າ ຄືພຣະເຈົ້າຜູ້ຊົງພິພາກສານະຄອນນັ້ນຊົງປະກອບດ້ວຍພຣະກໍາລັງ* " ( 6-8). ແປວ່າບາບີໂລນເຮັດແນວໃດແກ່ຜູ້ອື່ນພຣະເຈົ້າຈະໃຫ້ສິ່ງທີ່ເຂົາເຮັດນັ້ນແກ່ກຸງບາບີໂລນຢ່າງນັ້ນ ແຕ່ຈະເຮັດກັບພວກເຂົາເຖິງສອງເທົ່າ, ພັຍອັນຕະລາຍຈະເກີດຂຶ້ນກັບກຸງບາບີໂລນສອງເທົ່າ, ດັ່ງທີ່ມີຄໍາຂຽນໃນພຣະຄັມພີເດີມວ່າ " *ຖ້າຜູ້ໃດຝາກເງິນຫລືສິ່ງຂອງໄວ້ກັບເພື່ອນບ້ານ ແລ້ວຂອງນັ້ນຖືກຂະໂມຍລັກໄປຈາກເຮືອນຜູ້ນັ້ນ ຖ້າຈັບຂະໂມຍໄດ້ຂະໂມຍຕ້ອງໃຊ້ແທນເປັນສອງເທົ່າ* " (ພຣະທັມອົພຍົບ 22:7) ເຣື່ອງນີ້ທັງເປັນຄໍາເຕືອນໃຫ້ຜູ້ທີ່ເຮັດການຢ່າງນັ້ນໄດ້ກັບໃຈໃໝ່ ແລະຍັງເປັນກໍາລັງໃຈແກ່ຜູ້ຖືກຂົ່ມເຫງອີກ ເພາະວ່າຜູ້ທີ່ກົດຂີ່ຂົ່ມເຫງນັ້ນຈະເປັນເໝືອນກຸງບາບີໂລນໃນອະນາຄົດຂ້າງໜ້າ.

*ຫວ*

# ບົດຮຽນທີ 12
## <u>ການສະເດັດມາຂອງຈອມກະສັດ</u>

---

**<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້:</u>** ພຣະນິມິດ 19:11-21; 20:1-20

**<u>ພູມຫລັງຂອງພຣະຄັມພີ:</u>** ພຣະນິມິດ 19:6--20:15

**<u>ຈຸດສໍາຄັນຂອງບົດຮຽນນີ້:</u>** ບອກໃຫ້ຮູ້ວ່າພຣະເຢຊູຈະປາບຊາຕານຈົນໝົດກ້ຽງ

**<u>ຄໍາຖາມ ເພື່ອການຄົ້ນຄວ້າ:</u>** ເຣື່ອງປະຫວັດສາດຈະນໍາໄປເຖິງບ່ອນໃດ?

**<u>ຈຸດປະສົງຂອງບົດຮຽນ</u>:** ເພື່ອໃຫ້ເຮົາເຂົ້າໃຈການປາບຊາຕານ.

### <u>ບົດນໍາ</u>

ພຣະເຢຊູຈະສະເດັດມາເພື່ອປາບມານຊາຕານທຸກຕົວໃຫ້ໝົດກ້ຽງ, ການທີ່ພຣະອົງຊົງປາບຊາຕານນັ້ນແຫລະຈະເຮັດໃຫ້ເຮົາທັງຫລາຍໄດ້ຮັບຄວາມເລົ້າໂລມໃນການປ່າວປະກາດຂ່າວປະເສີດ, ແຕ່ໃນເວລານີ້ຊາຕານກໍາລັງອອກອາລະວາດຢ່າງຮ້າຍແຮງຢູ່ທຸກຫົນທຸກແຫ່ງ ມັນເຮັດໃຫ້ເກີດເສິກກາງເມືອງ, ມັນເຮັດໃຫ້ຜູ້ຄົນຍາດຊີງອໍານາດກັນ, ມັນເຮັດໃຫ້ສໍ້ໂກງ ແລະກຽດຊັງກັນ, ມັນເຮັດໃຫ້ຄອບຄົວຜົວເມັຽແຕກແຍກກັນ, ພວກມັນເຮັດທຸກວິທີທາງເພື່ອໃຫ້ຄົນໃນໂລກຢູ່ບໍ່ເປັນສຸກ ແຕ່ມີຄົນກຸ່ມນຶ່ງທີ່ຈະສາມາດຕໍ່ສູ້ກັບມັນໄດ້ຄືກຸ່ມທີ່ເຂົ້າໃກ້ຊິດກັບພຣະເຢຊູເທົ່ານັ້ນ.

### 1. <u>ຈອມຣາຊາສະເດັດ</u>: (ພຣະນິມິດ 19: 11-16)

ເຮົາໄດ້ຍິນລາງຄົນສິນທະກັນວ່າພຣະເຈົ້າໃນພຣະຄັມພີເດີມ ແລະພຣະເຢຊູຄຣິດ ເຮັດການກົງກັນຂ້າມຫລືເຮັດການຄົນລະມຸມ ການທີ່ຄົນເຂົ້າໃຈແນວນັ້ນແມ່ນເຂົ້າໃຈຜິດ. ໃນພຣະຄັມເດີມມັກອະທິບາຍວ່າພຣະເຈົ້າຊົງເປັນພຣະເຈົ້າແຫ່ງຄວາມຍຸດຕິທັມ ແລະຊົງເປັນພຣະເຈົ້າທີ່ໃຫ້ຄໍາໝັ້ນສັນຍາດ້ວຍຄວາມຮັກ. ສ່ວນໃນພຣະຄັມພີພາກພັນທະສັນຍາໃໝ່ພຣະເຢຊູຊົງເປັນພຣະເຈົ້າທີ່ມີຄວາມເມດຕາແລະເປັນພຣະເຈົ້າແຫ່ງພຣະຄຸນ ແລະໃນຄາວສຸດທ້າຍພຣະເຢຊູຜູ້ມີຄວາມຮັກເມດຕາທີ່ເຕັມໄປດ້ວຍພຣະຄຸນນີ້ເອງຈະເປັນຜູ້ຊົງມີອໍານາດເຕັມໃນການຕັດສິນ, ດັ່ງນັ້ນຖ້າຫາກເຮົາບໍ່ເຂົ້າໃຈເຖິງວ່າພຣະອົງຊົງເປັນພຣະເຈົ້າທີ່ມີຄວາມຮັກ, ຄວາມເມດຕາສົງສານ ແລະຊົງເປັນພຣະເຈົ້າຈອມຣາຊາກັບຄືນມາພິພາກສາ ເຮົາກໍບໍ່ເຫັນພຣະອົງຢ່າງເຕັມປ່ຽມ ຢ່າງບໍ່ຖືກຕ້ອງນັ້ນເອງ.

ໃນພຣະທັມພຣະນິມິດ 19 ເປັນພາບພົດຂອງພຣະເຢຊູຈະສະເດັດກັບຄືນມາເພື່ອມາຕັດສິນປາບມານຊາຕານທຸກຕົວໃຫ້ຢູ່ໃຕ້ພຣະບາດຂອງພຣະອົງ. ຮູບພາບຕອນນີ້ເຮັດໃຫ້ຂ້າພະເຈົ້າຄຶດເຖິງຮູບເງົາທຸກເຣື່ອງແມ່ນພຣະເອກປາບຜູ້ຮ້າຍຢ່າງລາບຄາບໃນຕອນທ້າຍຂອງເຣື່ອງ, ດັ່ງນັ້ນຮູບເງົາທີ່ເຂົາພາກັນແຕ່ງຂຶ້ນມາ

ນັ້ນເປັນເຣື່ອງບໍ່ຈິງ ຫລືເປັນເຣື່ອງແຕ່ງຂຶ້ນມາເພື່ອຄວາມບັນເທີ ງ ແຕ່ທຸກເຣື່ອງໃນພຣະຄັມພີແມ່ນຖືກຕ້ອງກັບເຣື່ອງຈິງທີ່ຈະເກີດຂຶ້ນ ຄືໃນວັນສຸດທ້າຍແມ່ນພຣະເຢຊູຊະນະມານຮ້າຍ, ແຕ່ສິ່ງທີ່ໜ້າຢ້ານແມ່ນໃນເວລາເຄິ່ງກາງນີ້ເອງ ພວກມານຮ້າຍກຳລັງໄດ້ປຽບ, ພວກມັນພາກັນເຮັດໃຫ້ໂລກຫວຸ້ນວາຍສັບສົນ, ຜູ້ຄົນຂ້າຟັນລັນແທງກັນ, ຜູ້ຄົນກຽດຊັງກັນ ຄົນໃນຄອບຄົວດຽວກັນກໍຟ້ອງກັນຂຶ້ນລ້າຂຶ້ນສານ, ຍັງບໍ່ເທົ່ານັ້ນພວກມານຊາຕານຍັງເຮັດໃຫ້ຄົນຂອງພຣະເຈົ້າທີ່ອ່ອນແອຝ່າຍຄວາມເຊື່ອມີການແບ່ງແຍກ, ແຕກແຍກກັນ, ຊີງດີຊີງເດັ່ນກັນ. ສິ່ງເຫລົ່ານີ້ໄດ້ເກີດຂຶ້ນ ແລະຈະເກີດຂຶ້ນຕໍ່ໄປ ເພາະວ່າມານຊາຕານບໍ່ເຄີຍປ່ອຍໃຫ້ຄຣິສຕຽນຢູ່ຢ່າງສັນຕິສຸກ. ໃນພຣະທັມອົພຍົບ 14 ພຣະເຈົ້າໄດ້ສັ່ງໃຫ້ໂມເຊໄປປົດປ່ອຍແລະນຳອິສຣາເອນອອກຈາກການເປັນຂ້ອຍຂ້າທີ່ປະເທດເອຢິບນັ້ນ ເມື່ອເຂົາຖືກປ່ອຍໄປພຽງສາມວັນຝ່າຍກະສັດໃຈໂຫດກໍສັ່ງພວກທະຫານຕາມລ້າພວກອິສຣາເອນຈົນເຂົາຈົນຕາແຈ ແລ້ວຈຶ່ງອ້ອນວອນຕໍ່ພຣະເຈົ້າ, ເມື່ອອ້ອນວອນແລ້ວຍັງເຫັນພວກທະຫານຕາມມາຢູ່ຈຶ່ງພາກັນຈົ່ມຕໍ່ວ່າຕໍ່ຂານໂມເຊ. ນີ້ເປັນຮູບພາບນຶ່ງທີ່ມານຊາຕານບໍ່ປ່ອຍໃຫ້ຄຣິສຕຽນຢູ່ຢ່າງເປັນສຸກ ແຕ່ໃນວັນສຸດທ້າຍຄຣິສຕຽນຈຶ່ງຈະເຂົ້າໃຈໃນການເປັນລູກຂອງພຣະເຈົ້າ.

ການສະເດັດກັບຄືນມາຂອງພຣະເຢຊູຄັ້ງທີສອງແມ່ນແນ່ນອນຕ່າງກັບຄັ້ງທີນຶ່ງ ດັ່ງທີ່ເຮົາຮູ້ແລ້ວວ່າຄັ້ງທີນຶ່ງນັ້ນຊົງລົງມາເກີດນຳນາງມາຣີອາແລະຊົງບັງເກີດທີ່ຮາງຫຍ້າ ອັນໝາຍເຖິງຄວາມຖ່ອມຕົວສຸດຍອດຂອງການເປັນພຣະເຈົ້າ, ສ່ວນຄັ້ງທີສອງນີ້ພຣະອົງຈະສະເດັດມາເຕັມກຽດຕິຍົດຂອງຄວາມເປັນພຣະເຈົ້າດັ່ງທີ່ໂຢຮັນໄດ້ກ່າວໄວ້ຈາກການເຫັນນິມິດວ່າ " *ແລ້ວຂ້າພະເຈົ້າໄດ້ເຫັນສວັນໄຂອອກ ແລະດັ່ງນີ້ ມີມ້າຂາວໂຕນຶ່ງ ພຣະອົງຜູ້ປະທັບເທິງຫລັງມ້ານັ້ນຊົງພຣະນາມວ່າ "ສັດຊື່" ແລະ "ທ່ຽງແທ້" ພຣະອົງຊົງພິພາກສາແລະທຳເສິກດ້ວຍຄວາມຍຸດຕິທັມ* "(ພຣະນິມິດ 19:11). ມີຫລາຍຢ່າງສຳຄັນໃນພຣະທັມຂໍ້ນີ້ຄື;

1. ຊົງປະທັບເທິງຫລັງມ້າຂາວ ອັນມີຄວາມຄວາມໝາຍວ່າ ພຣະອົງຊົງເຮັດສົງຄາມກັບມານຊາຕານ ແຕ່ເຮັດດ້ວຍຄວາມເປັນທັມ, ຫາກເຮົາປຽບທຽບໃສ່ຕອນພຣະອົງຊົງປະທັບເທິງຫລັງລໍເຂົ້າກຸງເຢຣູຊາເລັມນັ້ນແມ່ນພຣະອົງຊົງສະເດັດດ້ວຍສັນຕິສຸກ. ດັ່ງນັ້ນການປະທັບເທິງຫລັງມ້າແລະເທິງຫລັງລໍຈຶ່ງມີຄວາມໝາຍກົງກັນຂ້າມ.

2. <u>ພຣະອົງຊົງສັດຊື່</u> ອັນໝາຍເຖິງຄຳສັນຍາຂອງພຣະອົງທີ່ມີແກ່ຜູ້ທີ່ເຊື່ອນັ້ນຈະເກີດເປັນຈິງ, ດ້ວຍເຫດນີ້ຜູ້ທີ່ເຊື່ອພຣະອົງກໍດີ, ຜູ້ຮັບໃຊ້ພຣະອົງທີ່ພົບກັບຄວາມຫຍຸ້ງຍາກອັນໃດກໍຕາມ ຈະຕ້ອງເປັນຄົນອົດທົນດົນນານ ແລະເຊື່ອໃນຄຳໝັ້ນສັນຍາຂອງພຣະອົງຢູ່ສເມີ.

3. <u>ພຣະອົງຊົງທ່ຽງທັມ</u> ໝາຍເຖິງການຕັດສິນລົງໂທດ ແລະການໃຫ້ລາງວັນນັ້ນຕາມຄວາມເຊື່ອແລະການປະຕິບັດຂອງທຸກຄົນທີ່ໄດ້ບົວລະບັດຮັບໃຊ້ພຣະອົງໃນທຸກຫົນທຸກແຫ່ງ.

ໂຢຮັນໄດ້ເຫັນພຣະເນດ (ດວງຕາ) ຂອງພຣະອົງເປັນເໝືອນແປວໄຟ ອາດຈະມີຄວາມໝາຍວ່າຄວາມຍິ່ງໃຫຍ່ສັກສິດຂອງພຣະອົງ ແລະພຣະອົງພ້ອມທີ່ຈະຕັດສິນພິພາກສາລົງໂທດ. ສ່ວນພຣະສຽນ(ຫົວ) ມີມົງກຸດຫລາຍອັນ ອັນໝາຍເຖິງພຣະອົງຊົງເປັນກະສັດເໜືອກະສັດທັງປວງ (ຂໍ້ 12).

ໂຢຮັນເຫັນພຣະອົງຊົງສວມເສື້ອຄຸມທີ່ຖືກຈຸ່ມດ້ວຍເລືອດນັ້ນພວກສາສນາສາດສັນນິຖານວ່າ ແມ່ນພຣະອົງຊົງຫລັ່ງເລືອດທີ່ໄມ້ກາງແຂນເພື່ອຊໍາຣະລ້າງຄວາມຜິດບາບຂອງຄົນທັງຫລາຍ (ຂໍ້ 13).   ແລະໂຢຮັນຍັງບອກອີກວ່າທ່ານໄດ້ເຫັນຝູງກອງທັບທະການກ້ານຸ່ງຜ້າປ່ານເນື້ອລະອຽດຂາວບໍຣິສຸດ ອັນໝາຍເຖິງຄຣິສຕະຈັກບໍຣິສຸດທີ່ແທ່ຕິດຕາມພຣະອົງໃນການຕັດສິນໂລກ.  ສ່ວນຂໍ້ 16 ມີຄໍາຊຽນທີ່ໜ້າເອິກເສື້ອຄຸມຂອງພຣະອົງວ່າ *" ຈອມເຈົ້າກະສັດ ' ແລະ ຈອມເຈົ້ານາຍ".*  ອັນໝາຍເຖິງອໍານາດສູງສຸດທີ່ບໍ່ມີເຈົ້ານາຍແລະກະສັດໃດໆປຽບທຽບໄດ້ ເພາະພຣະອົງຈະພິພາກສາບັນດາເຈົ້ານາຍແລະກະສັດທຸກອົງໃນໂລກນີ້ດ້ວຍ.

## 2. <u>ພຣະເຢຊູປາບຊາຕານ</u>: (ພຣະນິມິດ 19:17-20:6)

ຕໍ່ໄປໂຢຮັນເຫັນເທວະດາຕົນນຶ່ງປະກາດດ້ວຍສຽງດັງໃຫ້ນົກທັງປວງໃນທ້ອງຟ້າມາໂຮມກັນ  ເພື່ອຈະຮ່ວມກັນກິນລ້ຽງໃຫຍ່ຂອງພຣະເຈົ້າ,  ງານລ້ຽງນົກຄັ້ງນີ້ພວກນົກຈະໄດ້ກິນ  " *ຊີ້ນກະສັດ ຊີ້ນນາຍທະຫານ ຊີ້ນຊາຍສະກັນ ຊີ້ນມ້າແລະຊີ້ນຄົນຂີ່ມ້ານັ້ນ ແລະຊີ້ນປະຊາຊົນ ທັງເສຣີແລະຂ້ອຍຂ້າ ທັງຜູ້ນ້ອຍແລະຜູ້ໃຫຍ່*" ຂໍ້ 18). ແປວ່າ ພວກຕໍ່ສູ້ພຣະເຢຊູ ແລະຕໍ່ສູ້ໄພ່ພົນຂອງພຣະເຢຊູ ເຊັ່ນພວກກະສັດຕ່າງ ໆ,  ພວກນາຍທະຫານທຸກປະເທດ, ພວກຊາຍສະກັນ (ນັກເລງ) , ພ້ອມທັງມ້າທີ່ບັນທຸກຄົນຊົ່ວຮ້າຍ  ກັບຄົນຊົ່ວຮ້າຍນັ່ງຫລັງມ້າ, ຕລອດເຖິງພວກຢູ່ໃນປະເທດເສຣີ ແລະຢູ່ຢ່າງເສຣີ ແລະຂ້ອຍຂ້າທັງນ້ອຍແລະໃຫຍ່ ທີ່ຕໍ່ຕ້ານພຣະເຢຊູ ກັບຕໍ່ຕ້ານໄພ່ພົນຂອງພຣະເຢຊູ ພວກເຂົາຈະຕ້ອງຖືກນົກເຫລົ່ານີ້ກິນເປັນອາຫານລ້ຽງ  ໃນຂະນະທີ່ເຂົາຍັງມີຊີວິດຢູ່ ແຕ່ບໍ່ມີໃຜຊ່ອຍເຂົາໄວ້ໄດ້. ເບິ່ງແມ, ພຣະເຢຊູໄດ້ປາບມານຊາຕານທັງໝົດ  ໃນຂະນະທີ່ເຂົາຍັງຄຶດຕໍ່ສູ້ພຣະອົງຢູ່.

ຕໍ່ມາໂຢຮັນເຫັນພວກສັດຮ້າຍແລະກະສັດຂອງແຜ່ນດິນໂລກຮວບຮວມກອງທັບເພື່ອຕໍ່ສູ້ກັບພຣະເຢຊູ ແຕ່ພວກເຂົາຖືກຈັບ ພ້ອມທັງພວກຜູ້ປະກາດພຣະທັມຈອມປອມ   ທີ່ມັກເຮັດໝາຍສໍາຄັນເພື່ອຫລອກລວງຄົນທັງຫລາຍ ພວກເຂົາໄດ້ຖືກຖິ້ມລົງໃນບຶງໄຟທີ່ເຜົາໄໝ້ຢູ່ດ້ວຍມາດ ສ່ວນພວກທີ່ບໍ່ຖືກຖິ້ມລົງໃສ່ບຶງໄຟກໍຕາຍຍ້ອນພຣະແສງທີ່ອອກຈາກປາກຂອງພຣະເຢຊູ ແລ້ວບັນດານົກກໍກິນຊີ້ນພວກເຂົາ (ຂໍ້ 19-21).

ຊາຕານໜີບໍ່ພົ້ນການພິພາກສາລົງໂທດຖືກກັກຂັງ   ດັ່ງທີ່ໂຢຮັນເຫັນນິມິດເຫັນເທວະດາຕົນນຶ່ງລົງມາຈາກສວັນຖືກຸນແຈຂອງເຫວເລິກ ແລະຖືໂສ້ເສັ້ນໃຫຍ່     "*ໄດ້ຈັບພຍານາກຊຶ່ງເປັນງູແຕ່ດຶກດໍາບັນ ຄືພຍານາກແລະຊາຕານ ແລະໄດ້ຜູກມັດມັນໄວ້ລະຫວ່າງພັນປີແລ້ວຖິ້ມມັນລົງໃນເຫວເລິກ ແລະລັ່ນກະແຈທັງຕີຕາປະທັບໃສ່ ເພື່ອບໍ່ໃຫ້ມັນຫລອກລວງບັນດາປະຊາຊາດອີກຕໍ່ໄປ  ຈົນກ່ວາພັນປີນັ້ນລ່ວງໄປແລ້ວ ພາຍຫລັງນັ້ນຈໍາເປັນຕ້ອງປ່ອຍມັນອອກໄປຊົ່ວຄາວ* " (20:2-3) ແລ້ວໂຢຮັນກໍເຫັນຄົນທີ່ເຊື່ອພຣະເຈົ້າທີ່ຖືກປະຫານໄດ້ຄືນມາມີຊີວິດໃໝ່ແລະຄຸ້ມຄອງຮ່ວມກັບພຣະເຢຊູຄຣິດ ໃນຊ່ວງເວລາພັນປີທີ່ພວກພຍານາກ ແລະຊາຕານຖືກກັກຂັງໃນເຫວເລິກນັ້ນ. (ຂໍ້ 6).

## 3. <u>ຊາຕານຖືກປ່ອຍຫລັງຈາກພັນປີ</u>: (ພຣະນິມິດ 20:7-10)

ໃນພຣະທັມພຣະນິມິດບອກອີກວ່າ ຫລັງຈາກພັນປີແລ້ວພຣະເຢຊູຈະປ່ອຍພວກມັນອອກຈາກຄຸກອີກເທື່ອນຶ່ງ ແລະພວກມັນຈະອອກໄປຫລອກລວງບັນດາປະຊາຊາດທຸກມຸມໂລກ " *ເມື່ອພັນປີນັ້ນລ່ວງໄປແລ້ວ ຊາຕານຈະຖືກປ່ອຍອອກຈາກຄຸກບ່ອນຂັງມັນໄວ້ ມັນຈະອອກໄປຫລອກລວງບັນດາປະຊາຊາດ ທີ່ຢູ່ໃນທິດທັງສີ່ຂອງແຜ່ນດິນໂລກ* " (ຂໍ້ 7-8). ຄັ້ງນີ້ພວກມັນຈະເຮັດເສິກສົງຄາມຄັ້ງຍິ່ງໃຫຍ່ ຕໍ່ສູ້ກັບຄົນຂອງພຣະເຈົ້າ ແລະນະຄອນຂອງພຣະເຈົ້າຄືກຸງເຢຣູຊາເລັມ ແຕ່ພຣະອົງໄດ້ເຮັດໄຟຕົກລົງຈາກຟ້າສວັນໄໝ້ເຜົາຜານຄົນທັງຫລາຍ ສ່ວນພຍາມານກໍຈະຖືກກຳຈັດໃຫ້ໄປຢູ່ບຶງໄຟນະຮົກ ແລະເຂົາຈະຮ້ອງໄຫ້ທົນທຸກທັງກາງເວັນແລະກາງຄືນ " *ສ່ວນພຍາມານທີ່ຫລອກລວງຄົນເຫລົ່ານັ້ນ ກໍຖືກຖິ້ມລົງໃນບຶງໄຟປົນກັບມາດ ຄືບ່ອນທີ່ສັດຮ້າຍແລະຄົນທີ່ປອມຕົວເປັນຜູ້ປະກາດພຣະທັມຢູ່ໃນນັ້ນ ເຂົາຈະຕ້ອງທົນທຸກທໍຣະມານທັງກາງເວັນແລະກາງຄືນຕລອດໄປເປັນນິດ* " (ຂໍ້ 10).

ເມື່ອສຶກສາເບິ່ງແລ້ວວ່າເປັນຫຍັງພຣະເຈົ້າຈຶ່ງປ່ອຍພວກຊາຕານອອກຈາກບ່ອນຄຸມຂັງຫລັງຈາກຄົບພັນປີ? ເຣື່ອງນີ້ບໍ່ມີໃຜເຂົ້າໃຈແນ່ນອນ ແຕ່ພວກສາສນາສາດຍັງສົງສັຍວ່າ ໃນຂະນະພັນປີທີ່ພວກຊາຕານຖືກຂັງນັ້ນພວກຄົນທີ່ເຊື່ອຍັງບໍ່ໄດ້ພິສູດຄວາມເຊື່ອຢ່າງໝັ້ນຄົງເທື່ອ ຫລືຈະຮ່ອນຕອງເອົາແຕ່ຜູ້ເຊື່ອແທ້ໆອອກສາກ່ອນຈຶ່ງປ່ອຍຊາຕານອີກເທື່ອນຶ່ງເພື່ອອອກໄປລົບກວນໃຫ້ເຂົາຫລົງທາງຈາກຄວາມເຊື່ອ ແລະໃນທີ່ສຸດພຣະເຈົ້າຈະຈັບພວກມັນລົງບຶງໄຟນະຮົກ ບໍ່ແມ່ນຈັບຂັງອີກຕໍ່ໄປ.

**<u>ຄຳຖາມ</u>:**

1. ທ່ານຄິດວ່າພຣະເຢຊູຊົງເປັນພຣະເຈົ້າແນວໃດເມື່ອອ່ານພຣະນິມິດ 19 ?

2. ເປັນການງ່າຍບໍ່ທີ່ຈະເວົ້າເຖິງວັນພິພາກສາ? ຕັດສິນລົງໂທດ ແລະໃຫ້ລາງວັນແກ່ຜູ້ເຊື່ອ?

3. ການພິພາກສາເປັນຂ່າວຮ້າຍ ຫລືເປັນຂ່າວດີ?

4. ວັນນັ້ນພຣະເຢຊູສະເດັດມາແນວໃດ? ແຕກຕ່າງກັບຄັ້ງທຳອິດແນວໃດ?

5. ເມື່ອເຮົາທັງຫລາຍຮູ້ວ່າມານຊາຕານຈະຖືກຂັງພັນປີ ແລ້ວຖືກປ່ອຍໃຫ້ຄືນມາຫລອກຫລວງອີກ ທ່ານຄິດວ່າແນວໃດ?

6. ຕອນພວກມານຖືກຈັບຄັ້ງທີນຶ່ງນັ້ນພຣະເຈົ້າເອົາພວກມັນໄປໄວ້ໃສ? ແລະຄັ້ງທີສອງໄປໄວ້ໃສ?

*ທວ*

# ບົດຮຽນທີ 13
# <u>ທ້ອງຟ້າໃໝ່ແລະແຜ່ນດິນໃໝ່</u>

---

**<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້:</u>** ພຣະນິມິດ 21:1-8; 22:1-7, 16-17

**<u>ພູມຫລັງຂອງພຣະຄັມພີ:</u>** ພຣະນິມິດ 21--22

**<u>ຈຸດສໍາຄັນຂອງບົດຮຽນນີ້:</u>** ພຣະເຈົ້າຈະຊົງບັນດານໃຫ້ທຸກຢ່າງເປັນອັນໃໝ່.

**<u>ຄໍາຖາມເພື່ອການຄົ້ນຄວ້າ:</u>** ທຸກຢ່າງຈະເປັນຂອງໃໝ່ໄດ້ແນວໃດ?

**<u>ຈຸດປະສົງຂອງບົດຮຽນ:</u>** ເພື່ອໃຫ້ເຮົາຕັ້ງຄວາມຫວັງຕໍ່ທ້ອງຟ້າໃໝ່ແລະແຜ່ນດິນໃໝ່

## <u>ບົດນໍາ</u>

ບົດຮຽນອາທິດແລ້ວໄດ້ກ່າວເຖິງມານຊາຕານຖືກຈັບຂັງໄວ້ໃນເຫວເລິກເປັນເວລາພັນປີ, ດັ່ງນັ້ນແນ່ນອນໃນລະວ່າງພັນປີນັ້ນຈະມີຄວາມສງົບສຸກເກີດຂຶ້ນໃນແຜ່ນດິນໂລກ ແລະຄົນທີ່ບໍ່ເຊື່ອຈະຕ້ອງຖືກພິພາກສາຕາມການຂອງເຂົາ. ສ່ວນໃນບົດຮຽນວັນນີ້ແມ່ນກ່າວເຖິງທ້ອງຟ້າໃໝ່ແລະແຜ່ນດິນໃໝ່.

## 1. <u>ໃໝ່ທັງໝົດ</u>: (ພຣະນິມິດ 21:1-8)

ເມື່ອນັ້ນໂຢຮັນກ່າວວ່າ " *ຂ້າພະເຈົ້າໄດ້ເຫັນທ້ອງຟ້າໃຫມ່ແລະແຜ່ນດິນໂລກໃຫມ່ ເພາະວ່າທ້ອງຟ້າເດີມແລະແຜ່ນດິນເດີມນັ້ນໄດ້ລ່ວງໄປແລ້ວ ແລະທະເລກໍບໍ່ມີເຫນືອນກັນ* "(ຂໍ້ 1). ແປວ່າທ້ອງຟ້າເກົ່າແລະແຜ່ນດິນເກົ່າໄດ້ຜ່ານພົ້ນໄປ ແຕ່ໂຢຮັນບໍ່ໄດ້ບອກວ່າທ້ອງຟ້າໃໝ່ແລະແຜ່ນດິນໃໝ່ນັ້ນເປັນຮູບແນວໃດ ແຕ່ສິ່ງທີ່ໜ້າພູມໃຈສໍາລັບທຸກຄົນແມ່ນໂລກເກົ່າແຜ່ນດິນເກົ່າຈະຖືກໝົດໄປ ເພາະວ່າໃນໂລກນີ້ມີຫຼາຍຢ່າງທີ່ເຮົາບໍ່ເພິ່ງປາຖນາມັນກໍເກີດມີມາ ແຕ່ໃນໂລກທີ່ຈະມາພາຍໜ້າສິ່ງເກົ່າເນົ່າເໝັນຈະບໍ່ມີອີກຕໍ່ໄປ ທ່ານອາຈານໂປໂລໄດ້ຂຽນໄວ້ວ່າ "*ເພາະວ່າສິ່ງເຫລົ່ານັ້ນຕົກຢູ່ໃຕ້ອຳນາດຂອງອະນິຈັງ ບໍ່ໃຊ່ຕາມຊອບໃຈຂອງມັນເອງ ແຕ່ເປັນໄປຕາມທີ່ພຣະເຈົ້າຊົງໃຫ້ມັກຕົກຢູ່ນັ້ນ ດ້ວຍມີຄວາມຫວັງໃຈວ່າ ສັພສິ່ງເຫລົ່ານັ້ນຈະພົ້ນຈາກອຳນາດຂອງຄວາມເສື່ອມສູນ* "(ໂຣມ 8: 20-21). ຄວາມບາບບໍ່ແມ່ນແຕ່ຄວບຄຸມເຮົາເທົ່ານັ້ນມັນຍັງຄວບຄຸມສິ່ງທີ່ພຣະເຈົ້າຊົງສ້າງເສັງອີກ ຄືໂລກປັດຈຸບັນກໍາລັງຕົກຢູ່ພາຍໃຕ້ຂອງຄວາມຜິດບາບ ແຕ່ເມື່ອພຣະເຈົ້າຊົງລົບລ້າງໂລກແລ້ວຄວາມບາບທີ່ຄອບງໍາຈະຖືກລົບລ້າງໄປດ້ວຍ. ສ່ວນທະເລນັ້ນກໍບໍ່ມີເພາະວ່າ ທ້ອງທະເລເປັນບ່ອນອາສັຍຂອງສັດຮ້າຍ (ອ່ານພຣະນິມິດ 13:1). ສລຸບແລ້ວທ້ອງຟ້າໃໝ່, ແຜ່ນດິນໃໝ່ ທີ່ບໍ່ມີທ້ອງທະເລນັ້ນເຮົາບໍ່ຮູ້ວ່າຈະເປັນຮູບແນວໃດ ແຕ່ພຣະເຈົ້າຊົງເຫັນວ່າຈະຕ້ອງປ່ຽນໃໝ່.

ແຜ່ນດິນໃໝ່ທີ່ໂຢຮັນໄດ້ເຫັນລ່ວງໜ້າແລະກ່າວເປັນພະຍານດັ່ງນີ້; *"ເບິ່ງແມ, ທີ່ສະຖິດຂອງພຣະເຈົ້າກໍຢູ່ກັບມະນຸດແລ້ວ ພຣະອົງຈະຊົງສະຖິດຢູ່ກັບເຂົາ ເຂົາພວກນັ້ນແຫລະ, ຈະເປັນໄພ່ພົນຂອງພຣະອົງ ແລະ*

*ພຣະເຈົ້າເອງຈະປະທັບຢູ່ກັບເຂົາພຣະເຈົ້າຈະຊົງເຊັດນ້ຳຕາທຸກໆຢົດຈາກຕາຂອງເຂົາ ຄວາມຕາຍຈະບໍ່ມີອີກຕໍ່ໄປ ຄວາມໂສກເສົ້າ ການຮ້ອງໄຫ້ ແລະຄວາມເຈັບປວດຈະບໍ່ມີອີກຕໍ່ໄປ ເພາະວ່າສິ່ງທີ່ມີຢູ່ຄາວກ່ອນນັ້ນກໍລ່ວງໄປແລ້ວ* "(ຂໍ້ 3-4). ໝາຍຄວາມວ່າໃນແຜ່ນດິນໃໝ່ນັ້ນບໍ່ມີພຣະວິຫານ ແລະບໍ່ມີການເທສນາອີກເພາະວ່າພຣະເຈົ້າຈະຊົງຢູ່ກັບມະນຸດ ແລະມະນຸດກໍຢູ່ກັບພຣະເຈົ້າ, ໂຢຮັນບອກວ່າພຣະເຈົ້າຈະຊົງເຊັດນ້ຳຕາທຸກຢົດມີຄວາມໝາຍວ່າ ໃນເວລານັ້ນຈະບໍ່ມີການທຸກຍາກລຳບາກຫລືຮ້ອງໄຫ້ແຕ່ຢ່າງໃດ.

ພຣະຊົງກ່າວວ່າພຣະອົງໄດ້ສ້າງສິ່ງທັງປວງຂຶ້ນມາໃໝ່ ແລະຊົງບອກໃຫ້ໂຢຮັນບັນທຶກໄວ້ ເພາະວ່າຖ້ອຍຄຳຂອງພຣະອົງສັດຊື່ແລະທ່ຽງທັມ (ຂໍ້ 5). ແລ້ວພຣະເຈົ້າຈຶ່ງກ່າວກັບໂຢຮັນວ່າ *"ສຳເຣັດແລ້ວ ເຮົານີ້ຄືອາລະຟາແລະໂອເມກາ ເປັນເບື້ອງຕົ້ນແລະເປັນເບື້ອງປາຍ ຜູ້ໃດຫິວນ້ຳ ຝ່າຍເຮົາຈະໃຫ້ຜູ້ນັ້ນດື່ມຈາກນ້ຳພຸແຫ່ງຊີວິດໂດຍບໍ່ຕ້ອງເສັຽຄ່າ* " (ຂໍ້ 6). ແປວ່າສຳເຣັດຕາມແຜນການຂອງອົງພຣະຜູ້ເປັນເຈົ້າ ເພາະວ່າພຣະອົງຊົງເປັນ ອາລະຟາ Alpha (ຕົວໜັງສືແຮກຂອງກຣີກ) ແລະ ໂອເມກາ (ຕົວໜັງສືສຸດທ້າຍຂອງກຣີກ) ຊຶ່ງທັງໝົດແປວ່າພຣະອົງຊົງເປັນຕົ້ນແລະເປັນປາຍ ສ່ວນໃນຕອນກາງນັ້ນພຣະເຈົ້າໄດ້ປ່ອຍໃຫ້ມານຊາຕານຄອບຄອງ ດ້ວຍເຫດນີ້ເຮົາຈຶ່ງເຂົ້າໃຈວ່າ ເວລານີ້ເປັນເວລາເຄິ່ງກາງທີ່ເຕັມໄປດ້ວຍຄວາມຊົ່ວຮ້າຍແລະການກົດຂີ່ຂົ່ມເຫງຄຣິສຕຽນ ດ້ວຍເຫດນີ້ຫາກຜູ້ໃດອົດທົນຈົນເຖິງທີ່ສຸດຊຶ່ງພຣະອົງຊົງປຽບທຽບຜູ້ນັ້ນເປັນຜູ້ຫິວນ້ຳຜູ້ນັ້ນຈະໄດ້ດື່ມນ້ຳພຸແຫ່ງຊີວິດນັ້ນມີຄວາມໝາຍວ່າ " *ຜູ້ໃດມີຊັຍຊະນະ ຜູ້ນັ້ນຈະໄດ້ຮັບສິ່ງເຫລົ່ານີ້ເປັນມໍຣະດົກ ເຮົາຈະເປັນພຣະເຈົ້າຂອງເຂົາ ເຂົານັ້ນແຫລະ, ຈະເປັນບຸດຂອງເຮົາແຕ່ສ່ວນຄົນຂີ້ໂຍ່ຍ ຄົນບໍ່ເຊື່ອຄົນທີ່ເຮັດການຫນ້າກຽດຫນ້າຊັງ ຄົນຄາຕະກັມ ຄົນລ່ວງຜິດຊາຍຍິງ ຄົນໃຊ້ເວດມົນຄາຖາ ຄົນໄຫວ້ພຣະທຽມ ແລະຄົນຂີ້ຕົວະທຸກຄົນນັ້ນ ມໍຣະດົກຂອງເຂົາຈະ* " (ຂໍ້ 7-8).

## 2. <u>ແມ່ນ້ຳ ແລະຕົ້ນໄມ້ແຫ່ງຊີວິດ</u>: (ພຣະນິມິດ 22:1-7)

ແມ່ນ້ຳແຫ່ງຊີວິດທີ່ໂຢຮັນກ່າວເຖິງແມ່ນແມ່ນ້ຳທີ່ຜ່ານໃຈກາງຂອງເຢຣູຊາເລັມໃໝ່ ແລະເປັນແມ່ນ້ຳທີ່ສົດໃສເໝືອນແກ້ວທີ່ໄຫລອອກມາຈາກຣາຊບັນລັງຂອງພຣະເຈົ້າ. ຄັ້ງນຶ່ງພຣະເຢຊູໄດ້ກ່າວເຖິງແມ່ນ້ຳແຫ່ງຊີວິດກັບຍິງສາວຊາວຊາມາເຣັຽວ່າ *"ແຕ່ຜູ້ໄດ້ດື່ມນ້ຳຊຶ່ງເຮົາຈະປະທານໃຫ້ນັ້ນ ຈະບໍ່ຢາກອີກຕໍ່ໄປຈັກເທື່ອ ນ້ຳຊຶ່ງເຮົາຈະປະທານໃຫ້ນັ້ນຈະກາຍເປັນນ້ຳພຸໃນຕົວຜູ້ນັ້ນ ແລະຈະພຸ່ງຂຶ້ນເຖິງຊີວິດອັນຕູອດໄປເປັນນິດ* " (ໂຢຮັນ 4:14). ແປວ່າຜູ້ໃດໄດ້ດື່ມນ້ຳທີ່ພຣະເຢຊູຊົງໂຜດປະທານໃຫ້ນັ້ນຈະບໍ່ຫິວນ້ຳແລະຍັງຈະໄດ້ຊີວິດອັນຕລອດໄປເປັນນິດອີກ. ແຜນການຂອງພຣະເຈົ້າຄືໃຫ້ມະນຸດມີຊີວິດອັນຕລອດໄປເປັນນິດຮ່ວມກັບພຣະອົງ, ດ້ວຍເຫດນີ້ແຫລະພຣະອົງຈຶ່ງຊົງກ່າວວ່າສຳເຣັດແລ້ວໃນ (ພຣະນິມິດ 21:5). ທີ່ແຄມແມ່ນ້ຳແຫ່ງຊີວິດຍັງມີຕົ້ນໄມ້ແຫ່ງຊີວິດທີ່ປູກຢູ່ແຄມແມ່ນ້ຳແຫ່ງຊີວິດ " *ຢູ່ຮິມແມ່ນ້ຳທັງສອງຟາກມີຕົ້ນໄມ້ແຫ່ງຊີວິດຊຶ່ງເກີດຜົນສິບສອງຊະນິດ ເກີດຜົນທຸກເດືອນ ແລະໃບຕົ້ນນັ້ນສຳລັບປົວບັນດາປະຊາຊາດໃຫ້ດີ* " (ຂໍ້ 2).

ໃນພຣະຄັມພີປະຖົມມະການ 3 ໄດ້ກ່າວເຖິງຕົ້ນໄມ້ທີ່ຢູ່ກາງສວນນັ້ນພຣະເຈົ້າຊົງຫ້າມບໍ່ໃຫ້ກິນ ແຕ່ອາດາມແລະເອວາບໍ່ເຊື່ອຟັງຄຳຫ້າມຂອງພຣະເຈົ້າ ເຂົາກັບໄປເຊື່ອຟັງມານຊາຕານຈຶ່ງກິນໝາກໄມ້ຈາກຕົ້ນທີ່ພຣະເຈົ້າຊົງຫ້າມນັ້ນ ເມື່ອກິນແລ້ວເຂົາກໍກາຍເປັນຄົນບາບທີ່ເລືອກບໍ່ເຊື່ອຟັງພຣະເຈົ້າ ແຕ່ກັບຟັງຄວາມຊາຕານ.

ເມື່ອນັ້ນພຣະເຈົ້າໄດ້ຊົງຂັບໄລ່ເຂົາອອກຈາກສວນ ແລະແຕ່ງຕັ້ງເທວະດາເພື່ອປົກປ້ອງບໍ່ໃຫ້ຜູ້ໃດເຂົ້າໄປໃກ້ຕົ້ນໄມ້ນັ້ນອີກ (ອ່ານປະຖົມມະການ 3:24). ແລ້ວຈາກນັ້ນມາກໍບໍ່ມີໃຜເຫັນຫລືເຂົ້າໃກ້ຕົ້ນໄມ້ນັ້ນໄດ້ ຈົນຕົກມາໃນຄາວສຸດທ້າຍນີ້ພຣະເຈົ້າຈຶ່ງໃຫ້ມີຕົ້ນໄມ້ແຫ່ງຊີວິດເກີດຂຶ້ນທີ່ແຄມແມ່ນ້ຳແຫ່ງຊີວິດ ດັ່ງທີ່ເຮົາໄດ້ຮຽນຮູ້ໃນວັນນີ້. ຕົ້ນໄມ້ແຫ່ງຊີວິດນີ້ເປັນຕົ້ນໄມ້ພິເສດເພາະວ່າ 1. *ເກີດຜົນສິບສອງຊະນິດ 2. ເກີດຜົນທຸກເດືອນ ແລະ 3. ໃບຕົ້ນນັ້ນສຳລັບປົວບັນດາປະຊາຊາດໃຫ້ດີ.* ຍິ່ງໄປກວ່ານັ້ນ ໂຢຮັນຍັງບອກອີກວ່າ " *ຈະບໍ່ມີສິ່ງໃດຖືກຊົງປ້ອຍດ່າອີກຕໍ່ໄປ ແຕ່ພຣະຣາຊບັນລັງຂອງພຣະເຈົ້າແລະຂອງພຣະເມສານ້ອຍຈະຕັ້ງຢູ່ທີ່ນັ້ນ ແລະບັນດາຂ້ອຍໃຊ້ຂອງພຣະອົງຈະບົວລະບັດພຣະອົງ* " (ຂໍ້ 3). ເພາະໃນສມັຍຂອງອາດາມແລະເອວານັ້ນພວກເຂົາຖືກສາບແຊ່ງທີ່ບໍ່ເຊື່ອຟັງ.

ໃນນະຄອນນັ້ນບໍ່ຈຳເປັນຕ້ອງໃຕ້ໄຟສຳລັບກາງຄືນ ແລະບໍ່ຕ້ອງການແສງພຣະອາທິດໃນເວລາກາງເວັນ ເພາະພຣະຣັສມີຂອງພຣະເຈົ້າຊົງເປັນແສງສວ່າງທັງກາງເວັນແລະການຄືນ ຍິ່ງໄປກວ່ານັ້ນພຣະເຈົ້າຈະຄຸ້ມຄອງເຂົາຕລອດໄປເປັນນິດ. " *ກາງຄືນຈະບໍ່ມີອີກຕໍ່ໄປ ເຂົາບໍ່ຕ້ອງການແສງໂຄມໄຟຫລືແສງອາທິດ ເພາະວ່າອົງພຣະຜູ້ເປັນເຈົ້າຈະຊົງສ່ອງສວ່າງໃສ່ເຂົາ ແລະເຂົາຈະໄດ້ຄຸ້ມຄອງຢູ່ຕລອດໄປເປັນນິດ* " (ຂໍ້ 5). ເມື່ອພຣະເຈົ້າຊົງເປັນແສງສວ່າງທັງກາງເວັນແລະກາງຄືນ ແລະຊົງຄຸ້ມຄອງແລ້ວຈະບໍ່ມີໃຜຫຍັງໃນທາງມືດຫລືເຮັດການຊົ່ວອີກຕໍ່ໄປ ເພາະທຸກຄົນຈະຮູ້ດີຮູ້ຊົ່ວແລ້ວຈະບໍ່ຫລົງໄປເຮັດການມືດອີກຕໍ່ໄປ, ຍິ່ງໄປກວ່ານັ້ນພຣະເຈົ້າຈະຊົງຄຸ້ມຄອງຈາກໂຣກພັຍໄຂ້ເຈັບ, ພຣະເຈົ້າຈະຊົງຄຸ້ມຄອງບໍ່ໃຫ້ຜູ້ໃດມາບຽດບຽນລົບກວນຢ່າງເດັດຂາດ. ສ່ວນໃນເວລານີ້ເຮົາທັງຫລາຍຈຳເປັນຕ້ອງອົດທົນໄປສາກ່ອນ, ຈະອີດໄປຮອດວັນໃດນັ້ນເຮົາບໍ່ຮູ້ ແຕ່ເຮົາຮູ້ແນ່ວ່າພຣະເຢຊູຈະສະເດັດມາຮັບເອົາພວກເຮົາໄປຢູ່ກັບພຣະອົງ. ໂຢຮັນບອກວ່າພຣະເຢຊູຈະສະເດັດມາໄວໆນີ້ "*ເບິ່ງແມ, ເຮົາຈະມາໃນໄວໆນີ້ ເຮົາຈະເອົາບຳເໜັດຂອງເຮົາມານຳ ເພື່ອຕອບແທນການປະຕິບັດຂອງທຸກຄົນ* " (ຂໍ້ 12).

## 3. <u>ເຊື້ອເຊີນໃຫ້ເຂົາມາ</u>: (ພຣະນິມິດ 22:16-17)

"*ຝ່າຍເຮົາຄື ເຢຊູ ເຮົາໄດ້ໃຊ້ເທວະດາຂອງເຮົາໄປເປັນພຍານ ເພື່ອສະແດງເຫດການເຫລົ່ານີ້ແກ່ທ່ານສຳລັບຄຣິສຕະຈັກທັງຫລາຍ ເຮົານີ້ເປັນຮາກເຄົ້າແລະຫນໍ່ເຊື້ອຂອງດາວິດ ເປັນດາວເພັດໃສຮຸ່ງເຮືອງ*"(ຂໍ້ 16). ພຣະເຢຊູຊົງໃຊ້ເທວະດາຂອງພຣະອົງອອກໄປເປັນພະຍານ ເພາະວ່າພຣະເຢຊູຊົງເປັນພຣະເຈົ້າຂອງເທວະດາທັງປວງ, ພຣະເຢຊູຊົງໃຊ້ເທວະດາໄປບອກຄຣິສຕະຈັກທັງເຈັດທີ່ເປັນຕົວແທນຂອງຄຣິສຕະຈັກທັງຫຼາຍໃຫ້ໄດ້ຮັບຊາບທົ່ວເຖິງກັນວ່າພຣະອົງຊົງເປັນເຊື້ອສາຍຂອງດາວິດກະສັດຂອງອິສຣາເອນ. ພຣະເຈົ້າຊົງສັນຍາວ່າພຣະຜູ້ໂຜດໃຫ້ພົ້ນນັ້ນຈະມາຈາກເຊື້ອສາຍຂອງດາວິດນັ້ນແມ່ນພຣະເຢຊູເອງ, ພຣະເຢຊູຍັງບອກອີກວ່າພຣະອົງຊົງເປັນດາວເພັດ ອັນມີຄວາມໝາຍວ່າ ການສະເດັດມາຂອງພຣະອົງເປັນຄືດວງດາວທີ່ສ່ອງແສງໃນໃຈຂອງເຂົາໃຫ້ຮຸ່ງແຈ້ງ ແລະດາວເພັດນີ້ຈະສ່ອງແສງໃນຍາມເຊົ້າ ເພື່ອໃຫ້ມະນຸດສາມາດເດີນທາງໄປທຳມາຫາກິນແຕ່ເຊົ້າມືດໂດຍມີພຣະອົງຊົງເປັນແສງສວ່າງແກ່ເຂົາ. ໃນພຣະທັມ 2 ເປໂຕກ່າວວ່າ " *ສັນນັ້ນພວກເຮົາຍຶດຖືຄຳທຳນວາຍຢ່າງແນ່ນອນກວ່າເກົ່າ ຈະເປັນການດີຖ້າທ່ານທັງຫລາຍຈະຖືຕາມຄຳທຳນວາຍນັ້ນ ເພາະຄຳນັ້ນເປັນເໝືອນໂຄມທີ່ສ່ອງສວ່າງໃນບ່ອນມືດ ຈົນເຖິງວັນຮຸ່ງເຊົ້າແລະດາວເພັດຈະສ່ອງ*

*ຂຶ້ນໃນໃຈຂອງພວກທ່ານ* " (2 ເປໂຕ 1:19). ພຣະເຢຊູໄດ້ບອກຢ່າງແຈ່ມແຈ້ງວ່າພຣະອົງຊົງເປັນດາວເພັດທີ່ພວກຜູ້ທຳນວາຍໄດ້ກ່າວໄວ້ແລ້ວໃນພຣະທັມຈົດບັນຊີວ່າ *" ຜູ້ໄດ້ຍິນຖ້ອຍຄຳຂອງພຣະຜູ້ເປັນເຈົ້າ ແລະຍອມຮັບເອົາສະຕິປັນຍາຂອງຜູ້ສູງສຸດ ຂ້າພະເຈົ້າໄດ້ເຫັນນິມິດທີ່ມາຈາກພຣະຜູ້ເປັນເຈົ້າອົງຍິ່ງໃຫຍ່ ດ້ວຍສາຍຕາທີ່ມີແວວອັນປະກາຍ ຂ້າພະເຈົ້າມອງເຫັນອະນາຄົດຂ້າງຫນ້າ ແລະເຫັນຊົນຊາດອິສຣາເອນ ຈະມີເຈົ້າຊີວິດອັນຮຸ່ງເຮືອງ ເໝືອນດາວເກີດຂຶ້ນມາໃນຖ້າມກາງຊົນຊາດນີ້ ຜູ້ນີ້ຈະເປັນເໝືອນເຄື່ອງໝາຍແຫ່ງອຳນາດທີ່ມາຈາກອິສຣາເອນ ພຣະອົງຈະທຸບຕີພວກຜູ້ນຳຂອງໂມອາບ ຈະທຳລາຍພວກທີ່ຈອງຫອງ ແລະຮ້າຍກາດທຸກຄົນ* " (ຈົດບັນຊີ 24:16-17).

"*ຝ່າຍພຣະວິນຍານແລະເຈົ້າສາວຊົງກ່າວວ່າ, "ເຊີນມາ" ໃຫ້ຜູ້ໄດ້ຍິນນັ້ນທູນວ່າ, "ເຊີນມາ" ໃຫ້ຜູ້ຫິວນ້ຳເຂົ້າມາ ຜູ້ໃດມີໃຈປາຖນາກໍໃຫ້ຜູ້ນັ້ນມາຮັບນ້ຳສຳລັບຊີວິດໂດຍບໍ່ຕ້ອງເສັຽຄ່າ* " (ພຣະນິມິດ 22:17). ພຣະວິນຍານຂອງພຣະເຈົ້າແລະເຈົ້າສາວ (ຄຣິສຕະຈັກ) ທີ່ມີສາຍານາມວ່າເຈົ້າສາວ ໄດ້ເຊື້ອເຊີນຄົນທັງຫລາຍໂດຍບໍ່ເລືອກເຊື້ອຊາດຫລືຜິວພັນໃດໆໃຫ້ເຂົ້າມາຍອມຮັບເອົາພຣະອົງໃຫ້ເປັນພຣະຜູ້ຊ່ອຍໃຫ້ພົ້ນ, ການເຊີນນີ້ໄດ້ປຽບທຽບໃສ່ຄົນຫິວນ້ຳໃນຖ້າມກາງເຮັດການອັນໜັກໜ່ວງ ຫລືເດີນທາງໃນປ່າທະເລຊາຍທີ່ມີຄວາມອຶດຫິວນ້ຳ ຊຶ່ງນ້ຳນັ້ນຈະຊ່ອຍຊີວິດຂອງລາວໄວ້ໄດ້ຫາກລາວໄດ້ດື່ມ ແຕ່ນ້ຳທີ່ພຣະອົງຊົງກ່າວນີ້ຍິ່ງປະເສີດກວ່ານ້ຳທັມມະດາ ເພາະເປັນນ້ຳແຫ່ງຊີວິດ ແລະຜູ້ທີ່ຈະດື່ມນ້ຳນີ້ຈະບໍ່ເສັຽຄ່າໃດໆ.

**<u>ຄຳຖາມ</u>**:

1. ເຮົາຈະຮູ້ໄດ້ຢ່າງໃດວ່າຄຳສັນຍາຂອງພຣະເຈົ້ານັ້ນຈະເປັນຈິງ?

2. ທ່ານຈະລໍຖ້າທ້ອງຟ້າໃໝ່ແລະແຜ່ນດິນໃໝ່ແນວໃດ?

3. ທ່ານຫວັງຫຍັງຈາກທ້ອງຟ້າໃໝ່ແລະແຜ່ນດິນໃໝ່?

4. ທ່ານໄດ້ຕອບຄຳເຊີນຂອງພຣະເຈົ້າຢ່າງໃດ?

*ຫວ*